ທາງ ກູ ສາຍ...

ຮຽບຮຽງໂດຍ: ອາຈາຣຍ໌ ໄພທູຣຍ໌ ອິນທວົງສ໌

ປວັຕຕິໜັງສືພາສາລາວ

ຄຳປຣາຣົກ

ຫລັງຈາກ ຜຂ ໄດ້ແປລພຣະໄຕຣປິຎກໃຫ້ເປັນພາສາລາວ ໂດຍໃຊ້ພາສາລາວ ໔໗ ໂຕສຳເຣັຈແລ້ວໄດ້ນຳໄປໃຫ້ ຍາທ່ານ ດຣ. ພຣະມຫາວັນດີ ກັນຕະສີໂລ (ວົງຫາເຄນ)ເບິ່ງ ຍາທ່ານໄດ້ເມຕຕາ-ກຣຸນາໃຫ້ທັສນະ ແລະ ກ່າວເຕືອນວ່າ ***"ຫາກພວກເຮົາບໍ່ໃຊ້ໂຕອັກສຣທີ່ສົມບູຣຕ໌ຕາມພາສາປາລີແລ້ວ ອັຕຖ໌ຂອງພຣະພຸທສພົຈນ໌ ຈະບໍ່ກົງກັບຄວາມໝາຍເລີຍ!"*** ຜຂ ຈຶ່ງໄດ້ເລີ້ມຄົ້ນຫາຫາໂຕອັກສຣພາສາລາວ ທີ່ໃຊ້ໃນຄຓະພຣະສົງຄ໌ລາວທີ່ໃຊ້ກັນໃນປີ ໑໙໖໕ ແລະໂຊຄດີໄດ້ພົບກັບທ່ານ ດຣ. ຄຳພາ ສີດາວົງສ໌, ທ່ານ ດຣ. ຄຳພາໄດ້ໃຫ້ການຊ່ວຍເຫລືອ ແນະນຳແລະຍັງອອກແບບໂຕພິມພ໌ ໃຫ້ຫລາຍໆ ເທື່ອ ຍັງບໍ່ພໍ ທ່ານຍັງຄອຍໃຫ້ກຳລັງໃຈໃນຍາມທີ່ ຜຂ ມີຄວາມທໍ້ຖອຍ ເພາະການຂຽນຕາມຫລັກໄວຍາກຣຕ໌ລາວ ນັ້ນມີຄວາມຍຸ້ງຍາກພໍສົມຄວຣ ເພາະບໍ່ມີແບບຢ່າງທີ່ສົມບູຣຕ໌ ຜຂ ຈຶ່ງເລີ້ມຕົ້ນສຶກສາຢ່າງຈິງຈັງ ດ້ວຍເຫຕຸຜົລຫລາຍປະການ:

☞ ເພາະຕ້ອງການເຜີຍແຜ່ພຣະທັມມ໌ຄຳສອນຂອງພຣະສາສດາ "ພຣະພຸທສພົຈນ໌ ຫຼື ພຣະພຸທສວຈນ" ໃຫ້ຖືກຕ້ອງ

☞ ແປລ-ພິມພ໌ພຣະໄຕຣປິຎກເປັນພາສາລາວ ເພື່ອໃຫ້ເປັນສົມບັຕິຂອງພຸທສາສນິກຊົນລາວ

☞ ເພື່ອໃຫ້ເປັນແບບຢ່າງທີ່ມາຕຖານໃນພາສາລາວ-*ປາລີໃຫ້ຊົນຮຸ່ນຫລັງ* ***ເພາະຫາກ ຜຂ ບໍ່ເຮັດ ບໍ່ຂຽນ!*** ຍ້ອນວ່າ ຜຂ *ຮູ້ທັ້ງພາສາລາວ-ພາສາໄທຍ໌ດີ* ຕລອດເຖິງ *ຮູ້ການໃຊ້ຄອມພິວເຕີຣ໌ດີ* *ເຄີຍຖາມໂຕເອງສເມີວ່າ* ***"ແລ້ວໃຜຈະເຮັດ!"***

☞ *ເຄີຍເຫັນຄຳປາຣົກຂອງພຣະສັງຄຣາຊລາວ* (ສົມເດັຈພຣະຍອດແກ້ວ ພຸທສຊິໂນຣົສສະກົລມຫາສັງຄປາໂມກຂ໌) ກ່າວວ່າຢາກເຫັນພຣະໄຕຣປິຎກເປັນພາສາລາວ ໃນປຶ້ມອນຸສຣຕ໌ "**ມູລມໍຣດົກຊົນຊາຕິອ້າຍລາວ**" *ນີ້ເປັນກຳລັງສຳຄັນ!*

ດ້ວຍເຫຕຸຜົລນີ້ ຜຂ (ອາຈາຣຍ໌ໄພທູຣຍ໌ ອິນທວົງສ໌) ຈຶ່ງໄດ້ນຳພາສາລາວທີ່ທາງຄຓະສົງຄ໌ລາວເຮົາເຄີຍໃຊ້ມາຂຽນປຶ້ມທາງດ້ານທັມມະ ມາເບິ່ງຄວາມແຕກຕ່າງພາສາລາວ-ໄທຍ໌ພໍເປັນສັງເຂປ:

ວິວັฒນາການໂຕໜັງສືໄທຍ໌

ໂຕໜັງສືໄທຍ໌ຂອງພໍ່ຂຸນຣາມຄໍາແຫງ

ก	ข	ค	ฆ	ง
ka	kha	ga	gha	ṅa
จ	ฉ	ช	ฌ	ญ
ca	cha	ja	jha	ña
ฏ	ฐ	ฑ	ฒ	ณ
ṭa	ṭha	ḍa	ḍha	ṇa
ต	ถ	ท	ธ	น
ta	tha	da	dha	na
ป	ผ	พ	ภ	ม
pa	pha	ba	bha	ma

ย	ร	ล	ว	ส	ห	ฬ	อ	◌ํ
ya	ra	la	va	sa	ha	ḷa	*initial* a	-ṁ

◌ะ	◌า	◌ิ	◌ี	◌ุ	◌ู	เ◌	โ◌	◌ฺ
final a	ā	i	ī	u	ū	ē	ō	*no vowel*

ໂຕຫນັງສືລາວເຮົາທີ່ໃຊ້ໃນກຸ່ມຄຓະສົງຆ໌ລາວ ໂດຍສະເພາະ

ກ	ຂ	ຄ	ຆ	ງ
ka	kha	ga	gha*	ṅa
ຈ	ຉ	ຊ	ຌ	ຎ
ca	cha*	ja	jha*	ña*
ຏ	ຐ	ຑ	ຒ	ຓ
ṭa*	ṭha*	ḍa*	ḍha*	ṇa*
ຕ	ຖ	ທ	ຘ	ນ
ta	tha	da	dha*	na
ປ	ຜ	ພ	ຠ	ມ
pa	pha	ba	bha*	ma

ຍ	ຣ	ລ	ວ	ສ	ຫ	ຬ	ອ	◌ໍ
ya	ra	la	va	sa	ha	ḷa*	*initial* a	-ṁ

◌ະ	◌າ	◌ິ	◌ີ	◌ຸ	◌ູ	ເ◌	ໂ◌	◌຺
final a	ā	i	ī	u	ū	ē	ō	*no vowel*

Lao	Thai	Lao	Thai
ຆ	ฆ	ຒ	ฒ
ຉ	ฉ	ຓ	ณ
ຌ	ช ฌ	ຘ	ธ
ຎ	ญ	ຠ	ภ
ຏ	ฎ ฏ	ຨ	ศ
ຐ	ฐ	ຩ	ษ
ຑ	ฑ	ຬ	ฬ

Alif Silpachai

ຂໍທ່ານຈົ່ງພຍາຍາມຮຽນອ່ານເພື່ອສນອງເຈຕນາຣົມຕ໌ຂອງທາງຄຓະສົງຆ໌ລາວ, ຫລວງປູ່ ດຣ. ພຣະມຫາວັນດີ ຠັນຕສີໂລ ແລະ ຍາທ່ານ ດຣ. ພຣະມຫາສີງທອງ ບັຣລືສັກດິ໌ ທີ່ໃຫ້ຄວາມເປັນຫ່ວງໃນກາຣເຜີຍແຜ່ພຣະຘັມມ໌ຄຳສອນຂອງພຣະຨາສດາ.

ທາງ ໗ ສາຍ

ໂດຍ: ພຣະທັມມສິຣິຣາຊມຫາມຸນີ (ໂຊດົກ ຌາຕສິທ຺ທິ ປ.ຘ. ໙) ...ຮຽບຮຽງໂດຍ: ອ. ໄພທູຣຍ໌ ອິນທວົງສ໌

ບົທຄວາມທຳອິດທີ່ຕັ້ງໃຈນຳສເນີນີ້ມຸ່ງຫມາຍໃຫ້ເຫັນກັຍການວຽນເກີດວຽນຕາຍໃນສັງສາຣວັຝນີ້ ອັນນຳໄປສູ່ຄວາມສລົດສັງເວຊ ຄວາມເບື່ອຫນ່າຍ ແລະຄວາມປັຕຖນາທາງສງົບແຫ່ງທີ່ສຸດ ຄື ຫຍຸດເກີດຫຍຸດຕາຍ ຖືເປັນ

ສັມມາທິຕຖິ (ຄວາມເຫັນຊອບ) ເຊິ່ງເປັນຮາກຖານສຳຄັນທີ່ຈະສຶກສາປຝິບັຕິທັມມ໌ ແຫ່ງອົງຄ໌ພຣະສັມມາສັມພຸທທເຈົ້າສືບເນື່ອງຍິ່ງໆ ຂຶ້ນໄປ

ຄຳວ່າ "**ທາງ**" ແປລວ່າ ເຮັດໃຫ້ຕ້ຽນ ເຮັດໃຫ້ສະອາດ ຖ້າເປັນຊື່ຂອງທັມມະ ແປລວ່າ ທັມມະເປັນເຄື່ອງດຳເນີນໄປສູ່ພຣະນິພພານ ທັມມະອັນບຸຄຄົລຜູ້ຕ້ອງການພຣະນິພພານຄວຣສແວງຫາ ແລະແປລວ່າທັມມະທີ່ຝ່າກິເລສໄປກໍໄດ້

ທາງນັ້ນ ຈຳແນກອອກເປັນ ໔ ຄື:

1. **ປກຕິມຄຸໂຄ:** ທາງປົກຕິ ໄດ້ແກ່ ທາງບົກ ທາງນ້ຳ ທາງອາກາສ ເປັນຕົ້ນ ສຳຣັບຄົນແລະສັຕວ໌ຍ່າງ
2. **ປຝິປທານຄຸໂຄ:** ທາງປຝິບັຕິ ໄດ້ແກ່ບຸຌບາປທີ່ຄົນເຮັດ ສຳຣັບ ກາຍ ວາຈາ ໃຈ ຍ່າງ

ທາງປຝິບັຕິນັ້ນ ຈຳແນກເປັນ ໗ ສາຍ ຄື

1. ທາງໄປນຣົກ	ໄດ້ແກ່	ໂທສະ
2. ທາງໄປເປຕແລະອສຸຣກາຍ	ໄດ້ແກ່	ໂລກະ
3. ທາງໄປສັຕວ໌ດຽຣຈານ	ໄດ້ແກ່	ໂມຫະ
4. ທາງໄປມນຸຍ໌	ໄດ້ແກ່	ສີລ ໕ ແລະກຸສົລກັມມບົຖ ໑໐
5. ທາງໄປສວັຣຄ໌	ໄດ້ແກ່	ມຫາກຸສົລ ໘
6. ທາງໄປພຣົຫ໌ມໂລກ	ໄດ້ແກ່	ສມຖກັມມຖານ ອ່ານວ່າ "ສະມະຖະກັມມະຖານ"
7. ທາງໄປນິພພານ	ໄດ້ແກ່	ວິປັສສນາກັມມຖານ

ບົທທີ່ ໑ ທາງໄປນຣົກ

ນຣົກ ແປລວ່າ ປຣະເທສທີ່ປຣາສຈາກຄວາມສຸຂ ມີແຕ່ຄວາມທຸກຂ໌ ມີຢູ່ ໔໕໗ ຂຸມ ຂຸມໃຫຍ່ມີ 9 ຂຸມ ນັບຕັ້ງແຕ່ສັຍຊີວນຣົກ ກາຣສຸຕຕນຣົກເປັນຕົ້ນ ໄປຈົນເຖິງໂລກັນຕນຣົກ ຈາກນຣົກໃຫຍ່ແຕ່ລະຂຸມ ອອກໄປໃນທິສທັ້ງ ໔ ແຕ່ລະທິສມີອຸສສຸທນຣົກທິສລະ ໔ ຂຸມ ຣວມເປັນ ໑໒໘ ຂຸມ ຈາກອຸສສຸທນຣົກອອກໄປອີກມີຍົມໂລກີຍ ນຣົກຢູ່ທິສລະ ໑໐ ຂຸມ ຣວມເປັນ ໓໒໐ ຂຸມ ສ່ວນຂຸມທີ່ເລິກທີ່ສຸດ ຊື່ ວ່າ ໂລກັນຕນຣົກ ຢູ່ທີ່ສຸດຂອງໂລກ ຣວມທັ້ງຫມົດເປັນ ໔໕໗ ຂຸມ ຕັ້ງຮຽງກັນຢູ່ໃຕ້ພື້ນດິນ ເຊິ່ງຫນາໄດ້ ໖໔໐,໐໐໐ **ໂຍຊນ໌**[1]

ເຫຕຸທີ່ນຳໄປຕົກນຣົກສ່ວນຫລາຍ ໄດ້ແກ່**ໂທສະ** ດັ່ງມີຫລັກຖານຮັບຮອງໄວ້ວ່າ

"ໂທເສນ ຫີ ຈຕຸ ທຂຊາຕິຕາຍ ໂທສສທີສ່ ນິຣຢ໌ ອຸປປຊຊນຸຕິ"

ຂໍຮັບຮອງວ່າເປັນຈິງຢ່າງນັ້ນ ເພາະໂທສະເປັນເຫຕຸ ສັຕວ໌ທັ້ງຫລາຍຈຶ່ງໄປຕົກນຣົກ ເຊິ່ງມີລັກຂະນະເຊັ່ນດຽວກັນກັບໂທສະ ເພາະໂທສະມີຊາຕິຫຍາບຄາຍ

ຜູ້ພິສູຈນ໌ນຣົກ - ສວັຣຄ໌ໄດ້

ຜູ້ທີ່ຈະພິສູຈນ໌ນຣົກສວັຣຄ໌ໄດ້ນັ້ນ ຕ້ອງມີເຄື່ອງມືຄື ປັນຍາ ປັນຍານັ້ນມີຢູ່ ໓ ປຣະການ ຄື ສຸຕມຍປັນຍາ ໑ ຈິນຕາມຍປັນຍາ ໑ ກາວນາມຍປັນຍາ ໑

1. **ສຸຕມຍປັນຍາ** ປັນຍາເກີດຈາກການຟັງ ການສຶກສາຮ່ຳຮຽນ ການທ່ອງຈຳ ການອ່ານຕຳຣັບຕຳຣາໂດຍທົ່ວໆ ໄປ ປັນຍາຂັ້ນນີ້ພິສູຈນ໌ນຣົກສວັຣຄ໌ບໍ່ໄດ້
2. **ຈິນຕາມຍປັນຍາ** ປັນຍາເກີດຈາກການຄິດ ເຊັ່ນ ຄິດເຮັດຣົຖຍົນຕ໌ ຣົຖໄຟ ຍົນ ອາວຸລຍຸທສກັຕຫ໌ ອະພອນໂລ່ຈຣວດ ເປັນຕົ້ນ ປັນຍາຂັ້ນນີ້ກໍພິສູຈນ໌ນຣົກສວັຣຄ໌ບໍ່ໄດ້ *ປັນຍາ ໒ ຂັ້ນນີ້ ເປັນປັນຍາຫາເຂົ້າກິນ ຫາເງິນ*

[1] **ໂຍຊນ໌** ໑ ໂຍຊນ໌ ຈຶ່ງມີຣະຍະທຽບເທົ່າກັບ ໑໖,໐໐໐ ເມຕຣ໌ ຫຼື ໑໖ ກິໂລເມຕຣ໌

ຫາທອງ ຫາເຂົ້າຫາຂອງ ເພື່ອມາບຳບັດທຸກຂ໌ບຳຣຸງສຸຂຂອງຕົວແລະຄອບຄົວ ປຣະເທສຊາຕິ ເປັນເຫມືອນດາບ ໔ ຄົມ ຖ້າໃຊ້ຖືກກໍໃຫ້ຄຸດ ຖ້າໃຊ້ຜິດກໍໃຫ້ໂທສຫລາຍ ເຊັ່ນ ຣະເບີດປຣມາຕູພຽງລູກດຽວ ສາມາຖຈະເຮັດໃຫ້ຄົນຕາຍເປັນຈຳນວນ ໕-໗ ຫມື່ນ ເອີ້ນວ່າ ມີຄຸຕອນັນຕ໌ ມີໂທສມຫັນຕ໌

3. **ກາວນາມຍປັญญາ** ປັญญาເກີດຈາກການຈະເຣີນວິປັສສນາກັມມຖານ ມີຢູ່ ໑໖ ຂັ້ນ ຂັ້ນທີ່ ໑໔ ຄື ມັຄຄญาณ ຕ້ອງປຜິບັຕິເຖິງຂັ້ນນີ້ ຈຶ່ງຈະສາມາຖພິສູຈນ໌ນຣົກສວັຣຄ໌ໄດ້ ເພາະກິເລສຄືຕົວມິຈฉາທິຜຖິ ໔ ຕົວ ຊຶ່ງເອີ້ນວ່າ ທິຜຖິຄຕສັມປຍຸຕຕຈິຕ ໔ ຂາດໄປຢ່າງບໍ່ມີວັນຈະຄືນມາໄດ້ອີກ ຄືເປັນສມຸຈເฉທປຫານ ລະໄດ້ໂດຍເດັດຂາດ ກັບ ວິຈິກິຈฉາ ຕົວທີ່ພາໃຫ້ສົງສັຍລັງເລໃຈວ່າ ນຣົກມີແທ້ບໍ່ ສວັຣຄ໌ມີແທ້ບໍ່ ກໍໄດ້ຂາດໄປພ້ອມກັນເມື່ອກິເລສທັ້ງ ໕ ຕົວນີ້ຂາດໄປຈາກຂັນธສັນດານແລ້ວຈຶ່ງຈະພິສູຈນ໌ໄດ້ ແລະຈຶ່ງຈະເຫມົດສົງສັຍ ດັ່ງມີຫລັກฐານປາກົຜຢູ່ ໃນພຣະໄຕຣປິຜົກເຫລັ້ມທີ່ ໔໕ ຫນ້າທີ່ ໔໑ ພຣະພຸທธອົງຄ໌ໄດ້ທຣົງຕັ້ງປັญหาຖາມເອງແລະຕອບເອງວ່າ

ໂກ ອິມំ ປຖວិ ວິເຈສ្សតិ ຍមໂລកញ្ច ອិមំ សទេវកំ ດັ່ງນີ້ເປັນຕົ້ນ

ໃຈຄວາມວ່າ "ໃຜຈະພິສູຈນ໌ແຜ່ນດິນຄືອັຕກາພນີ້ໄດ້ ໃຜຈະພິສູຈນ໌ຍមໂລກຄືອບາຍກູມິທັ້ງ ໔ ໄດ້ ແລະໃຜ ຈະພິສູຈນ໌**มนุสส**[2]ໂລກນີ້ ພ້ອມທັ້ງເທວໂລກໄດ້" ດັ່ງນີ້ ພຣະພຸທธອົງຄ໌ໄດ້ທຣົງຕອບເອງວ່າ

ເສໂຂ ປຖວិ ວິເຈສ្សតិ ຍមໂລកញ្ច ອិមំ សទេវកំ ດັ່ງນີ້ເປັນຕົ້ນ

ຄວາມວ່າ "ພຣະເສຂບຸຄຄົລ ៧ ຈຳພວກ ນັບຕັ້ງແຕ່ພຣະອຣິຍບຸຄຄົລຜູ້ຕັ້ງຢູ່ໃນໂສດາປັຕຕິມັຄຄ໌ ເປັນຕົ້ນໄປ ຈຶ່ງຈະພິສູຈນ໌ອບາຍກູມິ ໔ ມີນຣົກ ເປັນຕົ້ນໄດ້" ດັ່ງນີ້ ພຣະອັຕຖກຖາຈາຣຍ໌ຜູ້ຮູ້ພຸທธາທິບາຍໄດ້ແກ້ໄວ້ວ່າ

ໂສຕາປຕຸຕິມគ្គផ្ទំ ອາທិ កត្វា ຢາវ ອຣហត្តមគ្គផ្ទា សត្តវិធោ ເສໂຂ

ພຣະເສຂບຸຄຄົລ ៧ ຈຳພວກ ນັບຕັ້ງແຕ່ພຣະອຣິຍບຸຄຄົລຜູ້ຕັ້ງຢູ່ໃນໂສດາປັຕຕິມັຄຄ໌ເປັນຕົ້ນໄປ ຈົນເຖິງ ພຣະອຣິຍບຸຄຄົລຜູ້ຕັ້ງຢູ່ໃນອຣຫັຕຕມັຄຄ໌ເປັນທີ່ສຸດ ຈຶ່ງຈະສາມາຖພິສູຈນ໌ ອບາຍກູມິ ມนุสສກູມິ ແລະເທວກູມິໄດ້

ຄຳວ່າ ໂສດາປັຕຕິມັຄຄ໌ ກໍໄດ້ແກ່ ມັຄຄญาณ ຄື ญาณທີ່ ໑໔ ນັ້ນເອງ ເມື່ອນັກປຜິບັຕິธັມມ໌ໄດ້ຈະ ເຣີນວິປັສສນາກັມມຖານ ຜ່ານญาณທີ່ ໑ ມາໂດຍລຳດັບໆ ຈົນເຖິງญาณທີ່ ໑໔ ນີ້ ຈຶ່ງຈະມີຄວາມສາມາຖມີປັญญา ພິສູຈນ໌ນຣົກສວັຣຄ໌ ມັຄຄ໌ຜົລນິພພານໄດ້ ໂດຍຈະບໍ່ມີຄວາມສົງສັຍແມ້ແຕ່ນ້ອຍດຽວ

---

[2] **มนุสส** ອ່ານວ່າ ມະ-ນຸດ (ສກ. ມນຸຊ຺ຍ, ປ. ມນຸສ຺ສ) ນ. ແປລວ່າ ຄົນ ເຮົາຈັກຂຽນແບບສັນສກິຕໄດ້ວ່າ "**ມນຸษย໌**"

ບົດ ໔ ທາງໄປເປຕແລະອສຸຣກາຍ

ເປຕ ໄດ້ແກ່ຜູ້ທີ່ຕາຍໄປແລ້ວ ໄປເກີດໃນອບາຍກູມິທີ່ ໔ ຄື ກູມິຂອງເປຕ ເປຕນັ້ນມີ ໑໔ ຈຳພວກ ມີຕັຓຫາຊິຕາເປຕ ປຣທຕູປຊີວີເປຕ ເປັນຕົ້ນ ບາງຈຳພວກປາກເທົ່າຮູເຂັມກໍມີ ບາງຈຳພວກມືເທົ່າໃບຕາລກໍມີ ບາງຈຳພວກ ຖືກໄຟເຜົາຢູ່ເປັນ**ນິຈ**[3]ກໍມີ ບາງຈຳພວກມີໄຟພຸ່ງອອກມາຈາກປາກກໍມີ ບາງຈຳພວກອາສັຍທານທີ່ບຸຄຄົລອື່ນອຸທິສໃຫ້ກໍມີ ເປຕນັ້ນຊາວບ້ານທັ້ງຫລາຍມັກນິຍົມເອີ້ນກັນວ່າ "ຜີຫລອກ"

ອສຸຣກາຍ ມີຮ່າງກາຍໃຫຍ່ໂຕກວ່າເປຕ ແຕ່ເປັນ**ພັນຣ໌**[4]ດຽວກັນ ເຊັ່ນ ຫມາລາວ ກັບຫມາຝຣັ່ງຕ່າງກໍເປັນຫມາເຫມືອນກັນແຕ່ຕົວໂຕກວ່າກັນເທົ່ານັ້ນ ມັກຢູ່ໃນທີ່ຫນາວເຢັນ ເຊັ່ນ ກູ ປ່າໄມ້ດົງດິບ ທະເລສາປ ເປັນຕົ້ນ

ເຫຕຸທີ່ນຳໄປເກີດເປັນເປຕແລະອສຸຣກາຍ ສ່ວນຫລາຍໄດ້ແກ່ໂລກະທຣືຕັຓຫາ ດັ່ງມີຫລັກຖານຈາກອັຕຖກຖາອັຕຖສາລີນີ ຮັບຮອງໄວ້ວ່າ **ເຢກຸຢ຺ເຢນ ຫິ ສຕ຺ຕາ ຕຓ຺ຫາຢ ເປຕ຺ຕິວິສຢ໌ ອຸປປຊ຺ຊນ຺ຕິ** ຈິງຢູ່ ສ່ວນຫລາຍສັຕວ໌ທັ້ງຫລາຍຕາຍໄປເກີດເປັນເປຕແລະອສຸຣກາຍ ກໍເພາະໂລກຕັຓຫາ

ຕົວຢ່າງໃນອດີຕ ເຊັ່ນ ເປຕຍາຕິພຣະເຈົ້າພິມພິສາຣ ໂລກກິນຂອງທີ່ຈະນຳໄປຖວາຍພຣະ ຕາຍແລ້ວໄດ້ໄປເກີດເປັນເປຕພາກັນທົນທຸກຂ໌ທໍຣມານຢູ່ຕັ້ງດົນ ຫາກໍຈະໄດ້ຮັບສ່ວນບຸນຈາກພຣະເຈົ້າພິມພິສາຣໃນສາສນາຂອງພຣະພຸທລເຈົ້າຂອງເຮົານີ້ແຫລະ

ຕົວຢ່າງໃນປັຈຈຸບັນ ມີຕຣະກູລນຶ່ງຢູ່ໃນການຄອີສານມີບຸຕຣ໌ ໑໐ ຄົນ ບັດນີ້ບຸຕຣ໌ເຫລົ່ານັ້ນຍັງມີຊີວິຕຢູ່ທຸກຄົນ ພໍ່ກັບລູກເຂຍກຳລັງພາກັນປຸກເຮືອນຢູ່ ໔ ຫລັງ ຫລັງທີ່ ໑ ແລ້ວໄປແລ້ວ ຫລັງທີ່ ໔ ມຸງຫລັງຄາແລ້ວ ກຳລັງເລີ້ມປູກະດານ ບັງເອີນກິນຫມາກຄໍ້ສົ້ມໃນຕອນທ່ຽງ ເຮັດໃຫ້ເຈັບທ້ອງ ຖ່າຍບໍ່ຫຍຸດກາຍໃນ ៦ ວັນກໍຕາຍ ພໍຕາຍແລ້ວປາກົຜວ່າມາຫລອກລູກຫລານຕ່າງໆ ນານາ ເຊັ່ນ ຖິ້ມຂອງລົງມາຈາກຂື່ບ້ານ ມີສຽງດັ່ງຕຶງຕັງໆ ເຫມືອນກັບສຽງຄົນຖິ້ມຂອງລົງມາແທ້ໆ ແຕ່ເບິ່ງແລ້ວຂອງບໍ່ມີ ລູກເຂຍເປັນຄົນຄ້າຂາຍ ໄປຊື້ຫນັງງົວມາຕາກໄວ້ທີ່ເລົ້າເຂົ້າ ຍາມມື້ຄືນເດືອນແຈ້ງ ສຽງພັບຫນັງດັ່ງເຫມືອນກັນກັບສຽງຄົນພັບ ຫມາເຫົ່າເຫມີດຄືນ ເຫົ່າຫອນ ເຮັດໃຫ້ຂົນລຸກໄປເຫມີດໂຕ

---

[3] **ນິຈ** ວ. ສເມີໄປ, ສມ່ຳສເມີ, ມັກໃຊ້ວ່າເປັນນິຈໃນຄຳກາຫາປາລີ (ປ. ນິຈ຺ຈ, ສ. ນິຕ຺ຍ)

[4] **ພັນຣ໌** ນ. ເຊື້ອສາຍ, ຫມູ່ຄູ່, ວົງສ໌ວານ, ພີ່ນ້ອງ, ເຊື້ອ, ເຫລົ່າກໍ (ປ. ນຄ. ພນ຺ຣຸ)

ຂໍ້ນີ້ກໍເປັນຕົວຢ່າງຊີໃຫ້ເຫັນໄດ້ຢ່າງຄັດແນ່ແລ້ວວ່າ ຕາຍດ້ວຍຄວາມຫ່ວງບ້ານ ຫ່ວງລູກ ຫ່ວງຫລານ ຈໍານໍາພາໃຫ້ມາເກີດເປັນເປຕຫຣືອສຸຣກາຍ

ອີກຕົວຢ່າງນຶ່ງ ເມື່ອ ພ.ສ. ໒໕໐໐ ຢູ່ໃນກຸງເທພຯ ນີ້ແຫລະ ທ່ານຜູ້ນຶ່ງມີໃຈເລື່ອມໃສຢາກຈະເຂົ້າປຜິບັຕິວິປັສສນາ ແຕ່ບັງເອີນມາລົ້ມເຈັບລົງເສັຽກ່ອນ ກ່ອນຈະຕາຍໃຈກໍຫ່ວງບ້ານ ຫ່ວງລູກ ຫ່ວງຫລານແລະຫ່ວງຊັພຍ໌ສົມບັຕິເພາະຍັງ ບໍ່ໄດ້ຈັດການເຮັດພິນັຍກັມມ໌ແບ່ງໃຫ້ລູກໃຫ້ຫລານ ເມື່ອຕາຍແລ້ວ ໄດ້ມາຫລອກລູກໆຫລານໆ ນານາປຣະການ ເຊັ່ນ ສະແດງໃຫ້ເຫັນເປັນຮູປຮ່າງແຫ້ງໆ ແດ່ ເປີດຜ້າອອກມາແດ່ ເອົາມືມາລູບຫົວແດ່ຢ່າງອ້ອມໄປອ້ອມມາເຫມີດຄືນແດ່ ຕົວຢ່າງນີ້ກໍພໍຊີ້ໃຫ້ເຫັນອີກຂໍ້ນຶ່ງວ່າ ເພາະໂລກຄືຄວາມຫ່ວງສົມບັຕິເປັນເຫຕຸເວລາຕາຍຈຶ່ງໄດ້ມາເກີດເປັນເປຕມາຫລອກ ລູກຫລານ

ບົທ ໓ ທາງໄປສັຕວ໌ດຽຣຈານ

ສັຕວ໌ດຽຣຈານ ມີຫລາຍ ເຊັ່ນ ຊ້າງ ມ້າ ງົວ ຄວາຍ ຫມູ ຫມາ ເປັດ ໄກ່ ນົກ ຫນູ ກຸ້ງ ຫອຍ ປູ ປາ ເປັນຕົ້ນ ສ່ວນຫລາຍໂມຫະຄືຄວາມຫລົງເປັນຜູ້ນໍາໄປເກີດ ດັ່ງມີຫລັກຖານປາກົຜຢູ່ໃນອັຕຖກຖາຮັບຮອງໄວ້ວ່າ

ໂມເຫນ ຫິ ນິຈຸຈໍ ສມຸມຸຣ໌ຫໍ ຕິຣຈຸຈານໂຢນິ ອຸປປຊຊນຸຕິ

ຈິງຢູ່ ສັຕວ໌ທັ້ງຫລາຍຕາຍໄປເກີດເປັນສັຕວ໌ດຽຣຈານ ເຊິ່ງມີຄວາມລຸ່ມຫລົງຢູ່ເປັນນິຈ ກໍເພາະໂມຫະເປັນຕົວການນໍາໄປດັ່ງນີ້

ຕົວຢ່າງໃນອດີຕ ເຊັ່ນ ນາຍໂກຕຸຫລິກະ ເດີນທາງມາແຕ່ໄກລ ມີຄວາມລໍາບາກແລະອິດເມື່ອຍແທ້ວ່າ ພ້ອມທັ້ງຫິວອາຫາຣໃນການເດີນທາງໄກລກັນດາຣດ້ວຍ ເມື່ອມາເຖິງຫມູ່ບ້ານແຫ່ງນຶ່ງໃນວັນນັ້ນມີການສູ່ຂວັນງົວນົມຂອງນາຍໂຄບາລ ໃນເຮືອນຂອງນາຍໂຄບາລ ພຣະປັຈເຈກພຸທຘເຈົ້າອົງຄ໌ນຶ່ງມາຈັນເປັນນິຕຍ໌ ໃນວັນນັ້ນເມື່ອນາຍໂຄບາລນິມົນຕ໌ພຣະປັຈເຈກພຸທຘເຈົ້າຈັນແລ້ວແລ້ວ ຈຶ່ງໄດ້ທໍາການມົງຄຸລເຂົ້າປາຍາສເຂົາຈັດແຈງໄວຢ່າງຫລວງຫລາຍ ເມື່ອນາຍໂຄບາລເຫັນສອງສາມີກັຣຍານັ້ນມາ ຈຶ່ງທໍາ7ວາມສົງເຄາະຫ໌ ໂດຍສັ່ງໃຫ້ນໍາເຂົ້າປາຍາສກັບເນຍໃສຈໍານວນຫລາຍໄປໃຫ້

ກັຣຍາຈຶ່ງກ່າວກັບສາມີວ່າ ເມື່ອອ້າຍມີຊີວິຕຢູ່ ນ້ອງກໍຊື່ວ່າມີຊີວິຕຢູ່ ອ້າຍມີຫິວມາດົນແລ້ວ ຂໍອ້າຍຈົ່ງຮັບກິນຕາມຄວາມຕ້ອງການເຖີດ ນາງຈຶ່ງວາງເຂົ້າປາຍາສໄວ້ຕໍ່ຫນ້າຂອງສາມີພ້ອມກັບ**ສັປປິ**[5] ສ່ວນນາງກໍບໍຣິໂພຄສັປປິບໍ່ດີ ແຕ່ນ້ອຍນຶ່ງ

---

[5] **ສັປປີ** (ມຄ. ສປຸປິ) ນ. ເນຍໃສ, ນໍ້າມັນເນຍ

ເທົ່ານັ້ນ ນາຍໂກຕຸຫລິກະບໍຣິໂភຄຫລາຍເກີນໄປເພາະຫິວມາຕັ້ງ ໗-໘ ວັນ ນາຍໂຄບາລເມື່ອໃຫ້ເຂົ້າປາຍາສແກ່ສອງຜົວເມັຽແລ້ວ ຕົນເອງຈຶ່ງເລີ້ມຈະບໍຣິໂភຄ ນາຍໂກຕຸຫລິກະນັ່ງເບິ່ງເຂົາຢູ່ ເຫັນກ້ອນເຂົ້າປາຍາສທີ່ນາຍໂຄບາລປັ້ນໃຫ້ແກ່ນາງ**[ສຸນັຂ]**[6]ຕົວນັ້ນເຊິ່ງນອນຢູ່ກ້ອງຕັ່ງ ຈຶ່ງຄິດວ່າ ນາງສຸນັຂຕົວນີ້ມີບຸນ ຈຶ່ງໄດ້**[ໂភຊນະ]**[7] ເຫັນປານນີ້ເນືອງນິຕຍ໌ ຕົກກາງຄືນນາຍໂກຕຸຫລິກະນັ້ນບໍ່ສາມາຖຈະຍັງເຂົ້າປາຍາສໃຫ້ຍ່ອຍໄດ້ ຈຶ່ງທຳກາລະຄືຕາຍ ແລ້ວໄດ້ໄປບັງເກີດໃນທ້ອງແຫ່ງນາງສຸນັຂຕົວນັ້ນ ເມື່ອກັຣຍາເຂົາເຜົາສົພສາມີແລ້ວ ກໍໄດ້ທຳການຮັບຈ້າງຢູ່ໃນບ້ານນັ້ນເອງ ໄດ້ເຂົ້າສາຣມາທະນານຶ່ງ ຫຸງຕັກບາຕຣ໌ຖວາຍປັຈເຈກພຸທສເຈົ້າແລ້ວອຸທິສສ່ວນບຸນໃຫ້ສາມີວ່າ "**ກມ຺ເຕ ທາສສ຺ສ ໂວ ປາປ຺ຕາຕິ**" ທ່ານຂ້ານ້ອຍຂໍກຸສົລຜົລບຸນອັນນີ້ຈົ່ງເຖິງແກ່ທາສຂອງທ່ານເຖີດ ດັ່ງນີ້ ນາງຄິດວ່າ ພຣະຜູ້ເປັນເຈົ້າມາທີ່ນີ້ເປັນປະຈຳໄທຍລັມມ໌ຂອງເຮົາຈະມີຫຣືບໍ່ມີກໍຕາມຊ່າງ ເຮົາໄຫວ້ທ່ານຢູ່ ທຳຄວາມຂອບຂວາຍຢູ່ ຍັງໃຈໃຫ້ເລື່ອມໃສຢູ່ທຸກໆ ວັນຈະໄດ້ບຸນຫລາຍ ຈຶ່ງໄດ້ທຳການຮັບຈ້າງຢູ່ໃນບ້ານນັ້ນເອງ

ເຣື່ອງສຸນັຂໃຈບຸນ ສ້າງມຫາກຸສົລ ຕາຍໄດ້ໄປເກີດໃນສວັຣຄ໌

ກາຍໃນ ໕-໗ ເດືອນ ນາງສຸນັຂຕົວນັ້ນກໍອອກລູກມາຕົວນຶ່ງ ນາຍໂຄບາລໄດ້ໃຫ້ນ້ຳນົມຂອງງົວນົມຕົວນຶ່ງແກ່ລູກສຸນັຂນັ້ນ ບໍ່ນານປານໃດນັກລູກສຸນັຂຕົວນັ້ນກໍໃຫຍ່ ເມື່ອພຣະປັຈເຈກພຸທສເຈົ້າມາສັນທ່ານກໍໃຫ້ກ້ອນເຂົ້າແກ່ລູກສຸນັຂຕົວນັ້ນທຸກໆ ວັນ ເພາະໄດ້ອາສັຍກ້ອນເຂົ້າຂອງທ່ານ ລູກສຸນັຂຕົວນັ້ນຈຶ່ງບໍ່ມີຄວາມຮັກໃຄ່ໃນທ່ານຫລາຍ ເມື່ອນາຍໂຄບາລໄປສູ່ທີ່ບຳຣຸງຂອງພຣະປັຈເຈກພຸທສເຈົ້າວັນລະ ໒ ເວລາ ກໍໄດ້ພາສຸນັຂຕົວນັ້ນໄປດ້ວຍທຸກເທື່ອ ເວລາເດີນທາງຜ່ານປ່າກໍເອົາໄມ້ຕີທີ່ພຸ່ມໄມ້ແລະພື້ນດິນໃນທີ່ເຊິ່ງມີສັຕວ໌ຮ້າຍໃນຣະຫວ່າງທາງສົ່ງສຽງວ່າ "ສຸ ສຸ ສຸ" ໓ ເທື່ອເພື່ອຍັງສັຕວ໌ຮ້າຍໃຫ້ໜີໄປ ມື້ນຶ່ງນາຍໂຄບາລໄດ້ກ່າວກັບພຣະປັຈເຈກພຸທສເຈົ້າວ່າ "ພຣະຄຸຕເຈົ້າຜູ້ຈະເຣີນ ຖ້າຍາມໃດຂ້ານ້ອຍບໍ່ມີເວລາວ່າງ ເມື່ອນັ້ນຂ້ານ້ອຍຈະສົ່ງສຸນັຂຕົວນີ້ມາ" ມື້ໃດບໍ່ມີເວລາວ່າງ ເຂົາກໍສົ່ງສຸນັຂຕົວນັ້ນໄປວ່າ "ພໍ່ຈົ່ງໄປຈົ່ງນຳພຣະຜູ້ເປັນເຈົ້າມາ" ດ້ວຍຄຳພຽງເທົ່ານີ້ ສຸນັຂນັ້ນກໍແລ່ນໄປເຖິງທີ່ເຊິ່ງນາຍຕີພຸ່ມໄມ້ແລະພື້ນດິນ ກໍເຫົ່າຂຶ້ນ ໓ ເທື່ອແລ້ວກໍໄປຈົນເຖິງທີ່ຢູ່ຂອງພຣະປັຈເຈກພຸທສເຈົ້າ ເຂົ້າໄປຍັງ**[ປັຕຕ]**[8]ສາລານັ່ງຢູ່ແລ້ວເຖິງປະຕູປັຕຕສາລາຈຶ່ງເຫົ່າຂຶ້ນ ໓ ເທື່ອ ເພື່ອໃຫ້ທ່ານຮູ້ວ່າຕົນມາແລ້ວ ຈຶ່ງໄດ້ນອນໝອບຢູ່ ໓ ສ່ວນຂ້າງນຶ່ງ ເມື່ອພຣະປັຈເຈກພຸທສເຈົ້າໄດ້ອອກເດີນທາງໄປ ສຸນັຂກໍຍ່າງເຫົ່າໄປຂ້າງໜ້າໆ ເມື່ອຈະທົດລອງສຸນັຂ ທ່ານຈຶ່ງທຳທ່າຫລົງທາງຍ່າງໄປທາງອື່ນເສັຽສຸນັຂຈຶ່ງຟ້າວໄປຢືນເຫົ່າຂວາງໜ້າຂອງທ່ານໄວ້ ແລ້ວນຳທ່ານເມືອມາທາງເດີມອີກ

---

[6] **ສຸນັຂ** (ມຄ. ສຸນຂ) ນ. ໝາ

[7] **ໂភຊນະ** (ມຄ. ໂភຊນ) ນ. ການກິນ, ການກິນເຂົ້າ, ອາຫານ

[8] **ປັຕຕ** (ສ. ປຣ຺ຕ, ປ. ປຕ຺ຕ) ນ. ປີກ, ໜັງສື, ໃບໄມ້

ຕໍ່ມາວັນນຶ່ງທ່ານຢ່າງໄປສູ່ທາງອື່ນເຖິງແມ້ສຸນັຂນັ້ນຈະໄປຢືນຂວາງຢູ່ຂ້າງຫນ້າກໍບໍ່ເມືອ ເອົາຕີນກະຕຸ້ນສຸນັຂແລ້ວກໍຍ່າງໄປ ສຸນັຂຮູ້ວ່າທ່ານຈະບໍ່ເມືອຈຶ່ງຟ້າວໄປຄາບຜ້ານຸ່ງດຶງມາ ນຳທ່ານມາສູ່ທາງທີ່ຕົນປະສົງຄ໌ອີກ ສຸນັຂນັ້ນໄດ້ຍັງຄວາມຮັກອັນມີກຳລັງໃຫ້ເກີດຂຶ້ນແລ້ວໃນພຣະປັຈເຈກພຸທຂເຈົ້ານັ້ນ ດ້ວຍປະການຢ່າງນີ້

ຕໍ່ມາຈີວຣຂອງທ່ານເກົ່າແລ້ວ ນາຍໂຄບາລຈຶ່ງໄດ້ຖວາຍຜ້າສຳຣັບເຮັດຈີວຣແກ່ທ່ານ ທ່ານຈຶ່ງໄດ້ອຳລາໂຍມໄປສູ່ສຖານທີ່ສະບາຍແລ້ວຈະເຮັດຈີວຣ ສຸນັຂໄດ້ຢືນຟັງຄຳຂອງຄົນທັ້ງ ໔ ນັ້ນຢູ່ເຫມືອນກັນ ທ່ານໄດ້ເຫາະຂຶ້ນສູ່**ເວຫາສ**[9] ບ່າຍຫນ້າຕໍ່ເຂົາຣຄັນຣມາທນ໌ ສຸນັຂຫລ່ຽວເບິ່ງທ່ານຜູ້ກຳລັງເຫາະໄປທາງອາກາສຢືນເຫົ່າຫອນຢູ່ ເມື່ອທ່ານລັບສາຍຕາໄປຫົວໃຈກໍແຕກທຳລາຍລົງ ຄືຕາຍຢູ່ ໗ ທີ່ນັ້ນເອງ

ສຸນັຂສ້າງມຫາກຸສົລໄດ້ໄປເກີດເປັນໂພສກເທພບຸຕຣ໌ (ອ່ານວ່າ ໂພສະກະເທພະບຸດ) ໃນສວັຣຄ໌ຊັ້ນດາວດຶງສ໌ໄດສເວີຍສົມບັຕິໃຫຍ່ ກໍເພາະເປັນສັຕວ໌ມີຄວາມເຫັນຖືກ ແລະບໍ່ຄິດໂກງ ດ້ວຍເຫຕຸດັ່ງນີ້

ຊື່ວ່າສັຕວ໌ດິຣັຈຈານທັ້ງຫລາຍນັ້ນ ເປັນສັຕວ໌ທີ່ມີຊາຕິຊື່ຕົງ ບໍ່ຄິດໂກງ ສ່ວນມນຸຍ໌ນັ້ນໃຈຄິດແນວນຶ່ງ ປາກເວົ້າແນວນຶ່ງ ບໍ່ຕົງກັນ ເພາະເຫຕຸນັ້ນແລ ນາຍເປສສະ ຜູ້ເປັນບຸຕຣ໌ຂອງນາຍ**ຄວານ**[10]ຊ້າງຈຶ່ງໄດ້ກ່າວໄວ້ ເຊິ່ງປາກົຍຢູ່ໃນພຣະໄຕຣປິຜົກເຫລັ້ມທີ່ ໑໓ ຫນ້າທີ່ ໔ ວ່າ

ຄຫາຕາຣຸຫຕ໌ ການຸເຕ ອຫິຫ໌ ມນຸສ຺ສາ ອຸຕຸຕານກຣຸເຫຕ໌ ການຸເຕ ຢຫິຫ໌ ປສໂວ

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ແທ້ຈິງ ຂັນຣປັລຈກຄືມນຸຍ໌ນີ້ **ຣົກຊັຜ**[11]ໆ ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ແທ້ຈິງຂັນຣປັລຈກ ຄືສັຕວ໌ຂອງລ້ຽງນີ້ຕື້ນ ດັ່ງນີ້

ທ່ານສາທຸຊົນຜູ້ໃຈບຸຸຍທັ້ງຫລາຍຖ້າເຮົາໄປຕົກນຣົກກໍດີ ໄປເກີດເປັນເປຕແລະອສຸຣກາຍກໍດີ ໄປເກີດເປັນສັຕວ໌ດິຣັຈຈານກໍດີ ເຮົາບໍ່ມີໂອກາສທີ່ຈະສ້າງຄວາມດີເຊັ່ນກັບມນຸຍ໌ ຈະຮັກສາສິລຈະໄປຖວາຍທານຈະໄປໄຫວ້ພຣະສູຕມົນຕ໌ຈະໄປຈະເຣີນສມຖກັມມຖານແລະວິປັສສນາກັມມຖານກໍບໍ່ໄດ້ເປັນ ເພາະກັມມ໌ຫນັກ ກັມມ໌ມີກຳລັງແຮງປິດບັງໄວ້ ຈຶ່ງເປັນເຫຕຸໃຫ້ສັພສັຕວ໌ພາກັນວົນວຽນຢູ່ໃນຫ່ວງກິເລສແລະກອງທຸກຂ໌ຢ່າງເປັນຕາຢ້ານທີ່ສຸດ ເພາະດັ່ງນັ້ນຂໍມວລພຸທຂບໍຣິສັທຈຶ່ງພາກັນເຮັດບຸຍໃຫ້ຫລາຍໆ ເຖິດໃນເມື່ອເຮົາມີໂອກາສ ຈະໄດ້ບໍ່ພລາດທ່າເສັຽທີໄປເກີດໃນທຸຄຕິ ເຮົາຈະໄດ້ເປັນຜູ້ມີໂຊຄດີໄປບັງເກີດໃນສຸຄຕິໂລກສວັຣຄ໌ ອັນປຣາສຈາກທຸກຂ໌ກັຍຕ່າງໆ ເລີ້ມຕັ້ງຕົ້ນຊີວິຕຕັ້ງແຕ່ບັດນີ້ເປັນຕົ້ນໄປເຖີດເພາະຍັງບໍ່ສວຍ ຍັງຈະມີໂອກາສປິດປະຕູອບາຍໄດ້ຢູ່ ຈະບໍ່ໄດ້ເກີດເສັຽໃຈໃນກາຍຫລັງ ແລະຈະບໍ່ໄດ້ເຖິງບາງອໍ້

---

[9] **ເວຫາສ** (ມຄ. ເວຫາສ, ສ. ວິຫາຍສ) ນ. ອາກາສ, ຟ້າ

[10] **ຄວານ** (ໄທຍ ຄວານ) ນ. ຜູ້ບັງຄັບຊ້າງ, ຜູ້ລ້ຽງຝຶກຊ້າງ

[11] **ຣົກຊັຜ** ອ່ານວ່າ ຣົກ-ຊັດ ນ. ຣົກຄືປ່າ, ປ່າຕຶບ, ຣົກຍຸ້ງ

ເພາະບໍ່ດົນ ເຮົາກໍຈະພາກັນເມືອບ້ານເກົ່າຢູ່ ແລະຂະນະນີ້ບາງຄົນກໍເປັນຄືຈັ່ງຕົ້ນໄມ້ໃກ້ຝັ່ງຢູ່ແລ້ວ ຣໍຖ້າຄວາມຕາຍຢູ່ທຸກຄືນວັນ ຮີບຖໍ່ຮີບພາຍເຖີດ ຕະເວັນຈະສວຍ ຕລາດຈະວາຍ ສາຍບົວຈະເນົ່າ ສົມເດັຈພໍ່ກໍໄດ້ທຣົງແນະນຳສັ່ງສອນໄວ້ແລ້ວເຊິ່ງປຣາກົຜຢູ່ໃນພຣະໄຕຣປີຜົກ ເຫລັ້ມທີ່ ໒໕ ຫນ້າທີ່ ໓໗໘ ວ່າ

ອຸຜຖຫຖ ນິສີທຖ ໂກ ອຕຸໂຖ ສຸປິເຕນ ໂວ

ອຕຸຣານໍ ຫິ ກາ ນິທຸທາ ສລຸລວິທຸສານຣຸປຸປຕໍ

ອຸຜຸຖຫຖ ນິສີທຖ ທຊຸຫໍ ສິກຸຂຖ ສນຸຕິຢາ

ເຊີນທ່ານທັ້ງຫລາຍລຸກຂຶ້ນເຖີດ ເຊີນທ່ານທັ້ງຫລາຍນັ່ງເຖີດ ທ່ານຈະນອນອນຣຝັນເອົາປຣະໂຍຊນ໌ຫຍັງໃນເມື່ອຊາວໂລກທັ້ງຫລາຍກຳລັງຖືກລູກສຣ ຄືຄວາມຍາກຈົນຊົ່ວຮ້າຍສຽບແທງປົ່ນປີ້ຢູ່ແບບນີ້ ເຊີນທ່ານທັ້ງຫລາຍລຸກຂຶ້ນເຖີດ ທ່ານຈະນອນອນຫລັບທັບສິຫລືຢູ່ເຮັດຫຍັງລະ ທ່ານທັ້ງຫລາຍຈົ່ງຟ້າວລົງມືສຶກສາປຜິບັຕິເພື່ອສັນຕິສຸຂເສັ່ງບັດນີ້ເຖີດ ດັ່ງນີ້

ບົທ ໔ ທາງໄປມນຸຫຍ໌

ມນຸຫຍ໌ ຕາມຄວາມຫມາຍທາງກາສາບາລີມີໄດ້ຫລາຍນັຍ ເຊັ່ນ ຜູ້ມີໃຈສູງ, ຜູ້ຮູ້ສິ່ງທີ່ເປັນປຣະໂຍຊນ໌ແລະສິ່ງທີ່ບໍ່ເປັນປຣະໂຍຊນ໌, ຜູ້ເປັນເຫລົ່າກໍຂອງຜູ້ຮູ້, ຜູ້ທີ່ຈະໄດ້ເກີດມາເປັນມນຸຫຍ໌ ກໍເພາະໄດ້ອາສັຍທັມມ໌ຂອງມນຸຫຍ໌ ໄດ້ແກ່ສີລ ໕ ແລະກຸສົລກັມມບົຖ ໑໐ ເປັນຄຸຕທັມມ໌ທີ່ຈະເສກສັຣປັ້ນປຸງໃຫ້ເປັນຄົນ ຖ້າໃຜຂາດທັມມ໌ທັ້ງ ໔ ຫມວດນີ້ ກໍຈັດວ່າເປັນຄົນບໍ່ເຕັມຄົນ ເຫຕຸດັ່ງນີ້ທ່ານຈຶ່ງແບ່ງມນຸຫຍ໌ອອກເປັນ ໕ ຈຳພວກຄື:

໑. ມນຸສຸສເນຣຍິໂກ: ມນຸຫຍ໌ສັຕວ໌ນຣົກ

ໄດ້ແກ່ ມນຸຫຍ໌ຜູ້ດຸຮ້າຍຫຍາບຄາຍ ທ່ຽວຂ້າສັຕວ໌ຕັດຊີວິຕເຂົາ ທ່ຽວຈີ້ທ່ຽວປລົ້ນເອົາຊັພຍ໌ສົມບັຕິຂອງຜູ້ອື່ນມາເປັນຂອງຕົນດ້ວຍອາການທາຣຸຕດຸຮ້າຍ ເຊັ່ນ ຂ້າເຈົ້າຊັພຍ໌ຕາຍແດ່ ທຸບຕີຈົນບາດເຈັບສາຫັສແດ່ ຂົ່ມຂືນແລ້ວຂ້າແດ່ ບຽດບຽນຜູ້ອື່ນສັຕວ໌ອື່ນ ທໍຣມານຜູ້ອື່ນສັຕວ໌ອື່ນ ໂດຍອາການທາຣຸຕດຸຮ້າຍຫຍາບຄາຍນານາປຣະການ ຣວມຄວາມວ່າເປັນຄົນໄຮ້ສີລທັມມ໌ ບໍ່ມີມນຸຫຍທັມມ໌ ຄື ສີລ ໕ ປະຈຳຕົວເລີຍ ເປັນມິຈສາທິຜຖິ ທ່ານຈຶ່ງໄດ້ຂນານນາມວ່າ **ມນຸສຸສເນຣຍິໂກ** ຄືເປັນມນຸຫຍ໌ແຕ່ຊື່ ສ່ວນຄວາມປະພຶຕທາງ ກາຍ ວາຈາ ໃຈ ນັ້ນເລວທຣາມຕ່ຳຊ້າດຸຮ້າຍຫຍາບຄາຍເຫມືອນກັບສັຕວ໌ນຣົກຈັ່ງນັ້ນ

໓. ມນຸສຸສເປໂຕ: ມນຸษຍ໌ເປຕ

ໄດ້ແກ່ມນຸษຍ໌ຜູ້ຫລາຍເກີນໄປດ້ວຍຄວາມໂລກ ຫລາຍເກີນໄປດ້ວຍຕັຕຫາ ມັກລັກເລັກຂໂມຍນ້ອຍ ໂລກເອົາຂອງຜູ້ອື່ນມາເປັນຂອງຕົນ ແຍ່ງຊີງ ວິ່ງຣາວ ເປັນຕົ້ນ ແມ້ພວກທີ່ທ່ຽວຂໍທານນິບາດແຜລຫລາຍກໍສົງເຄາະຫ໌ເຂົ້າປຣະເພທນີ້ດ້ວຍ

໔. ມນຸສຸສຕິຣຈ຺ຉາໂນ: ມນຸษຍ໌ສັຕວ໌ດິຣັຈຉານ

ໄດ້ແກ່ມນຸษຍ໌ທີ່ຂວາງສີລ ຂວາງລັມມ໌ ມີໂມຫະຄືຄວາມຫລົງຫລາຍ ບໍ່ຮູ້ຈັກບາປ ບໍ່ຮູ້ຈັກບຸຌ ບໍ່ຮູ້ຈັກຄຸຕ ບໍ່ຮູ້ຈັກໂທษ ບໍ່ຮູ້ຈັກປຣະໂຍຊນ໌ແລະບໍ່ແມ່ນປຣະໂຍຊນ໌ ບໍ່ຮູ້ຈັກຄຸຕຂອງຜູ້ມີຄຸຕ ເຊັ່ນ ບິດາມາຣດາ ຄູຣບາອາຈາຣຍ໌ ເປັນຕົ້ນ ເປັນມນຸษຍ໌ໄຮ້ສີລລັມມ໌ ດື່ມເຫລົ້າເມົາສຸຣາ ສູບຝິ່ນ ກິນກັຌຊາ ເຮັດກຣະທຳທາງ ກາຍ ວາຈາ ໃຈ ກໍຂວາງໆ ຜິດທຳນອງຄອງລັມມ໌ ທ່ານຈຶ່ງໄດ້ຂນານນາມວ່າ ມນຸສຸສຕິຣຈ຺ຉາໂນ ແປລວ່າ ຜູ້ໄປຂວາງ ຄືຢ່າງເຊໄປ-ເຊມາ ບໍ່ໄດ້ຢ່າງຕັ້ງຕົວເຫມືອນຄົນ ຄົນດິຣັຈຉານກໍຈັ່ນນັ້ນ ເຮັດຫຍັງກໍຂວາງລັມມ໌ຂວາງວິນັຍ ຄືຜິດສີລລັມມ໌ຢູ່ສເມີໆ

໔. ມນຸສຸສພູໂຕ: ມນຸษຍ໌ແທ້ໆ

ຄືເປັນຄົນເຕັມຄົນ ໄດ້ແກ່ ບຸຄຄົລຜູ້ເກີດມາເປັນຄົນແລ້ວ ໄດ້ຮັກษາສີລ ໕ ມັ່ນເປັນນິຕຍ໌ ບໍ່ໄດ້ຂາດ ບໍ່ໄດ້ປຣະມາທຕໍ່ສີລ ເພາະຖືວ່າເປັນມນຸษຍລັມມ໌ ຄືເປັນລັມມ໌ປະຈຳມນຸษຍ໌ ລັມມ໌ທີ່ທຳຄົນໃຫ້ເປັນຄົນ ແຕ່ບໍ່ໄດ້ບຳເພັຌກຸສົລຈຣິຍາຢ່າງອື່ນອີກ ເຊັ່ນ ບໍ່ໄດ້ໃຫ້ທານ ບໍ່ໄດ້ຟັງລັມມ໌ ເປັນຕົ້ນ ມນຸษຍ໌ຢ່າງນີ້ທ່ານຂນານນາມວ່າ ມນຸສຸສພູໂຕ ຄືເປັນຄົນເຕັມຄົນ ເພາະມີຄຸຕລັມມ໌ຂອງຄົນຄືສີລ ສີລ ແປລວ່າ ສຽຣ ຄື ຫົວ ຖ້າຄົນຂາດສີລ ກໍຄືຄົນຂາດຫົວ ຫົວຂາດນັ່ນເອງ ເພາະຂາດຈາກຄຸຕລັມມ໌ຂອງຄວາມເປັນຄົນ

໕. ມນຸສຸສເທໂວ: ມນຸษຍ໌ເທວດາ

ໄດ້ແກ່ມນຸษຍ໌ຜູ້ມີສີລ ໕ ມັ່ນເປັນນິຕຍ໌ແລ້ວຍັງໄດ້ພຍາຍາມບຳເພັຌກຸສົລເພີ່ມພູນບາຣມີຢູ່ເລື້ອໆ ເຊັ່ນ ໃຫ້ທານ ຟັງລັມມ໌ ຮຽນລັມມ໌ປຕິບັຕິລັມມ໌ ໄຫວ້ພຣະ ສູຕມົນຕ໌ ມີຫິຣິ ຄືຄວາມລະອາຍບາປ ມີໂອຕັປປະ ຄືຄວາມສະດຸ້ງກົວຕໍ່ຜົລແຫ່ງບາປຢູ່ສເມີເອີ້ນວ່າ ເປັນຜູ້ມີໃຈສູງຄືເທວດາ ເພາະປະກອບດ້ວຍເທວລັມມ໌ ໗ ປຣະການ ຄື

- ບຳຣຸງລ້ຽງມາຣດາບິດາ
- ປະພຶຕອ່ອນນ້ອມຖ່ອມຕົນຕໍ່ບຸຄຄົລຜູ້ຈະເຣີຌໃນຕຣະກູລ
- ເວົ້ານິວຫົວມ່ວນ ອ່ອນຫວານ ນຸ່ມນວລ
- ລະຄວາມສໍ່ສຽດ

- ຮັກສາຄຳສັຕຍ໌
- ລະຄວາມຕຣະຫນີ່ຫນຽວແນ່ນ
- ບໍ່ໂກຣ

ມນຸຫຍ໌ຜູ້ມີຄຸຕສົມບັຕິເຊັ່ນນີ້ ທ່ານຂນານນາມວ່າ **ມນຸສ຺ສເທໂວ**

ເທົ່າທີ່ສະແດງມານີ້ ກໍພໍຊີ້ໃຫ້ເຫັນໄດ້ເດັ່ນຊັດແລ້ວວ່າ ສີລທັມມ໌ເທົ່ານັ້ນເປັນເຄື່ອງວັດບຸຄຄົລ ເປັນເຄື່ອງແບ່ງແຍກບຸຄຄົລໃຫ້ມີປຣະເພທຕ່າງໆ ດັ່ງທີ່ໄດ້ກ່າວມາແລ້ວຂ້າງຕົ້ນນັ້ນ ຖ້າຜູ້ໃດໄຮສີລທັມມ໌ ຜູ້ນັ້ນກໍຊື່ວ່າເປັນຄົນບໍ່ເຕັມຄົນແດ່ ເປັນຄົນເປຕແດ່ ເປັນຄົນອສຸຣກາຍແດ່ ເປັນຄົນນຣົກແດ່ ເປັນຄົນດີຣັຈຈານແດ່ ຖ້າຜູ້ໃດມີສີລທັມມ໌ ມີກັລຍາຕທັມມ໌ ມີວັຒນທັມມ໌ອັນດີງາມ ຜູ້ນັ້ນກໍຊື່ວ່າ ເປັນຄົນເຕັມຄົນ ເປັນຄົນແທ້ໆ ແລະເປັນຄົນເທວດາ

ເພາະດັ່ງນັ້ນທາງໄປມນຸຫຍ໌ຈຶ່ງໄດ້ແກ່ສີລ ໕ ເຊິ່ງເປັນມນຸຫຍທັມມ໌ ຄືທັມມ໌ປະຈຳມນຸຫຍ໌ ໃນພຣະບາລີທ່ານເອີ້ນວ່າ "ອຣິຍທັມມ໌" ເຊັ່ນ ຄຳວ່າ "ອຣິຍທມ຺ເມ ຖິໂຕ ນໂຣ" ນໍຣະຊົນຜູ້ຕັ້ງຢູ່ໃນອຣິຍທັມມ໌ ໄດ້ແກ່ບຸຄຄົລຜູ້ຕັ້ງຢູ່ໃນສີລ ໕ ດັ່ງນີ້

ບົທ ໕ ທາງໄປສວັຣຄ໌

ຄຳວ່າ "ສວັຣຄ໌" ນີ້ ຕາມຮູປສັພທ໌ກາສາບາລີ ແປລວ່າ ເລີສດ້ວຍດີກໍໄດ້ ແປລວ່າ ມີອາຣົມຕ໌ດີງາມກໍໄດ້ ແລະແປລວ່າ ເປັນທີ່ຂ້ອງຢູ່ຕິດຢູ່ແຫ່ງສັຕວ໌ທັງຫລາຍກໍໄດ້

ສຣຸປຄວາມວ່າ ສວັຣຄ໌ ໄດ້ແກ່ໂລກເປັນທີ່ຢູ່ຂອງເທວດາ ມີແຕ່ ຮູປ ສຽງ ກລິ່ນ ຣົສ ໂຜຖັພພະອັນດີງາມ ຄື ເປັນຂອງທິພຍ໌ ດີເລີສປະເສີກວ່າເມືອງມນຸຫຍ໌ຫລາຍເທົ່າ ໃນ**ກາມາວຈຣ**[12]ມີຢູ່ ໖ ຊັ້ນ ຄື

1. ສວັຣຄ໌ຊັ້ນຈາຕຸມຫາຣາຊ
2. ສວັຣຄ໌ຊັ້ນດາວດຶງສ໌
3. ສວັຣຄ໌ຊັ້ນຍາມາ
4. ສວັຣຄ໌ຊັ້ນດຸສິຕ
5. ສວັຣຄ໌ຊັ້ນນິມມານະຣະດີ

[12] **ກາມາວຈຣ** ອ່ານວ່າ "ກາ-ມາ-ວະ-ຈະ-ຣະ" (ປ. ກາມ ອວຈຣ) ຫາກອອກສຽງກາສາລາວຈະອ່ານວ່າ "ກາມາວະຈອນ" ແປລວ່າ: ທ່ອງທ່ຽວໃນກາມກົພ.

6. ສວັຣຄ໌ຊັ້ນປະຣະນິມມິຕະວະສະວັສດີ

ສວັຣຄ໌ທັ້ງ ໖ ຊັ້ນນີ້ ຕັ້ງຢູ່ຈາກກັນໄປຕາມລໍາດັບ ທີ່ສະແດງມານີ້ປາກົຜຢູ່ໃນພຣະໄຕຣປິຜົກເຫລັ້ມທີ່ ໑໙ ຫນ້າທີ່ ໕໖໑

ຣະຍະທາງໄປສວັຣຄ໌

ຣະຍະທາງໄປສວັຣຄ໌ນີ້ ທ່ານກ່າວໄວ້ໃນຄັມທີຣ໌ໂລກທີປສາຣວ່າ:

ອສຸຣປຸຣໂຕ ທີ ຢາວ ມນຸສ຺ສຫູມິໂຕ ຈຕຸຣາສີຕິໂຢຊນສຫສ຺ສານິ ໂຫນຕິ ຕັ້ງແຕ່ເມືອງອສູຣ ເຖິງເມືອງມນຸຫຍ໌ 84,000 ໂຍຊນ໌

ມນຸສ຺ສຫູມິໂຕ ຢາວ ຈາຕຸມ຺ມຫາຣາຊິກາ ເທວຈຕຸຕາຣີສ ໂຢຊນສຫສ຺ສານິ ຕັ້ງແຕ່ມນຸຫຍ໌ ເຖິງຊັ້ນຈາຕຸມຫາຣາຊ 42,000 ໂຍຊນ໌

ຕຖາ ຈາຕຸມ຺ມຫາຣາຊິກໂຕ ຢາວ ຕາວຕິສາ ຕັ້ງແຕ່ຊັ້ນຈາຕຸມຯ ເຖິງຊັ້ນດາວດຶງສ໌ກໍ 42,000 ໂຍຊນ໌ ເທົ່າກັນ

ອິຕິ ອສຸຣປຸຣໂຕ ຢາວ ຕາວຕິສປຸຣາ ໂຢຊນານໍ ເອກລ ກຸຂໍ ຈນຫຸຕໍ ອຜຸກສຫສ຺ສຍຸຈ ໂດຍເຫຕຸນີ້ຕັ້ງແຕ່ເມືອງອສູຣ ເຖິງເມືອງດາວດຶງສ໌ ຈຶ່ງເປັນຣະຍະທາງ 168,000 ໂຍຊນ໌

ປກວິຕລໂຕ ຢາວ ຕາວຕິສາ ປນ ຈຕຸຣາສີຕິ ໂຢຊນສຫສ຺ສານິ ຖ້າຈະຄິດແຕ່ພື້ນດິນຂຶ້ນໄປ ເຖິງຊັ້ນດາວດຶງສ໌ ເປັນຣະຍະທາງຕັ້ງ 84,000 ໂຍຊນ໌

ຕາວຕິສໂຕ ຢາວ ຍາມາ ໂຢຊນານໍ ຈຕຸລກຸຂໍ ຕິນຫຸຕໍ ຈຕຸສຫສ຺ສໍ ຈຕຸສຕຍຸຈ ຕັ້ງແຕ່ຊັ້ນດາວດຶງສ໌ ເຖິງຊັ້ນຍາມາ ເປັນຣະຍະທາງ 434,000 ໂຍຊນ໌

ຕທາ ຍາມໂຕ ຢາວ ຕຸສິຕາ ສຕຸຕລກຸຂໍ ຈຕຸຣາສີຕິສຫສ຺ສໍ ອຜຸກສະຍຸຈ ຕັ້ງແຕ່ຊັ້ນຍາມາ ເຖິງຊັ້ນດຸສິຕ ເປັນຣະຍະທາງຕັ້ງ 7,448,000 ໂຍຊນ໌

ຕຸສິໂຕ ຢາວ ນິມ຺ມານຣຕິໂຕ ເອກາທສລກຸຂານິ ຕິນຫຸຕໍ ປຍຸຈສຫສ຺ສໍ ທວິສຍຸຈ ຕັ້ງແຕ່ຊັ້ນດຸສິຕ ເຖິງຊັ້ນນິມມານະຣະດີ ເປັນຣະຍະທາງໄກລຕັ້ງ 1,135,200 ໂຍຊນ໌

ນິມ្មານຣຕິໂຕ ຢາວ ວສວຕຸຕິໂຕ ຈຸທຸທສລກຸຂານີ ອឈາຖ ນຫຸຕານີ ປឈຸຈສຫສຸສໍ ឈສតឈុຈ ຕັ້ງແຕ່ຊັ້ນນິມມານະຣະດີ ເຖິງຊັ້ນປະຣະນິມມິຕະວະສະວັສດີ ເປັນຣະຍະທາງຕັ້ງ 1,485,600 ໂຍຊນ໌

ວສວຕຸຕິໂຕ ຢາວ ປກຸມຊຸຊານភູມິໂຕ ອឈាຖາຣສលກຸខតានិ តិំນຫຸຕໍ ឈສຫສុសឈុຈ ຕັ້ງແຕ່ຊັ້ນປະຣະນິມມິຕະວະສະວັສດີ ເຖິງຊັ້ນປກິມຊານ ຄືເຖິງຊັ້ນພຣົຫ໌ມປາຣິສັຊຊາ ເປັນຣະຍະທາງ 1,836 ,000 ໂຍຊນ໌

ມຫາກຸສົລ ຖ នໍາສັພສັຕວ໌ໄປເກີດໃນສວັຣຄ໌ ຝ ຊັ້ນ ຊັ້ນໃດຊັ້ນນຶ່ງ ມຫາ ແປລວ່າ ຫລາຍ ກຸສົລ ແປລວ່າ ບຸຣ ຕໍ່ກັນເຂົ້າເປັນມຫາກຸສົລ ແປລວ່າ ບຸຣຫລາຍຢ່າງ ເຊັ່ນ ໃຫ້ທານ ຟັງຣັມມ໌ ຮຽນຣັມມ໌ ຈະເຣີນກັມມຖານ ທອດກຖິນ ທອດຜ້າປ່າສ້າງໂບສຖ໌ສ້າງວິຫາຣ ສ້າງສາລາກາຣປະຣຽນ ສ້າງພຣະພຸທຣຮູປ ສ້າງໂຕ໊ະຫມູ່ບູຊາ ສ້າງໂຮງຮຽນ ສ້າງໂຮງພຍາບາລ ສ້າງກຸຝີ ຂຸດບໍ່ນ້ຳ ຕັກບາຕຣ໌ ບູຊາດ້ວຍດອກໄມ້ຮູປທຽນຂອງຫອມ ເຄື່ອງອາກາຣຕ໌ ແລະບູຊາດ້ວຍປັຈຈັຍ ៤ ຄື ຈີວຣ ບິຕທບາຕ ເສນາສນະ ຢາແກ້ໂຣຄ ເປັນຕົ້ນ ຈົນບໍ່ສາມາຖຈະນັບໄດ້ ເອີ້ນມຫາກຸສົລທັງນັ້ນ

ມຫາກຸສົລມີ ຖ ປຣະກາຣ

1. **ໂສມນສຸສສຫគតំ ឈាតສມຸປຢຸតຸតំ ອສងຸខាຣິກំ** ເວລາເຮັດບຸຣມີຄວາມດີໃຈ ປັຕຖນານິພພານ ເຮັດບຸຣເອງ
2. **ໂສມນສຸສສຫគតំ ឈាតສມຸປຢຸតຸតំ ສສងຸខាຣິກំ** ເວລາເຮັດບຸຣມີຄວາມດີໃຈ ປັຕຖນານິພພານ ມີຜູ້ຊັກຊວນຈຶ່ງເຮັດບຸຣ
3. **ອຸເປກຸខាສຫគតំ ឈាតສມຸປຢຸតຸតំ ອສងຸខាຣິກំ** ເວລາເຮັດບຸຣມີໃຈເສີຍໆ ປັຕຖນານິພພານ ເຮັດບຸຣເອງ
4. **ອຸເປກຸខាສຫគតំ ឈាតສມຸປຢຸតຸតំ ສສងຸខាຣິກំ** ເວລາເຮັດບຸຣມີໃຈເສີຍໆ ປັຕຖນານິພພານ ມີຜູ້ຊັກຊວນຈຶ່ງເຮັດບຸຣ
5. **ໂສມນສຸສສຫគតំ ឈាតວິປຸປຢຸតຸតំ ອສងຸខាຣິກំ** ເວລາເຮັດບຸຣມີຄວາມດີໃຈ ບໍ່ໄດ້ປັຕຖນານິພພານ ເຮັດບຸຣເອງ
6. **ໂສມນສຸສສຫគតំ ឈាតວິປຸປຢຸតຸតំ ສສងຸខាຣິກំ** ເວລາເຮັດບຸຣມີຄວາມດີໃຈ ບໍ່ໄດ້ປັຕຖນານິພພານ ມີຜູ້ຊັກຊວນຈຶ່ງເຮັດບຸຣ
7. **ອຸເປກຸខាສຫគតំ ឈាតວິປຸປຢຸតຸតំ ອສងຸខាຣິກំ** ເວລາເຮັດບຸຣມີໃຈເສີຍໆ ບໍ່ປັຕຖນານິພພານ ເຮັດບຸຣເອງ
8. **ອຸເປກຸខាສຫគតំ ឈាតວິປຸປຢຸតຸតំ ສສងຸខាຣິກំ** ເວລາເຮັດບຸຣມີໃຈເສີຍໆ ບໍ່ປັຕຖນານິພພານ ມີຜູ້ຊັກຊວນຈຶ່ງເຮັດບຸຣ

ອະທິບາຍ

1. ເວລາເຮັດບຸນ ມີຄວາມດີໃຈ ປັດຖະນາໃຫ້ໄດ້ມັກຄ໌ຜົລນິພພານ ຄິດເຮັດບຸນເອງ ບໍ່ມີໃຜມາຊັກຊວນໃຫ້ເຮັດ ຜູ້ທີ່ເຮັດບຸນເຊັ່ນນີ້ໄດ້ຜົລດີຫລາຍ ຄືຜົລບຸນນີ້ສາມາຖຈະນຳໄປເກີດເປັນມນຸษຍ໌ກໍໄດ້ ນຳໄປເກີດເປັນເທວດາກໍໄດ້ ຖ້າໄປເກີດເປັນມນຸษຍ໌ຈະມັ່ງຄັ່ງສົມບູຣຕ໌ ຮັ່ງມີ ບໍ່ອຶດບໍ່ຢາກ ບໍ່ທຸກຂ໌ ບໍ່ຍາກ ແລະມີປັญญາຫລາຍ ຫາກອອກຈະເຣີນສມຖກັມມຖານ ກໍຈະໄດ້ບັຣລຸຊານ ມີປຖົມຊານ ເປັນຕົ້ນ ຫາກອອກຈະເຣີນວິປັສສນາກັມມຖານ ກໍຈະໄດ້ບັຣລຸມັກຄ໌ຜົລນິພພານໃນຊາຕິນັ້ນ

2. ເວລາເຮັດບຸນ ມີຄວາມດີໃຈ ປັດຖະນາໃຫ້ໄດ້ມັກຄ໌ຜົລນິພພານ ບໍ່ໄດ້ຄິດເຮັດບຸນເອງ ມີຜູ້ຊັກຊວນຈຶ່ງເຮັດບຸນ ຜູ້ທີ່ເຮັດບຸນເຊັ່ນນີ້ ໄດ້ຜົລເປັນທີ່ ໒ ຄືສາມາຖຈະໄປບັງເກີດເປັນມນຸษຍ໌ກໍໄດ້ ໄປບັງເກີດເປັນເທວດາກໍໄດ້ ຖ້າໄປເກີດເປັນມນຸษຍ໌ຈະຮັ່ງມີມັ່ງມີศຣີສຸຂ ແລະມີປັญญາຫລາຍ ແຕ່ເປັນທີ່ ໒ ຍັງມີຄົນທີ່ເກັ່ງກວ່າຈລາດກວ່າ ຫາກອອກຈະເຣີນສມຖກັມມຖານ ກໍຈະໄດ້ຊານໃນຊາຕິນັ້ນ ຫາກອອກຈະເຣີນວິປັສສນາກັມມຖານ ກໍຈະໄດ້ບັຣລຸມັກຄ໌ຜົລນິພພານໃນຊາຕິນັ້ນ

3. ເວລາເຮັດບຸນ ມີໃຈເສີຍໆ ປັດຖະນານິພພານ ຄິດເຮັດບຸນເອງ ບໍ່ມີໃຜມາຊັກຊວນໃຫ້ເຮັດບຸນ ຜູ້ທີ່ເຮັດບຸນເຊັ່ນນີ້ ໄດ້ຜົລເປັນທີ່ ໓ ສາມາຖຈະນຳໄປເກີດເປັນມນຸษຍ໌ກໍໄດ້ ນຳໄປເກີດເປັນເທວດາກໍໄດ້ ຖ້າໄປເກີດເປັນມນຸษຍ໌ຈະຮັ່ງມີ ມັ່ງຄັ່ງສົມບູຣຕ໌ມັ່ງມີศຣີສຸຂ ແລະຈະມີສຕິປັญญາດີເປັນທີ່ ໓ ຍັງມີຄົນດີກວ່າ ເກັ່ງກວ່າ ແຫລມກວ່າ ຫາກອອກຈະເຣີນສມຖກັມມຖານ ຈະໄດ້ຊານ ຫາກອອກຈະເຣີນວິປັສສນາກັມມຖານ ຈະໄດ້ມັກຄ໌ຜົລນິພພານໃນຊາຕິນັ້ນ

4. ເວລາເຮັດບຸນ ມີໃຈເສີຍໆ ປັດຖະນານິພພານ ມີຜູ້ຊັກຊວນຈຶ່ງເຮັດບຸນ ຜູ້ທີ່ເຮັດບຸນເຊັ່ນນີ້ໄດ້ຜົລເປັນທີ່ ໔ ສາມາຖນຳໄປເກີດເປັນມນຸษຍ໌ກໍໄດ້ ໄປເກີດເປັນເທວດາກໍໄດ້ ຖ້າໄປເກີດເປັນມນຸษຍ໌ຈະຮັ່ງມີ ມັ່ງຄັ່ງສົມບູຣຕ໌ ແລະມີສຕິປັญญາດີເປັນທີ່ ໔ ຖ້າອອກຈະເຣີນສມຖກັມມຖານຈະໄດ້ຊານ ຖ້າອອກຈະເຣີນວິປັສສນາກັມມຖານ ຈະໄດ້ມັກຄ໌ຜົລນິພພານໃນຊາຕິນັ້ນ ມຫາກຸศົລທັງ ໔ ດວງນີ້ ຢູ່ໃນເກຕຫ໌ດີມາກຕາມລຳດັບໆ ກັນ ຖ້າຈະເຮັດບຸນຂໍໃຫ້ໄດ້ຢ່າງນີ້ດີຫລາຍ

5. ໃນເວລາເຮັດບຸນ ມີຄວາມດີໃຈ ບໍ່ປັດຖະນາມັກຄ໌ຜົລນິພພານ ຄິດເຮັດບຸນເອງ ບໍ່ມີໃຜຊັກຊວນໃຫ້ເຮັດບຸນ ຜູ້ທີ່ເຮັດບຸນເຊັ່ນນີ້ ຂາດປັญญາ ໄດ້ຜົລເປັນທີ່ ໕ ສາມາຖຈະນຳໄປເກີດເປັນມນຸษຍ໌ກໍໄດ້ ໄປເກີດເປັນເທວດາກໍໄດ້ ຖ້າໄປເກີດເປັນມນຸษຍ໌ຈະຮັ່ງມີມັ່ງມີศຣີສຸຂ ແຕ່ຂາດປັญญາ ຄື ບໍ່ມີປັญญາທີ່ຈະໄດ້ຊານ ໄດ້ມັກຄ໌ຜົລນິພພານ ຫມາຍຄວາມວ່າ ຖ້າອອກຈະເຣີນສມຖກັມມຖານກໍຈະບໍ່ໄດ້ຊານ ຖ້າອອກຈະເຣີນວິປັສສນາ

ກັມມຖານກໍຈະບໍ່ໄດ້ບັຣລຸມັຄຄ໌ຜົລນິພພານໃນຊາຕິນັ້ນ ແຕ່ຈະເປັນປັຈຈັຍໃຫ້ໄດ້ຊານໃຫ້ໄດ້ມັຄຄ໌ຜົລນິພພານໃນຊາຕິຕໍ່ໄປໄດ້

6. ເວລາເຮັດບຸຌ ມີຄວາມດີໃຈ ບໍ່ປັຕຖນາມັຄຄ໌ຜົລນິພພານ ມີຜູ້ຊັກຊວນຈຶ່ງເຮັດບຸຌ ຜູ້ທີ່ເຮັດບຸຌເຊັ່ນນີ້ຂາດປັຌຌາ ໄດ້ຜົລເປັນທີ່ ໕ ສາມາຖຈະໄປເກີດເປັນມນຸษຍ໌ກໍໄດ້ ໄປເກີດເປັນເທວດາກໍໄດ້ ຖ້າໄປເກີດເປັນມນຸษຍ໌ກໍຈະຮັ່ງມີມັ່ງຄັ່ງສົມບູຣຕ໌ ມັ່ງມີສຣີສຸຂ ແຕ່ຂາດປັຌຌາ ຄືບໍ່ມີປັຌຌາທີ່ຈະໄດ້ຊານ ໄດ້ມັຄຄ໌ຜົລນິພພານໃນຊາຕິນັ້ນ ແຕ່ຈະເປັນປັຈຈັຍໃຫ້ໄດ້ມັຄຄ໌ຜົລນິພພານຫຣືໄດ້ຊານໃນຊາຕິຕໍ່ໄປ

7. ໃນເວລາເຮັດບຸຌ ມີໃຈເສີຍໆ ບໍ່ປັຕຖນານິພພານ ເຮັດບຸຌເອງ ບໍ່ມີໃຜຊັກຊວນໃຫ້ເຮັດບຸຌ ຜູ້ທີ່ເຮັດບຸຌເຊັ່ນນີ້ໄດ້ທີ່ ໗ ຂາດປັຌຌາ ສາມາຖຈະນຳໄປເກີດເປັນມນຸษຍ໌ກໍໄດ້ ໄປເກີດເປັນເທວດາກໍໄດ້ ຖ້າເກີດເປັນມນຸษຍ໌ກໍຈະຮັ່ງມີມັ່ງມີສຣີສຸຂ ແຕ່ບໍ່ມີປັຌຌາຈະໄດ້ບັຣລຸຊານ ມັຄຄ໌ຜົລນິພພານໃນຊາຕິນັ້ນ ແຕ່ຈະເປັນປັຈຈັຍໃຫ້ໄດ້ບັຣລຸຊານ ມັຄຄ໌ຜົລນິພພານໃນຊາຕິຕໍ່ໆ ໄປໄດ້

8. ເວລາເຮັດບຸຌ ມີໃຈເສີຍໆ ບໍ່ປັຕຖນານິພພານ ມີຜູ້ຊັກຊວນຈຶ່ງເຮັດບຸຌ ຜູ້ທີ່ເຮັດບຸຌເຊັ່ນນີ້ ໄດ້ຜົລເປັນທີ່ ໘ ສາມາຖນຳໄປເກີດເທິງສວັຣຄ໌ ເປັນເທວດາກໍໄດ້ ເປັນມນຸษຍ໌ກໍໄດ້ ຖ້າເກີດເປັນມນຸษຍ໌ກໍຈະມັ່ງມີສຣີສຸຂຮັ່ງມີບໍ່ອຶດບໍ່ຢາກ ບໍ່ທຸກຂ໌ບໍ່ຍາກ ແຕ່ຂາດປັຌຌາທີ່ຈະນຳພາໃຫ້ໄດ້ຊານມັຄຄ໌ຜົລນິພພານໃນຊາຕິນັ້ນ ແຕ່ຈະເປັນປັຈຈັຍອຳນວຍຜົລໃຫ້ໄດ້ມັຄຄ໌ຜົລນິພພານ ຫຣືໄດ້ຊານໃນກົພຕໍ່ໆ ໄປໄດ້ຢູ່

ມຫາກຸສົລ ໔ ຂໍ້ຂ້າງລຸ່ມນີ້ດີຢູ່ ເວລາເຮັດບຸຌບໍ່ປັຕຖນາເອົາປັຌຌາ ຈຶ່ງເຮັດໃຫ້ຂາດປັຌຌາໄປ ເມື່ອຂາດປັຌຌາກໍບໍ່ສາມາຖບັຣລຸຊານ ມັຄຄ໌ຜົລນິພພານໄດ້ໃນຊາຕິນັ້ນ ແຕ່ຈະເປັນປັຈຈັຍອຳນວຍຜົລໃຫ້ໄດ້ມັຄຄ໌ຜົລນິພພານ ຫຣືໄດ້ຊານໃນກົພຕໍ່ໆ ໄປໄດ້ຢູ່

ມຫາກຸສົລ ໘ ດວງນີ້ແຫລະ ຈະນຳບຸຄຄົລໄປເກີດເປັນມນຸษຍ໌ຫຣືເປັນເທວດາ ເຫຕຸດັ່ງນັ້ນ ທາງສາຍທີ່ ໕ ນີ້ຈຶ່ງໄດ້ຊື່ວ່າ ທາງໄປສວັຣຄ໌ ເຊິ່ງໄດ້ແກ່ ມຫາກຸສົລ ໘ ດັ່ງມີອັຕຖາຣິບາຍທີ່ໄດ້ບັຣຍາຍມາແບບນີ້

ສ່ວນຕົວຢ່າງໃນເຣື່ອງນີ້ກໍມີຫລາຍ ເຊັ່ນ **ມັຌກຸກຸຓຫລີ**[13]ເທພບຸຕຣ໌ ໄດ້ຍັງໃຈໃຫ້ເລື່ອມໃສໃນພຣະພຸທຣເຈົ້າ ຕາຍແລ້ວໄດ້ໄປບັງເກີດໃນສວັຣຄ໌ ແລະຕິຓບາລບຸຣຸษ ໄດ້ຮ່ວມອນຸໂມທນາໃນກກິນຂອງທ່ານ**ເສຌກີ**[14] ຕາຍແລ້ວໄດ້ໄປບັງເກີດໃນສວັຣຄ໌ ນັນທິຍມາຕົພໄດ້ສ້າງສາລາຖວາຍພຣະພຸທຣເຈົ້າ ຕາຍແລ້ວກໍໄດ້ໄປບັງເກີດໃນສວັຣຄ໌ເຊັ່ນດຽວກັນ ທັ້ງນີ້ກໍເພາະມຫາກຸສົລທີ່ຕົນໄດ້ເຮັດໄວ້ເປັນປັຈຈັຍໂດຍແທ້

---

[13] **ມັຌກຸກຸຓຫລີ** ອ່ານວ່າ "ມັດ-ຖະ-ກຸນ-ທະ-ລີ"

[14] **ເສຌກີ** ອ່ານວ່າ "ເສດຖີ" ນ. ຄົນຮັ່ງມີ, ຄົນມີຊັພຍ໌

ບົທ ៥ ທາງໄປພຣົຫ໌ມໂລກ

ທາງໄປພຣົຫ໌ມໂລກ ໄດ້ແກ່ສມຖກັມມຖານ ມີອາຣົມຕ໌ ៤໐ ແບ່ງອອກເປັນ ໆ ຫມວດ ຄື ກສິຓ ໑໐ ອນຸສສຕິ ໑໐ ພຣົຫ໌ມວິຫາຣ ៤ ອາຫາເຣປຜິກູລສັຌຌາ ໑ ຈຕຸຣາຕຸວວັຕຖານ ໑ ເຊິ່ງມີຄວາມພິສດາຣ ໄດ້ຂຽນໄວ້ອີກເຫລັ້ມນຶ່ງຕ່າງຫາກ ໂດຍໃຊ້ຊື່ວ່າ "ຈິຕຕພາວນາ" ຫຣື "ລັມມ໌ປຜິບັຕິ" ແລະອີກເຫລັ້ມນຶ່ງໄດ້ຂຽນເປັນທຳນອງປຸຈສາວິສັຊນາ ໃຫ້ຊື່ວ່າ "ຄຳຖາມ-ຄຳຕອບ ເຣື່ອງວິປັສສນາກັມມຖານ" ດັ່ງນັ້ນ ໃນເຫລັ້ມນີ້ຈະຂໍຍົກໄວ້ບໍ່ນຳມາສະແດງໄວ້ໃນທີ່ນີ້ອີກ ທ່ານຜູ້ປຣະສົງຄ໌ຈະທຣາບກໍໂຜດ ຕິດຕາມຫາເບິ່ງໄດ້ໃນຫນັງສືດັ່ງທີ່ກ່າວມາແລ້ວນັ້ນ

ສຣຸປຄວາມວ່າທັ້ງ ໆ ຫມວດຣວມເປັນ ៤໐ ຂໍ້ນີ້ ເປັນອາຣົມຕ໌ຂອງສມຖກັມມຖານ ຜູ້ທີ່ຈະເຣີນກັມມຖານເຫລົ່ານີ້ຂໍ້ໃດຂໍ້ນຶ່ງ ເຊັ່ນ ພາວນາວ່າ "ເກສາ ໂລມາ ນຂາ ທນຸຕາ ຕໂຈ" ເປັນຕົ້ນ ຈົນໄດ້ບັຣລຸຊານມີປຖົມຊານເປັນຕົ້ນ ເມື່ອຕາຍແລ້ວຈຶ່ງໄດ້ໄປເກີດໃນພຣົຫ໌ມໂລກຊັ້ນໃດຊັ້ນນຶ່ງ ຕາມສົມຄວຣແກ່ຊານຂອງຕົນໆ ຖ້າຜູ້ໃດຕ້ອງການໄປເກີດພຣົຫ໌ມໂລກກໍຕ້ອງຈະເຣີນສມຖກັມມຖານຈົນໄດ້ຊານກ່ອນ ຈຶ່ງຈະໄປໄດ້

ທາງສາຍທີ່ ໑ ເຖິງສາຍທີ່ ៥ ນີ້ ມີຢູ່ກ່ອນພຣະພຸທສເຈົ້າເກີດຂຶ້ນໃນໂລກແລ້ວ ໃນພຸທສສາສນາກໍມີ ນອກພຸທສສາສນາກໍມີ ເຊັ່ນ ອາຬາຣດາບົສ ອຸທກດາບົສ ຜູ້ເປັນອາຈາຣຍ໌ຂອງພຣະພຸທສເຈົ້າ ເປັນຕົ້ນ ໄດ້ເຄີຍເດີນທາງສາຍນີ້ມາແລ້ວ ຜູ້ທີ່ເດີນທາງສາຍນີ້ເຖິງແມ້ວ່າຈະປຜິບັຕິໄດ້ດີຈົນໄດ້ບັຣລຸຊານ ໄດ້ບັຣລຸອົພິຌຌາແລ້ວກໍເສື່ອມໄດ້ ເຊັ່ນ ພຣະເທວທັຕເປັນຕົວຢ່າງ ແລະຖ້າຫມົດບຸຌແລ້ວກໍຍັງຈະເມືອມາສູ່ອບາຍພູມິໄດ້ ດັ່ງຕົວຢ່າງຕໍ່ໄປນີ້ ຄືແມ່ໄກ່ຟັງລັມມ໌

ມີເຣື່ອງເລົ່າໄວ້ວ່າ ໃນກາລແຫ່ງພຣະພຸທສເຈົ້ານາມວ່າ ກກຸສັນຣະ ແມ່ໄກ່ຕົວນຶ່ງ ຢູ່ໃນທີ່ໃກ້ອາສົນສາລາ ແມ່ໄກ່ຕົວນັ້ນໄດ້ຟັງສຽງປຣະກາສລັມມ໌ຂອງພິກຂຸຜູ້ເປັນນັກປຜິບັຕິລັມມ໌ອົງຄ໌ນຶ່ງ ກຳລັງສາລຍາຍເຣື່ອງວິປັສສນາກັມມຖານຢູ່ ຖືກເຫລວຕົວນຶ່ງຂ້າ ຕາຍຈາກຊາຕິນັ້ນແລ້ວ ໄດ້ເກີດເປັນພຣະຣາຊລິດານາມວ່າ ອຸພພຣີ ໄດ້ອອກບວຊໃນສຳນັກຂອງປຣິພາຊິກາທັ້ງຫລາຍ ວັນນຶ່ງນາງໄດ້ເຂົ້າໄປສູ່ກຸຜິທອດພຣະເນຕຣ໌ເຫັນຫມູ່ຫນອນແລ້ວ ໄດ້ຈະເຣີນສມຖກັມມຖານໂດຍເອົາຫນອນເປັນອາຣົມຕ໌ ເອີ້ນວ່າ **ປຸຬຸວກສັຌຌາ**[15] ໄດ້ບັຣລຸປຖົມຊານ ຕາຍຈາກຊາຕິນັ້ນໄດ້ໄປເກີດ

---

[15] **ປຸຬຸວກສັຌຌາ** ອ່ານວ່າ "ປຸ-ລຸ-ວະ-ກະ-ສັນຍາ"

ໃນພຣົຫ໌ມໂລກ ຈຸຕິຈາກພຣົຫ໌ມໂລກໄດ້ມາເກີດໃນຕຣະກູລເສຜກີ ຕໍ່ມາບໍ່ນານປານໃດ ກໍຕາຍໄປເກີດເປັນນາງລູກສຸກຣໃນກຸງຣາຊຄຣືຫ໌ ໃນກາລແຫ່ງພຣະພຸທສເຈົ້າຂອງເຮົານີ້

ພຣະສາສດາ ໄດ້ທອດພຣະເນຕຣ໌ເຫັນນາງລູກສຸກຣນັ້ນ ຈຶ່ງທຣົງແຍ້ມພຣະໂອຫກ໌ ພຣະອານົນທ໌ເຖຣະໄດ້ທູລຖາມພຣະພຸທສອົງຄ໌ຈຶ່ງໄດ້ຕຣັສບອກຂໍ້ຄວາມນັ້ນທັງຫມົດ ກິກຂຸທັງຫລາຍມີພຣະອານົນທ໌ເປັນປຣະມຸຂໄດ້ສດັບເຣື່ອງນັ້ນແລ້ວຕ່າງກໍພາກັນເກີດຄວາມສັງເວຊສລົດໃຈຫລາຍ

ພຣະສາສດາທຣົງຍັງຄວາມສັງເວຊສລົດໃຈໃຫ້ເກີດຂຶ້ນແກ່ກິກຂຸເຫລົ່ານັ້ນແລ້ວ ເພື່ອຈະທຣົງປຣະກາສໂທສແຫ່ງຣາຄະຕັຕຫາ ປະທັບຢືນຢູ່ໃນຣະຫວ່າງຫົນທາງນັ້ນເອງ ໄດ້ທຣົງກາສິຕພຣະຄາຖາເຫລົ່ານີ້ວ່າ

ຢຖາປິ ມູເລ ອນຸປທຸທເວ ທຬໂຫ

ລິນໂນປິ ຣຸກໂຂ ປຸນເຣວ ຣູຫຕິ

ເອວມຸປິ ຕຕຸຫານຸສເຢ ອນູຫເຕ

ນິພຸພຕຸຕຕິ ທຸກຂມິທໍ ປຸນປຸປຸນໍ

ດັ່ງນີ້ເປັນຕົ້ນ ແປລເປັນໃຈຄວາມວ່າ ຕົ້ນໄມ້ ເມື່ອຮາກບໍ່ມີອັນຕຣາຍຍັງມັ່ນຄົງ ເຖິງຈະຖືກບຸຄຄົລຕັດແລ້ວກໍຍັງງອກຂຶ້ນໄດ້ອີກຢູ່ ແມ້ລັນໃດທຸກຂ໌ກໍລັນນັ້ນ ຄື ເມື່ອຕັຕຫານຸສັຍອັນບຸຄຄົລຍັງກຳຈັດບໍ່ໄດ້ແລ້ວຍ່ອມເກີດຂຶ້ນໄດ້ຢູ່ຕລອດໄປເຫມືອນກັນຢ່າງນັ້ນ ฯ

ກະແສແຫ່ງຕັຕຫາ ລັຜ ອັນໄຫລໄປໃນອາຣົມຕ໌ເປັນທີ່ພໍໃຈ ເປັນຂອງກລ້າ ຍ່ອມມີແກ່ບຸຄຄົລໃດ ຄວາມດຳຣິທັງຫລາຍອັນໃຫລ່ ອາສັຍຣາຄະ ຍ່ອມນຳບຸຄຄົລນັ້ນຜູ້ມີທິຜກິຊົ່ວໄປ ກະແສແຫ່ງຕັຕຫາທັງຫລາຍຍ່ອມໄຫລໄປໃນອາຣົມຕ໌ທັງປວງ ຕັຕຫາຄືເຖົາວັລຍ໌ແຕກຂຶ້ນແລ້ວຕັ້ງຢູ່ ກໍທ່ານທັງຫລາຍເຫັນຕັຕຫານັ້ນເປັນດັ່ງເຖົາວັລຍ໌ ເກີດແລ້ວຈົ່ງພາກັນຕັດຮາກເສັ່ງດ້ວຍປັຍຍາເຖີດ ໂສມນັສທັງຫລາຍທີ່ຊ່ານໄປແລະເປື້ອນຕັຕຫາຄືຢາງຫນຽວຍ່ອມມີແກ່ສັຕວ໌ສັຕວ໌ເຫລົ່ານັ້ນອາສັຍຄວາມສຳຣາຍ ຈຶ່ງເປັນຜູ້ສແວງຫາຄວາມສຸຂ ນໍຣະຊົນເຫລົ່ານັ້ນແລ ຍ່ອມເປັນຜູ້ເຂົ້າເຖິງຄວາມເກີດແລະຄວາມແກ່ ຫມູ່ສັຕວ໌ຖືກຕັຕຫາຜູ້ທຳຄວາມດີ້ນຣົນລ້ອມໄວ້ແລ້ວຍ່ອມກະເສືອກກະສົນເຫມືອນກະຕ່າຍທີ່ຖືກນາຍພຣານດັກໄດ້ແລ້ວຈັ່ງນັ້ນ ຫມູ່ສັຕວ໌ຜູ້ຂ້ອງຢູ່ໃນສັງໂຍຊນ໌ແລະກິເລສເປັນເຄື່ອງຂ້ອງຢູ່ຍ່ອມພາກັນເຂົ້າເຖິງທຸກຂ໌ຢູ່ເລື້ອຍໆ ເປັນເວລາຊ້ານານ ຫມູ່ສັຕວ໌ຖືກຕັຕຫາຜູ້ທຳຄວາມດີ້ນຣົນລ້ອມໄວ້ແລ້ວ ຍ່ອມກະເສືອກກະສົນເຫມືອນກັນກັບກະຕ່າຍທີ່ນາຍພຣານດັກໄດ້ແລ້ວຈັ່ງນັ້ນ ເພາະເຫຕຸນັ້ນ ຜູ້ເຫັນກັຍໃນວັຜຜສົງສາຣຫວັງລັມມ໌ເປັນທີ່ສຳຣອກກິເລສແກ່ຕົນຄວຣບັຣເທົາ ຄວຣກຳຈັດ ຄວຣນຳອອກ ຄວຣຖິ້ມຄວຣລະຕັຕຫາຜູ້ກະທຳຄວາມດີ້ນຣົນນັ້ນເສັ່ງດ້ວຍຍາຕມິໂສດາປັຕຕິມັຄຄຍາຕເປັນຕົ້ນ ດັ່ງນີ້

ຝ່າຍນາງລູກສຸກຣຕົວນັ້ນ ຕາຍຈາກຊາຕິນັ້ນໄດ້ໄປເກີດໃນຣາຊຕຣະກູລໃນສຸວັຕພູມີ ຕາຍຈາກນັ້ນເກີດໃນກຸງພາຣາຕສີ ຕາຍຈາກນັ້ນເກີດໃນເຮືອນພໍ່ຄ້າມ້າທີ່ທ່າສຸປປາຣກະ ຕາຍຈາກນັ້ນເກີດໃນເຮືອນຂອງນາຍເຮືອທີ່ທ່າຄາວີຣະ ຕາຍຈາກນັ້ນເກີດໃນເຮືອນຂອງອິສຣຊົນໃນເມືອງອນຸຣາຊບຸຣີ ຕາຍຈາກນັ້ນເກີດເປັນທິດາໃນເຮືອນຂອງກຸຜຸມພີຊື່ສຸມນະໃນເພກກັນຕຄາມ ໃນທິສທັກຂິຕຂອງເມືອງນັ້ນ ມີຊື່ວ່າສຸມນາຕາມຊື່ຂອງກຸຜຸມພີ ຕໍ່ມາບິດາຂອງນາງ ໄດ້ພາຍ້າຍໄປສູ່ແຄວ້ນທີພວາປີຢູ່ໃນບ້ານຊື່ມຫາມຸນິຄາມຯ ອຳມາຕຍ໌ຂອງພຣະເຈົ້າທຸຜຄາມຕີນາມວ່າ **ລກຸຕຜກອຕິມພຣະ** (ອ່ານເປັນພາສາລາວວ່າ ລະກຸນະຕະກະອະຕິມະພະຣະ) ໄປທີ່ບ້ານ ນັ້ນດ້ວຍກຣຕິຍກິຈບາງຢ່າງ ເຫັນນາງແລ້ວທຳການມົງຄຸລຢ່າງໃຫຍ່ ໄດ້ພານາງໄປສູ່ບ້ານມຫາປຸຕຄາມ

ຍາມນັ້ນພຣະມຫາອຕຸລເຖຣະຜູ້ຢູ່ໃນມຫາວິຫາຣຊື່ໂກຜິບັຣພົຕ ທ່ຽວໄປບິຕທບາຕໃນບ້ານນັ້ນ ຢືນຢູ່ທີ່ປະຕູເຮືອນຂອງນາງ ເຫັນນາງແລ້ວຈຶ່ງກ່າວກັບພິກຂຸທັ້ງຫລາຍວ່າ ຜູ້ມີອາຍຸທັ້ງຫລາຍ ນາງລູກສຸກຣເຖິງຄວາມເປັນພັຣຍາຂອງມຫາອຳມາຕຍ໌ຊື່**ລກຸຕຜກອຕິມພຣະ**ແລ້ວ ໂອ ນ່າອັສຈັຣຍ໌ຈິງ ນາງຟັງຄຳນັ້ນແລ້ວເພິກພົພໃນອດີຕຂຶ້ນໄດ້ເມື່ອຣະລຶກຊາຕິໄດ້ ໃນຂນະນັ້ນ ນາງໄດ້ມີຄວາມສັງເວຊສລົດໃຈເກີດຂຶ້ນ ອ້ອນວອນສາມີບວຊໃນສຳນັກພຣະເຖຣີຜູ້ປະກອບດ້ວຍພລະ ໕ ດ້ວຍອິສຣິຍຍົສຢ່າງໃຫຍ່ ໄດ້ຟັງກຖາພັຕນາມຫາສຕິປັຍຖານສູຕຣ໌ ໃນຕິສສມຫາວິຫາຣ ໄດ້ສຳເຣັຈໂສດາປັຕຕິຜົລຯ

ພາຍຫລັງເມື່ອພຣະເຈົ້າທຸຜຄາມຕີທຣົງປຣາບ**ທມິຊ**[16]ໄດ້ແລ້ວ ພຣະນາງສຸມນາເຖຣີ ໄປສູ່ບ້ານເພກກັນຕຄາມ ເຊິ່ງເປັນທີ່ຢູ່ຂອງມາຣດາບິດາຢູ່ໃນບ້ານນັ້ນ ໄດ້ຟັງອາສີວິສູປມສູຕຣ໌ໃນກັລລກມຫາວິຫາຣ ບັຣລຸພຣະອຣຫັນຕ໌ແລ້ວ

ໃນວັນປຣິນິພພານ ນາງອັນພວກພິກຂຸຕີຊັກຖາມແລ້ວໄດ້ເລົ່າປຣະວັຕິທັ້ງຫມົດນີ້ຢ່າງລະອຽດແກ່ພິກຂຸຕີສົງຄ໌ແລ້ວສົນທນາກັບພຣະມຫາຕິສສເຖຣະ ຜູ້ກ່າວບົທແຫ່ງທັມມ໌ ຜູ້ມີ**ປກຕິ**[17]ຢູ່ໃນມຕຫລາຣາມ ໓ ທ່າມກາງພິກຂຸສົງຄ໌ຜູ້ປຣະຊຸມກັນແລ້ວ ກ່າວວ່າ

ໃນກາລກ່ອນ ຂ້າພເຈົ້າຕາຍຈາກມນຸຍ໌ແລ້ວເກີດເປັນແມ່ໄກ່ ຖືກເຫລວຕັດຫົວໃນອັຕຕພາພນັ້ນ ໄດ້ໄປເກີດໃນກຸງຣາຊຄຣິຫ໌ແລ້ວອອກບວຊໃນສຳນັກຂອງປຣິພາຊິກາທັ້ງຫລາຍ ຈະເຣີຍສມຖກັມມຖານ ໄດ້ບັຣລຸປຖົມຊານຕາຍແລ້ວໄດ້ໄປເກີດໃນພຣົຫ໌ມໂລກ ຈຸຕິຈາກນັ້ນໄດ້ມາເກີດໃນຕຣະກູລເສຜຖີ ຕາຍຈາກນັ້ນໄດ້ໄປເກີດເປັນສຸກຣຕາຍຈາກນັ້ນໄປສູ່ສຸວັຕພູມີ ຕາຍຈາກນັ້ນໄປເກີດເມືອງພາຣາຕສີ ຕາຍຈາກນັ້ນໄປເກີດທ່າສຸປປາຣກະ ຕາຍຈາກນັ້ນໄປເກີດທ່າຄາວີຣະ ຕາຍຈາກນັ້ນໄປເກີດເມືອງອນຸຣາຊບຸຣີ ຕາຍຈາກນັ້ນໄປເກີດບ້ານເພກກັນຕຄາມ ຂ້າພເຈົ້າໄດ້ເກີດເຖິງ ໑໓ ອັຕຕພາພອັນສູງໆ ຕໍ່ໆ ຢ່າງນີ້ ດ້ວຍເຫຕຸດັ່ງນີ້

---

[16] **ທມິຊ** (ປ. ທມິຊ ອ່ານວ່າ "ທະ-ມິ-ລະ" ເປັນແບບລາວວ່າ "ທະ-ມິນ") ນ. ຊົນຊາຕິນຶ່ງຢູ່ໃນອິນເດັຽທາງພາຄໃຕ້. ວ. ຮ້າຍ, ດຸຮ້າຍ

[17] **ປກຕິ** (ປ. ປກຕິ ອ່ານວ່າ "ປະ-ກະ-ຕິ" ອອກສຽງເປັນພາສາລາວວ່າ "ປົກກະຕິ"

ບັດນີ້ ຂ້າພເຈົ້າໄດ້ເກີດໃນອັຕຕກາພອັນອຸກກຣິບຜົແລ້ວ "ສພฺເພປິ ອປฺປມາເທນ ສມฺປາເທຖ" ຂໍທ່ານທັ້ງຫລາຍແມ້ທັ້ງຫມົດ ຈົ່ງຍັງລັມມ໌ທີ່ເປັນກຸສົລທັ້ງຫລາຍໃຫ້ເຖິງພ້ອມດ້ວຍຄວາມບໍ່ປຣະມາທເຖີດ ດັ່ງນີ້ ໄດ້ຍັງບໍຣິບັທ ໔ ໃຫ້ສັງເວຊສລົດໃຈ ແລ້ວກໍປຣິນິພພານ

ຕາມຕົວຢ່າງນີ້ ພໍຊີ້ໃຫ້ເຫັນໄດ້ເດັ່ນຊັດແລ້ວວ່າ ຜູ້ທີ່ຈະເຣີຍສມຖກັມມການຈົນໄດ້ຊານແລ້ວ ຍັງເມືອໄປເກີດໃນອບາຍກູມິໄດ້ອີກ ທັ້ງນີ້ກໍເປັນເພາະກິເລສຍັງມີຢູ່ ກາຣຈະເຣີຍສມຖກັມມການຈົນໄດ້ຊານນັ້ນ ເປັນພຽງຂົມກິເລສໄວ້ຊົ່ວຄຣາວເທົ່ານັ້ນ ຍັງລະກິເລສບໍ່ໄດ້ໂດຍເດັດຂາດ ຈຶ່ງຈຳເປັນຕ້ອງເມືອມາສູ່ອບາຍກູມິໄດ້ອີກ ດັ່ງຫລັກການໃນວິກັງຄບາລີຮັບຮອງຄວາມຂໍ້ນີ້ໄວ້ວ່າ

ອຸກฺຂິຕฺຕາ ປຸຄฺຄເຕເຊນ ກາມຣູປຄຕິ ຄຕາ

ຄວຄฺຄມฺປິ ຈ ສມฺປຕฺຕາ ປຸນ ຄຈฺຈນฺຕິ ທຸຄฺຄຕິ

ດ້ວຍອຳນາຈແຫ່ງບຸຄທີ່ຕົນໄດ້ກະເຮັດໄວ້ແລ້ວ ສັຕວ໌ທັ້ງຫລາຍຈຶ່ງໄດ້ໄປເກີດໃນພຣົຫ໌ມໂລກ ເຖິງກວັຄພຣົຫ໌ມ ແລ້ວກໍຍັງເມືອມາສູ່ທຸຄຕິໄດ້ອີກ ດັ່ງນີ້

ເພາະດັ່ງນັ້ນ ຂໍສາລຸຊົນທັ້ງຫລາຍ ຈົ່ງຢ່າພາກັນປຣະມາທແລະນອນໃຈຢູ່ ພຽງແຕ່ເດີນທາງສາຍທີ່ ໔, ໕, ໖, ກໍຍັງບໍ່ສາມາຖຈະພາເຮົາພົ້ນຈາກກິເລສແລະກອງທຸກຂ໌ໄດ້ ຍັງບໍ່ພົ້ນໄປຈາກອບາຍກູມິໄດ້ຢ່າງແນ່ນອນ ເຜີຍາມໃດ ພລາດຍາມໃດ ປຣະມາທຍາມໃດ ຫມົດບຸຄຍາມໃດ ເມື່ອນັ້ນ ເຮົາກໍຈະຕ້ອງຢ້ອນເມືອມາສູ່ອບາຍໄດ້ອີກ ດັ່ງຕົວຢ່າງທີ່ໄດ້ເລົ່າໃຫ້ຟັງມາແລ້ວນັ້ນເປັນພຍານ ເຮົາຍັງຮູ້ສຶກວ່າ ມີປະຕູອບາຍຄອຍໄວ້ທຸກຍາມ ***ໃນເມື່ອເຮົາປຣະມາທຂາດສຕິ ເພາະເຮົາປິດປະຕູອບາຍຍັງບໍ່ໄດ້ ຈົ່ງພາກັນຮີບຖໍ່ຮີບພາຍຕະເວັນຈະສວຍ ຕລາດຈະວາຍ ສາຍບົວຈະເນົ່າ ຖ້າຈະຖໍ່ຈະພາຍກໍຈົ່ງຮີບພາກັນແກ້ໂຊ່ເສັ້ງແຕ່ບັດນີ້ ຖ້າໂຊ່ບໍ່ແກ້ ກຸຄແຈບໍ່ໄຂ ເຮົາກໍພາຍເຮືອໄປບໍ່ໄດ້ເປັນແນ່ໆ ຈົ່ງພາຍໄປເຖີດ ຖໍ່ໄປເຖີດ ພາຍໄປເຖີດ ຖໍ່ໄປເຊິ່ງສຳເກົາທອງລຳນີ້ຈົນກວ່າຈະເຖິງພຣະນິພພານ ຈະໄດ້ມີຄວາມສຸຂສຳຣາຄຢ່າງທີ່ສຸດ....***

ບົດ ໗ ທາງໄປນິພພານ

ນິພຸພານໍ ປຣມໍ ສຸຂໍ ພຣະນິພພານເປັນສຸຂຢ່າງຍອດ ຄືເປັນຍອດສຸຂ

ຄໍາວ່າ **"ຍອດ"** ນັ້ນມີຢູ່ ໗ ຄື:

1. ຍອດໂຣຄ ໄດ້ແກ່ຄວາມຫິວ **ຊິພຈຸຈາ ປຣມາໂຣຄາ** ຄວາມຫິວເປັນໂຣຄຢ່າງຍອດ
2. ຍອດລາກ ໄດ້ແກ່ຄວາມບໍ່ມີໂຣຄ **ອາໂຣຄຸຢາປຣມາ ລາກາ** ຄວາມບໍ່ມີໂຣຄເປັນຍອດລາກ
3. ຍອດຊັພຍ໌ ໄດ້ແກ່ຄວາມສັນໂດຫ ຄືຮູ້ຈັກພໍ **ສນຸຕຸຝຸຖີ ປຣມໍ ຘນໍ** ຄວາມສັນໂດຫເປັນຍອດຊັພຍ໌
4. ຍອດຍາຕິ ໄດ້ແກ່ຄວາມຄຸ້ນເຄີຍ **ວິສຸສາສາ ປຣມາ ຍາຕິ** ຄວາມຄຸ້ນເຄີຍເປັນຍາຕິຢ່າງຍອດ
5. ຍອດທຸກຂ໌ ໄດ້ແກ່ຮູປນາມ **ສງຂາຣາ ປຣມາ ທຸກຂາ** ສັງຂາຄືຮູປກັບນາມເປັນທຸກຂ໌ຢ່າງຍອດ
6. ຍອດສຸຂ ໄດ້ແກ່ພຣະນິພພານ **ນິພຸພານໍ ປຣມໍ ສຸຂໍ** ພຣະນິພພານເປັນສຸຂຢ່າງຍອດ
7. ຍອດຄົນ ໄດ້ແກ່ຄົນບໍ່ເຊື່ອຄຸຕລັມມ໌ທີ່ຕົນແທງຕລອດແລ້ວ ດ້ວຍຄໍາເວົ້າຂອງຄົນອື່ນ ຄົນຜູ້ບັຣລຸນິພພານ ຄົນຕັດທີ່ຕໍ່ ຄົນຫາມິດໂອກາສທີ່ຈະມາເກີດອີກ ຄົນທີ່ເຫມິດຕັຕຫາ ນີ້ແຫລະຄືຍອດຄົນສົມດັ່ງພຣະບາລີໃນພຣະໄຕຣປິຝົກຣັບຮອງໄວ້ວ່າ

ອສຸສທຸໂລ ອກຕຍຸ ຍູ ຈ ສນຸລິຈຸເຈໂທ ຈ ໂຢ ນໂຣ

ຫຕາວກາໂສ ວນຸຕາໂສ ສ ເວ ອຸຕຸຕມໂປຣິໂສໆ

ແປລວ່າ ບຸຄຄົລຜູ້ບໍ່ເຊື່ອຄຸຕລັມມ໌ທີ່ຕົນແທງຕລອດແລ້ວ ດ້ວຍຖ້ອຍຄໍາຂອງຄົນເຫລົ່າອື່ນ ໑ ບຸຄຄົລຜູ້ຮູ້ພຣະນິພພານອັນປັຈຈັຍອັນໃດໆ ປຸງແຕ່ງບໍ່ໄດ້ແລ້ວ ໑ ບຸຄຄົລຜູ້ຕັດທີ່ຕໍ່ຄືວັຝຝສົງສາຣໄດ້ແລ້ວ ໑ ບຸຄຄົລຜູ້ບໍ່ມີໂອກາສທີ່ຈະເນືອມາເກີດອີກ ໑ ບຸຄຄົລຜູ້ທີ່ສິ້ນຫວັງຄືຫມົດຢາກ ໄດ້ແກ່ສິ້ນຕັຕຫາ ໑ ນັ້ນແລຊື່ວ່າເປັນຍອດຄົນ ດັ່ງນີ້

ທາງໄປນິພພານ ໄດ້ແກ່ ວິປັສສນາກັມມຖານ

ຄຳວ່າ "**ນິພພານ**" ແປລວ່າ **ດັບກິເລສໆ** ກິເລສທີ່ນິພພານຈະດັບນັ້ນມີຢູ່ ໑໔ ຄື ໂລກະ ໗ ໂທສະ ໔ ໂມຫະ ໔

ເຖິງນິພພານເທື່ອທີ່ ໑ ລະກິເລສໄດ້ ໕ ຄື ໂລກະ ໔ ໂມຫະ ໑

ເຖິງນິພພານເທື່ອທີ່ ໔ ທຳກິເລສທີ່ເຫລືອ ໆ ນັ້ນ ໃຫ້ເບົາບາງລົງ

ເຖິງນິພພານເທື່ອທີ່ ໓ ລະໂທສະໄດ້ ໔

ເຖິງນິພພານເທື່ອທີ່ ໔ ລະກິເລສໄດ້ອີກ ໕ ຄື ໂລກະ ໔ ກັບໂມຫະ ໑

ວິປັສສນາກັມມຖານ

ວິປັສສນາກັມມຖານ ແປລວ່າ ກັມມຖານເປັນອຸບາຍທຳໃຈໃຫ້ເກີດປັญญາຮູ້ແຈ້ງເຫັນຈິງຕາມຄວາມເປັນຈິງ ຄືເຫັນປັຈຈຸບັນທັມມ໌ ເຫັນຮູປນາມ ເຫັນພຣະໄຕຣລັກษณ໌ ເຫັນມັຄຄ໌ຜົລນິພພານ

ສ່ວນຄຳວ່າ "**ກັມມຖານ**" ນັ້ນແປລວ່າ ການກະທຳທີ່ເປັນເຫຕຸໃຫ້ໄດ້ບັຣລຸຄຸຓວິເສษ ຄື ฌານ ມັຄຄ໌ ຜົລ ນິພພານ

ຄຳວ່າ "**ກັມມຖານ**" ເປັນຄຳກາງໆ ຍັງບໍ່ສະເພາະເຈາະຈົງໄປວ່າເປັນສມຖະຫຣືວິປັສສນາ ຖ້າຈະໃຫ້ເປັນ **ສຖມ** ກໍເຕີມ ຄຳວ່າ ສມຖ ລົງໄປຂ້າຫນ້າສຳເຣັຈຮູປເປັນ ສມຖກັມມຖານ ຖ້າຈະໃຫ້ເປັນ ວິປັສສນາ ກໍໃຫ້ເຕີມຄຳວ່າ ວິປັສສນາ ລົງຂ້າງຫນ້າເປັນ ວິປັສສນາກັມມຖານ

ອາຣົມຓ໌ຂອງວິປັສສນາກັມມຖານ ໄດ້ແກ່ ຂັນธ໌ ໕ ອາຍຕນະ ໑໔ ธາຕຸ ໑໗ ອິນທຣີຍ໌ ໔໔ ອຣິຍສັຈ ໔ ປຓິຈຈສມຸປບາທ ໑໔ ຫຍໍ້ໃຫ້ສັ້ນ ໄດ້ແກ່ ຮູປນາມ ຄື ກາຍກັບໃຈ

ການຈະເຣີญວິປັສສນາກັມມຖານນັ້ນ ເຖິງຈະມີຄວາມຮູ້ທາງດ້ານປຣິຍັຕິດີຢ່າງໃດກໍຕາມບໍ່ສາມາຖຈະລົງມືປຜິບັຕິ ດ້ວຍຕົນເອງໃຫ້ໄດ້ຜົລດີໄດ້ ເບິ່ງພຣະຕຸຈຈະໂປກີລະ ເປັນຕົວຢ່າງກໍແລ້ວກັນ ຂນາດຮຽນຈົບພຣະໄຕຣປີຜົກກໍຕ້ອງອາສັຍ ສາມເຕຣນ້ອຍອາຍຸແດ່ ໆ ຂອບເທົ່ານັ້ນເປັນພຣະອາຈາຣຍ໌ສອນໃຫ້ ທ່ານຈຶ່ງໄດ້ສຳເຣັຈເປັນພຣະອຣຫັນຕ໌ ດັ່ງນັ້ນທ່ານຜູ້ມຸ່ງປຜິບັຕິເພື່ອໃຫ້ໄດ້ຜົລອັນສູງແທ້ໆ ແລ້ວ ຕ້ອງມີຄຣູບາອາຈາຣຍ໌ຄອຍສອບອາຣົມຓ໌ ຄອຍຕໍ່ບົທຮຽນໃຫ້ ຈົນກວ່າຈະໄດ້ຟັງເທສນ໌ລຳດັບญາຓ ຮູ້ແນວທາງແລ້ວນຳໄປປຜິບັຕິດ້ວຍຕົນເອງໄດ້ໃນໂອກາສຕໍ່ໄປ ເຖິງຈະໄປຢູ່ໃນ ບ່ອນໃດໆ ກໍສາມາຖປຜິບັຕິໄດ້ເພາະຮູ້ວິธີແລ້ວ ຕາມທັມມ໌ນຽມຂອງຜູ້ປຜິບັຕິ ຈຳເປັນຈະຕ້ອງຂຶ້ນກັມມຖານ ຫຣືຂຶ້ນຄຣູ ເສັຽກ່ອນ ໂບຣາຓເອີ້ນວ່າ ຄຣອບວິຊາໃຫ້

ວິທີສມາທານພຣະກັມມຖານ

໑. ຖວາຍສັກກາຣະຕໍ່ພຣະອາຈາຣຍ໌ ຜູ້ໃຫ້ພຣະກັມມຖານແກ່ຕົນກ່ອນ

໒. ຈຸດທູປທຽນບູຊາພຣະຣັຕນຕຣັຍ

໓. ຖ້າເປັນພຣະໃຫ້ສະແດງອາບັຕິກ່ອນ ຖ້າເປັນອຸບາສົກອຸບາສິກາ ໃຫ້ສມາທານສີລ ໕ ຫຣືສີລ ໗ ກ່ອນ

໔. ມອບກາຍຖວາຍຕົວຕໍ່ພຣະຣັຕນຕຣັຍວ່າ

ອິມາຫໍ ພຄວາ ອັຕຕພາວໍ ຕຸມ຺ຫາກໍ ປຣິຈຸຈຊາມິ

ຂ້າແຕ່ສົມເດັຈພຣະຜູ້ມີພຣະພາຄເຈົ້າ ຂ້າພເຈົ້າຂໍມອບກາຍຖວາຍຕົວຕໍ່ພຣະຣັຕນຕຣັຍ ເພື່ອຈະເຈີຣກັມມຖານ

໕. ມອບກາຍຖວາຍຕົວຕໍ່ພຣະອາຈາຣຍ໌

ອິມາຫໍ ອາຈຣິຍ ອຕຸຕພາວໍ ຕຸມ຺ຫາກໍ ປຣິຈຸຈຊາມິ

ຂ້າແຕ່ພຣະອາຈາຣຍ໌ຜູ້ຈະເຣີນ ຂ້າພເຈົ້າຂໍມອບກາຍຖວາຍຕົວຕໍ່ພຣະອາຈາຣຍ໌ ເພື່ອຈະເຣີນກັມມຖານ

໖. ຂໍພຣະກັມມຖານ

ນິພຸພານສຸສ ເມ ພນຸເຕ ສຈຸຈິກຣຓຕຸຖາຍ ກມຸມຏຖານໍ ເທຫີ

ຂ້າແຕ່ທ່ານຜູ້ຈະເຣີນ ຂໍທ່ານຈົ່ງ ໃຫ້ກັມມຖານແກ່ຂ້າພເຈົ້າເພື່ອບັຣລຸ ມັຄຄ໌ ຜົລ ນິພພານ

໗. ແຜ່ເມຕຕາ

ອຫໍ ສຸຂິໂຕ ໂຫມິ ນິທຸທຸກໂຂ ໂຫມິ ອເວໂຣ ໂຫມິ ອພຸຢາປຊຸໂຊ ໂຫມິ ອນີໂພ ໂຫມິ ສຸຂີອຕຸຕານໍ ປຣິຫຣາມິ

ຂໍໃຫ້ຂ້າພເຈົ້າມີຄວາມສຸຂ ປຣາສຈາກຄວາມທຸກຂ໌ ບໍ່ມີກັຍບໍ່ມີເວຣ ບໍ່ມີຄວາມບຽດບຽນເຊິ່ງກັນແລະກັນ ບໍ່ມີຄວາມທຸກຂ໌ກາຍ ທຸກຂ໌ໃຈ ຂໍໃຫ້ມີຄວາມສຸຂຮັກສາຕົນຢູ່ເຖີດ

ສພຸເພ ສຕຸຕາ ສຸຂິຕາ ໂຫນຸຕຸ ນິທຸທຸກຂາ ໂຫນຸຕຸ ອເວຣາ ໂຫນຸຕຸ ອພຸຢາປຊຸຊາ ໂຫນຸຕຸ ອນີພາ ໂຫນຸຕຸ ສຸຂີ ອຕຸຕານໍ ປຣິຫຣນຸຕຸ

ຂໍໃຫ້ສັຕວ໌ທັ້ງຫລາຍທຸກຕົວຕົນ ຈົ່ງມີຄວາມສຸຂ ປຣາສຈາກຄວາມທຸກຂ໌ ບໍ່ມີກັຍ ບໍ່ມີເວຣ ບໍ່ມີຄວາມບຽດບຽນເຊິ່ງກັນແລະກັນ ບໍ່ມີຄວາມທຸກຂ໌ກາຍທຸກຂ໌ໃຈ ຂໍໃຫ້ມີຄວາມສຸຂຮັກສາຕົນຢູ່ເຖີດ

๗. ຈະເຣີນມໍຣຕານຸສສຕິ

ອທຸລຸວໍ ເມ ຊີວິຕໍ ລຸວໍ ມຣຕໍ ອວສ໌ສໍ ມຢາ ມຣິຕພຸພໍ ມຣຕປຣິໂຢສານໍ ເມ ຊີວິຕໍ ຊີວິຕ ເມວ ອນິຍຕໍ ມຣຕໍ ນິຢຕໍ

ຊີວິຕຂອງເຮົາເປັນຂອງບໍ່ຍັ້ງຍືນ ຄວາມຕາຍເປັນຂອງຍັ້ງຢືນ ເຮົາຈະຕ້ອງຕາຍແນ່ ເພາະວ່າຊີວິຕຂອງເຮົາມີຄວາມຕາຍເປັນທີ່ສຸດ ຊີວິຕເປັນຂອງບໍ່ແນ່ນອນ ຄວາມຕາຍເປັນຂອງແນ່ນອນແທ້ ເປັນໂຊຄອັນດີທີ່ເຮົາໄດ້ມີໂອກາສມາສມາທານພຣະກັມມຖານ ໓ ບັດນີ້ ບໍ່ເສັຽທີທີ່ໄດ້ເກີດມາເປັນມນຸษย໌ພົບພຣະພຸທສາສນາ

໘. ຕັ້ງສັຈຈອະທິษฐาน

ເຢເນວ ຢນຸຕິ ນິພຸພານໍ ພຸທຸລາ ເຕສญฺจ สาวกา

ເອກາຍເນນ ມຄຸເຄນ ສຕິປฏฐานสญฺญินา ฯ

ພຣະພຸທສເຈົ້າແລະເຫລົ່າພຣະອຣິຍສາວົກ ຍ່ອມດຳເນີນໄປສູ່ພຣະນິພພານດ້ວຍຫົນທາງສາຍນີ້ ອັນເປັນທາງສາຍເອກ ເຊິ່ງນັກປຣາຊຍ໌ຣາຊບັຕຫົຕທັ້ງຫລາຍຮູ້ທົ່ວເຖິງກັນແລ້ວວ່າ ໄດ້ແກ່ ສຕິປັฏฐาน ໔ ฯ

ຂ້າພເຈົ້າຂໍຕັ້ງສັຈຈະອະທິษฐานປຜິນາຕົນຕໍ່ພຣະຣັຕນຕຣັຍ ຕໍ່ຄຣູອາຈາຣຍ໌ວ່າ ຈະຕັ້ງອົກຕັ້ງໃຈປະພຶຕປຜິບັຕິແທ້ໆ ເທົ່າທີ່ຕົນສາມາຖ ເທົ່າທີ່ຕົນມີໂອກາສຈະປະພຶຕປຜິບັຕິໄດ້ ເພື່ອບູຊາພຣະຣັຕນຕຣັຍ

໑໐. ຕັ້ງຄວາມປັຕຖນາ

ອິມາຍ ຘມຸມານຸຘມຸມປຜິປຕຸຕິຢາ ຣຕນຕຸຕຍໍ ປູເຊມິ

ຂ້າພເຈົ້າຂໍບູຊາພຣະຣັຕນຕຣັຍດ້ວຍກາຣປຜິບັຕິທັມມ໌ສົມຄວຣແກ່ທັມມ໌ນີ້ ດ້ວຍສັຈຈວາຈາທີ່ໄດ້ກ່າວອ້າງນີ້ ຂໍໃຫ້ຂ້າພເຈົ້າໄດ້ສຳເຣັຈຜົລສົມຄວາມປັຕຖນາໃນເວລາອັນບໍ່ຊ້າດ້ວຍເທີ້ນ

໑໑. ສູຕພຣະພຸທຄຸຕ ພຣະທັມມ໌ຄຸຕ ພຣະສັງฆຄຸຕ

໑໒. ຖ້າຢູ່ປ່າ ຢູ່ໃນຖ້ຳ ຢູ່ໃນກູ ໃຫ້ສູຕກຣະນີຍເມຕຕສູຕຣ໌ແລະສູຕຂັນຘປຣິຕຣ໌ນຳ

ວິຘີປຏິບັຕິວິປັສສນາກັມມຐານ...ມື້ທໍາອິດ

ມື້ທໍາອິດ ໃຫ້ກັມມຐານໄປປຏິບັຕິ ໓ ຄື

໑. ຍ່າງຈົງກຣົມ

ໃຫ້ຢືນຕົວຕົງ ເອົາມືຂວາໄຂວ້ທັບມືຊ້າຍກໍໄດ້ ວາງໄວ້ຕົງໆ ກໍໄດ້ ໄຂວ້ຫລັງກໍໄດ້ຕາມແຕ່ຖນັດ ສ່ວນຫລາຍເອົາໄວ້ຂ້າງໜ້າ ທອດສາຍຕາໄປປຣະມາຓ ໔-໕ ສອກ ໃຫ້ມືນຕາ ຢ່າຫລັບຕາ ໃຫ້ສຕິຈັບຢູ່ທີ່ຣ່າງກາຍ ກາວນາວ່າ ຢືນໜໍໆ ໓ ເທື່ອ ຕໍ່ນັ້ນໄປໃຫ້ສຕິຈັບຢູ່ທີ່ສົ້ນຕີນ ຍ່າງຊ້າໆ ກາວນາຢູ່ໃນໃຈວ່າ "ຂວາ ຍ່າງ ໜໍ" ຂຓະທີ່ໃຈຄິດວ່າ ຂວາ ຕ້ອງຍົກສົ້ນຕີນຂ້າງຂວາຂຶ້ນໃຫ້ພ້ອມກັນ ຕີນທີ່ຍົກກັບໃຈທີ່ຄິດຕ້ອງໃຫ້ຕົງກັນ ຂຓະວ່າ ຍ່າງ ຕ້ອງຍ້າຍຕີນໄປຢ່າງຊ້າໆ ລາກສຽງຍາວໆ ແລ້ວຫຍຸດໜ້ອຍນຶ່ງຂຓະວ່າ ໜໍ ຕີນຕ້ອງລົງເຖິງພື້ນພ້ອມກັນ ເວລາຍົກຕີນຊ້າຍກໍເໝືອນກັນກາວນາໃນໃຈວ່າ "ຊ້າຍ ຍ່າງ ໜໍ" ເຊັ່ນດຽວກັນ

ໃຫ້ສົ້ນຕີນ ກັບ ປາຍຕີນ ຫ່າງກັນປຣະມາຓສັກ ໑-໒ ນິ້ວ ເມື່ອຍ່າງສຸດສາດ ສຸດຫົນທາງ ຫຣືສຸດສຖານທີ່ ໃຫ້ເອົາຕີນຄຽງກັນ ແລ້ວຫຍຸດຍ່າງ ກາວນາໃນໃຈວ່າ "ຢືນໜໍ ຢືນໜໍ ຢືນໜໍ" ວ່າຊ້າໆ ປຣະມາຓສັກ ໓ ເທື່ອ ຫຣື ໔-໕ ເທື່ອ ຂຓະນັ້ນໃຫ້ສຕິຢູ່ທີ່ຣ່າງກາຍ ຢ່າໃຫ້ອອກໄປນອກຣ່າງກາຍ ແລ້ວເມືອຈະເມືອຂ້າງຂວາຫຣືຂ້າງຊ້າຍກໍໄດ້ ຖ້າເມືອຂ້າງຂວາ ເວລາເມືອສົ້ນຕີນຕິດຢູ່ກັບພື້ນ ຍົກປາຍຕີນໃຫ້ພົ້ນພື້ນແລ້ວໝຸນໄປຊ້າໆ ພ້ອມກັບກາວນາໃນໃຈວ່າ "ເມືອໜໍ ເມືອໜໍ ເມືອໜໍ" ໃຫ້ໝຸນໄປປຣະມາຓສັກ ໔-໕ ນິ້ວ ສ່ວນຕີນຊ້າຍໃຫ້ຍົກຂຶ້ນພົ້ນພື້ນແລ້ວໝຸນຕາມໄປພ້ອມກັນກາວນາວ່າ ເມືອໜໍ ເມືອໜໍ ເມືອໜໍ ເຊັ່ນດຽວກັນ ໃຫ້ໝຸນເມືອໄປຢ່າງນີ້ປຣະມາຓ ໓ ຫຣື ໔ ຄູ່ ກໍຈະພໍດີກັບຄວາມຕ້ອງການທີ່ຈະຫຍຸດ ແລ້ວຢືນຕົງຢູ່ກັບທີ່ ກາວນາວ່າ ຢືນໜໍ ຢືນໜໍ ຢືນໜໍ ວ່າ ໓-໔ ເທື່ອ ແລ້ວຍ່າງຈົງກຣົມຕໍ່ໄປໂດຍ ກາວນາວ່າ ຂວາ ຍ່າງ ໜໍ ຊ້າຍ ຍ່າງ ໜໍ

ໃຫ້ຍ່າງເມືອໄປເມືອມາຢູ່ຢ່າງນີ້ ປຣະມາຓ ໓໐ ນາທີ ຫຣື ໑ ຊົ່ວໂມງ ເມື່ອຍ່າງພໍສົມຄວຣແກ່ເວລາແລ້ວ ກໍໃຫ້ນັ່ງຕິດຕໍ່ກັນໄປເລີຍ ຈຶ່ງຈະບໍ່ຂາດຣະຍະ ສຕິ ສມາຘິ ປັຌຌາ ຈຶ່ງຈະແກ່ກລ້າດີ

໒. ນັ່ງ

ໃຫ້ຕຽມຈັດອາສນະສໍາຣັບນັ່ງໄວ້ກ່ອນຍ່າງຈົງກຣົມ ເວລານັ່ງໃຫ້ຄ່ອຍໆ ຫຍໍ່ລົງ ເມື່ອຍ່າງຄົບກໍາໜົດແລ້ວໃຫ້ ນັ່ງລົງພ້ອມກັບກາວນາວ່າ "ນັ່ງໜໍ ນັ່ງໜໍ ນັ່ງໜໍ" ໃຫ້ກາວນາຢ່າງນີ້ເຣື່ອງໄປຈົນກວ່າຈະນັ່ງແລ້ວຮຽບຮ້ອຍ

ວິຘີນັ່ງ ໃຫ້ນັ່ງຂັດສມາຘິ ຄື ຕີນຂາຂວາທັບຂາຊ້າຍ ເອົາມືຂວາທັບມືຊ້າຍ ຕັ້ງກາຍໃຫ້ຕົງດໍາຣົງສຕິໃຫ້ໝັ້ນ ຖ້າຈໍາເປັນຈະນັ່ງຕັ່ງ ຫຣືນັ່ງພັບພຽບກໍໄດ້

ນັ່ງຮຽບຮ້ອຍແລ້ວໃຫ້ຫລັບຕາ ເອົາສຕິມາຈັບຢູ່ທີ່ທ້ອງເຫນືອສະບືປຣະມາຓ ໔ ນີ້ວ ເວລາຫາຍໃຈເຂົ້າທ້ອງພອງ ໃຫ້ກາວນາຕາມອາກາຣພອງວ່າ "ພອງນໍ່" ໃຈທີ່ຄຶດກັບທ້ອງທີ່ພ້ອງຕ້ອງໃຫ້ທັນກັນ ໃຫ້ຕິງກັນພໍດີ ຢ່າໃຫ້ກ່ອນຫຣືຫລັງກັນ ຈຶ່ງຈະໄດ້ປັຈຈຸບັນດີ ເວລາຫາຍໃຈອອກທ້ອງຍຸບ ໃຫ້ກາວນາວ່າ "ຍຸບນໍ່" ໃຈທີ່ຄຶດກັບທ້ອງທີ່ຍຸບຕ້ອງໃຫ້ທັນກັນຢ່າໃຫ້ກ່ອນຫຣືຫລັງກັນ

ຂໍ້ສໍາຄັນ ໃຫ້ຈິຕຈັບຢູ່ທີ່ອາກາຣພອງ ອາກາຣແວບຂອງທ້ອງເທົ່ານັ້ນ ຢ່າໄປເບິ່ງລົມທີ່ດັງແລະຢ່າເບັ່ງທ້ອງ ໃຫ້ນັ່ງກາວນາຢ່າງນີ້ຕລອດໄປ ຢ່າງຕໍ່າປຣະມາຓ ໓໐-໔໐ ນາທີ ຢ່າງສູງປຣະມາຓ ໑ ຊົ່ວໂມງ ຫຣືເກີນກວ່ານັ້ນກໍ່ຍິ່ງດີ

໓. ເວທນາ

ເວທນາ ຄື ຄວາມສະບາຍ ຄວາມບໍ່ສະບາຍ ຫຣືເສີຍໆ ໃນຂຓະທີ່ນັ່ງຢູ່ນັ້ນ ຖ້າເວທນາຢ່າງໃດຢ່າງນຶ່ງເກີດຂຶ້ນ ເຊັ່ນ ເຈັບ ປວດ ເມື່ອຍ ຄັນ ເປັນຕົ້ນ ໃຫ້ປ່ອຍ ພອງ ຍຸບ ແລ້ວເອົາສຕິໄປກໍາຫນົດທີ່ເຈັບ ປວດ ເມື່ອຍ ຄັນ ເປັນຕົ້ນນັ້ນ ພ້ອມກັບກາວນາວ່າ ເຈັບນໍ່ໆ ຫຣື ປວດນໍ່ໆ ຫຣື ເມື່ອຍນໍ່ໆ ຫຣື ຄັນນໍ່ໆ ຕາມອາກາຣຂອງເວທນານັ້ນໆ ສຸດແທ້ແຕ່ເວທນາຢ່າງໃດຈະເກີດຂຶ້ນ ເມື່ອເວທນາຫາຍແລ້ວ ໃຫ້ເອົາສຕິເມືອໄປກໍາຫນົດທີ່ທ້ອງ ກາວນາວ່າ ພອງນໍ່ ຍຸບນໍ່ ຕໍ່ໄປອີກຈົນກວ່າຈະຄົບກໍາຫນົດເວລາທີ່ຕົນກໍາຫນົດໄວ້ ຫຣືທີ່ຕົນໄດ້ກະໄວ້

໔. ຈິຕ

ໃນເວລາທີ່ນັ່ງກໍາຫນົດຢູ່ນັ້ນ ຖ້າຈິຕຄິດເຖິງບ້ານ ຄຶດເຖິງຊັພຍ໌ສົມບັຕິ ຫຣືຄຶດເຖິງກິຈກາຣງານຕ່າງໆ ໃຫ້ເອົາສຕິກໍາຫນົດທີ່ຫົວໃຈ ພ້ອມກັບກາວນາວ່າ ຄຶດນໍ່ ຄຶດນໍ່ ຈົນກວ່າຈະຫຍຸດຄຶດ ເມື່ອຫຍຸດຄຶດແລ້ວ ໃຫ້ເມືອໄປກໍາຫນົດພອງນໍ່ ຍຸບນໍ່ ຕໍ່ໄປອີກ ແມ້ດີໃຈ ເສັຽໃຈ ໂກຣ ເປັນຕົ້ນ ກໍໃຫ້ໃຊ້ສຕິກໍາຫນົດທີ່ຫົວໃຈ ໂດຍທໍານອງດຽວກັນຢ່າງນີ້ ຄືຖ້າດີໃຈ ໃຫ້ກໍາຫນົດວ່າ ດີໃຈນໍ່ ດີໃຈນໍ່ ຖ້າເສັຽໃຈ ໃຫ້ກໍາຫນົດວ່າ ເສັຽໃຈນໍ່ ເສັຽໃຈນໍ່ ຖ້າໂກຣ ໃຫ້ກໍາຫນົດວ່າ ໂກຣນໍ່ ໂກຣນໍ່ ຈົນກວ່າຄວາມໂກຣນັ້ນຈະຫາຍໄປ ເມື່ອຄວາມໂກຣຫາຍໄປແລ້ວໃຫ້ເມືອໄປກໍາຫນົດ ພອງນໍ່ ຍຸບນໍ່ ຕໍ່ໄປອີກ ຈົນກວ່າຈະຫມົດເວລາ

໕. ສຽງ

ໃນຂຓະທີ່ນັ່ງກໍາຫນົດຢູ່ນັ້ນ ຖ້າມີສຽງດັ່ງຫນວກຫູ ໃຫ້ໃຊ້ສຕິກໍາຫນົດທີ່ຫູ ກາວນາວ່າ ໄດ້ຍິນນໍ່ ໄດ້ຍິນນໍ່ ຈົນກວ່າຈະຫາຍຫນວກຫູ ເມື່ອຫາຍຫນວກຫູແລ້ວ ໃຫ້ເມືອໄປກໍາຫນົດ ພອງນໍ່ ຍຸບນໍ່ ຕໍ່ໄປ

໖. ນອນ

ເວລານອນ ໃຫ້ຄ່ອຍໆ ເອນຕົວລົງ ພ້ອມກັບກາວນາວ່າ ນອນນໍ່ ນອນນໍ່ ຈົນກວ່າຈະນອນຮຽບຮ້ອຍ ຂຓະທີ່ກາວນານັ້ນ ໃຫ້ສຕິຈັບຢູ່ທີ່ອາກາຣທີ່ເຄື່ອນໄຫວຂອງຮ່າງກາຍ ເມື່ອນອນຮຽບຮ້ອຍແລ້ວໃຫ້ເອົາສຕິມາໄວ້ທີ່ທ້ອງ

ພ້ອມກັບກາວນາວ່າ ພອງນໍ ຍຸບນໍ ຕໍ່ໄປ ຈົນກວ່າຈະຫລັບ ໃຫ້ຄອຍສັງເກຕໃຫ້ດີວ່າ ຈະຫລັບໄປຕອນ ພອງ ຫຣື ຫລັບໄປຕອນ ຍຸບ

ວັນທຳອິດ ໃຫ້ບົທຮຽນໄປປຜິບັຕິພຽງຫຍໍ້ໆ ເທົ່ານີ້ກ່ອນ ວັນຕໍ່ໄປ ໃຫ້ນັກປຜິບັຕິນັ້ນໄປສົ່ງອາຣົມຕ໌ ຄື ໃຫ້ໄປສອບກັມມຖານກັບພຣະອາຈາຣຍ໌ຜູ້ໃຫ້ກັມມຖານນັ້ນ

ວິຘີປຜິບັຕິວິປັສສນາກັມມຖານ...ວັນສອງ

ວັນທີ່ສອງ

ເມື່ອພຣະອາຈາຣຍ໌ສອບກັມມຖານແລ້ວ ໃຫ້ເພີ່ມບົທຮຽນ ໑ ບົທ ຄື ກຳຫນົດຕົ້ນໃຈ ຫມາຍຄວາມວ່າ ເມື່ອພຣະອາຈາຣຍ໌ໄດ້ສອບອາຣົມຕ໌ໂດຍລະອຽດ ນັບແຕ່ກາຍ່າງ ກາຣນັ່ງ ເວທນາ ຈິຕ ແລະກາຣນອນ ແລ້ວຖາມສກາວະຕໍ່ໄປ ເຊັ່ນ ຖາມວ່າພອງກັບຍຸບອັນໃດສັ້ນ ອັນໃດຍາວ ອັນໃດປາກົຜຊັດ ອັນໃດບໍ່ປາກົຜຊັດ ເປັນອັນດຽວກັນຫຣືເປັນຄົນລະອັນ ພອງນໍເທື່ອນຶ່ງມີຈັກຣະຍະ ເປັນຕົ້ນ ເມື່ອສອບແລ້ວແລ້ວຈຶ່ງເພີ່ມບົທຮຽນໄດ້

ກາຣເພີ່ມບົທຮຽນວັນນີ້ ໄດ້ແກ່ ໃຫ້ກຳຫນົດຕົ້ນໃຈ ຕົ້ນໃຈໄດ້ແກ່ ຄວາມຢາກນັ້ນເອງ ເຊັ່ນ ຢາກລຸກ ຢາກຢືນ ຢາກຍ່າງ ຢາກນັ່ງ ຢາກນອນ ຢາກຖ່າຍອຸຈຈາຣະ ຢາກຖ່າຍປັສສາວະ ເປັນຕົ້ນ ຈະຍົກມາພໍເປັນຕົວຢ່າງ ເຊັ່ນ ເວລາຈະລຸກ ໃຫ້ເອົາສຕິກຳຫນົດທີ່ຫົວໃຈ ກາວນາວ່າ ຢາກລຸກນໍ ຢາກລຸກນໍ ເວລາລຸກຂຶ້ນໃຫ້ກາວນາວ່າ ລຸກນໍ ລຸກນໍ ໆ ເວລາຈະຍ່າງ ໃຫ້ກາວນາວ່າ ຢາກຍ່າງນໍໆ ແລ້ວຈຶ່ງຍ່າງ ເວລາຍ່າງກໍໃຫ້ກາວນາວ່າ ຂວາ ຍ່າງ ນໍ ຊ້າຍ ຍ່າງ ນໍ ດັ່ງທີ່ເຄີຍ ປຜິບັຕິມາແລ້ວນັ້ນ

ຂໍ້ສຳຄັນ ເຮົາຈະເຮັດຫຍັງທຸກໆ ຢ່າງ ໃຫ້ກຳຫນົດຕົ້ນໃຈທຸກໆ ເທື່ອ ເວລາຈະຮັບປຣະທານອາຫາຣກໍໃຫ້ກາວນາວ່າ ຢາກນໍໆ ເວລາຮັບປຣະທານໃຫ້ກາວນາວ່າ ຮັບປຣະທານນໍໆ ຫຣືຈະຫຍໍ້ວ່າ ທານນໍໆ ດັ່ງນີ້ກໍໄດ້ ໃຫ້ເອົາສຕິໄວ້ທີ່ຄາງກະໄຕ ຂ້າງລຸ່ມ

ວັນທີ່ສາມ ຫຣື ວັນທີ່ ໔-໕

ໃຫ້ເພີ່ມບົທຮຽນໄດ້ອີກ ໑ ບົທ ຄື ເພີ່ມກາຣກຳຫນົດທວາຣທັ້ງ ໕ ໄດ້ແກ່ ກຳຫນົດທາງ ຕາ ຫູ ດັງ ລີ້ນ ກາຍ ມີວິຘີປຜິບັຕິດັ່ງນີ້

໑. ເວລາຕາເຫັນຮູປ ໃຫ້ຕັ້ງສຕິໄວ້ທີ່ຕາ ກາວນາວ່າ ເຫັນນໍ ເຫັນນໍ

໒. ເວລາຫູໄດ້ຍິນສຽງ ໃຫ້ຕັ້ງສຕິໄວ້ທີ່ຫູ ກາວນາວ່າ ໄດ້ຍິນນໍ ໄດ້ຍິນນໍ

໓. ເວລາດັງໄດ້ກລິ່ນ ໃຫ້ຕັ້ງສຕິໄວ້ທີ່ດັງ ກາວນາວ່າ ກລິ່ນນໍ ກລິ່ນນໍ

๔. ເວລາລີ້ນໄດ້ຣົສ ໃຫ້ຕັ້ງສຕິໄວ້ທີ່ລີ້ນ ກາວນາວ່າ ຣົສນໍ ຣົສນໍ

๕. ເວລາກາຍຖືກຕ້ອງ ເຢັນ ຮ້ອນ ອ່ອນ ແຂງ ໃຫ້ຕັ້ງສຕິໄວ້ທີ່ຕົງທີ່ຖືກ ກາວນາວ່າ ຖືກນໍ ໆ

ວັນຕໍ່ໄປ

ເມື່ອຍານທີ່ ໑-໔ ເກີດຂຶ້ນແລ້ວ ໃຫ້ເພີ່ມບົທຮຽນອີກ ໑ ບົທ ຄື ເພີ່ມຍ່າງຈົງກຣົມຣະຍະທີ່ ໔ ວ່າ "ຍົກນໍ ຍົກນໍ"

ທຸກເທື່ອທີ່ປະຕິບັຕິ ຕ້ອງໃຫ້ຍ່າງຈົງກຣົມຣະຍະທີ່ ໑ ກ່ອນ ຍ່າງປຣະມານ ໕໐ ນາທີ ແລ້ວຈຶ່ງຍ່າງຣະຍະທີ່ ໔ ປຣະມານ ໕໐ ນາທີ ຮວມເປັນ ໑ ຊົ່ວໂມງ ຈຶ່ງນັ່ງກາວນາວ່າ "ພອງນໍ ຍຸບນໍ" ຕໍ່ໄປ

ວັນຕໍ່ໄປ

ເວລາກຳຫນົດຍຸບນໍນັ້ນ ຖ້າຮູ້ສຶກວ່າຖິ້ມຈັງຫວະໄວ້ນານທ້ອງຈຶ່ງຈະພອງຂຶ້ນມາ ໃຫ້ເພີ່ມຄຳວ່າ ນັ່ງນໍ ຕໍ່ໄດ້ ຕອນທີ່ວ່ານັ່ງນໍນັ້ນ ຮູປນັ່ງປາກົຍໃນໃຈຄືສ່ອງກະຈົກເບິ່ງຕົວເອງ ເຫັນຊົ່ວແປບດຽວເທົ່ານັ້ນ

ເມື່ອຕໍ່ເຂົ້າກັບບົທຮຽນເດີມກໍຈະໄດ້ວິທີປະຕິບັຕິດັ່ງນີ້ ຄື

ກ. ເວລາຍ່າງຈົງກຣົມ ໄດ້ ໔ ຣະຍະ ຄື ຣະຍະທີ່ ໑ "ຂວາ ຍ່າງ ນໍ" "ຊ້າຍ ຍ່າງ ນໍ" ຣະຍະທີ່ ໔ "ຍົກ ນໍ ຫຢຽບ ນໍ" "ຍົກ ນໍ ຫຢຽບ ນໍ"

ຂ. ເວລານັ່ງປະຕິບັຕິ ຈະໄດ້ ໔ ຣະຍະ ຄື ຣະຍະທີ່ ໑ "ພອງ ນໍ ຍຸບ ນໍ" ຣະຍະທີ່ ໔ "ພອງນໍ ຍຸບນໍ ນັ່ງນໍ" (ຕອນຍຸບໄດ້ ໔ ຣະຍະ ເພາະ ເພີ່ມນັ່ງເຂົ້າໄປຕໍ່ຍຸບອີກ ໑ ບົທ)

ວັນຕໍ່ໄປ

ເມື່ອຍານທີ່ ໕-໔ ເກີດຂຶ້ນແລ້ວ ໃຫ້ເພີ່ມບົທຮຽນໄດ້ອີກ ໑ ບົທ ຄື ຍ່າງຈົງກຣົມຣະຍະທີ່ ໕ ວ່າ "ຍົກນໍ ຍ່າງນໍ ຫຢຽບນໍ"

ເມື່ອຕໍ່ເຂົ້າກັບບົທຮຽນເດີມ ກໍຈະໄດ້ວິທີປະຕິບັຕິດັ່ງນີ້ ຄື

ຣະຍະທີ່ ໑ ຂວາຍ່າງນໍ ຊ້າຍຍ່າງນໍ ໃຫ້ຍ່າງປຣະມານ ໑໐-໔໐ ນາທີ

ຣະຍະທີ່ ໔ ຍົກນໍ ຫຢຽບນໍ ໃຫ້ຍ່າງປຣະມານ ໑໐-໔໐ ນາທີ

ຣະຍະທີ່ ໕ ຍົກນໍ ຍ່າງນໍ ຫຢຽບນໍ ໃຫ້ຍ່າງປຣະມານ ໑໐-໔໐ ນາທີ

ວັນຕໍ່ໄປ

ເວລາກຳຫນົດ ພອງນໍ ຍຸບນໍ ນັ່ງນໍ ເມື່ອເຖິງຕອນທີ່ວ່າ ນັ່ງນໍ ນັ້ນ ຖ້າຍັງຖິ້ມຣະຍະຫ່າງຢູ່ ຄື ທ້ອງຍັງບໍ່ພອງຂຶ້ນມາງ່າຍ ໃຫ້ເພີ່ມ ຖືກນໍ ໄດ້ອີກ ຖ້າຜູ້ໃດກຳຫນົດພຽງ ພອງນໍ ຍຸບນໍ ກໍໄດ້ສມາທິດີຢູ່ແລ້ວ ບໍ່ຈຳເປັນຈະຕ້ອງເພີ່ມ ນັ່ງນໍ ຖືກນໍ

ລົງໄປອີກ ຫຣືດິນເຖົ້າ ດິນແກ່ ຫຣືເດັກນ້ອຍ ກໍບໍ່ຄວຣເພີ່ມ ແມ້ເວລາຍ່າງຈົງກຣົມ ຈະໃຊ້ພຽງ ຣະຍະທີ່ ໑ ວ່າ ຂວາຍ່າງນໍ ຊ້າຍຍ່າງນໍ ກໍໄດ້ ເວລານັ່ງຈະໃຊ້ພຽງ ພອງນໍ ຍຸບນໍ ກໍໄດ້ ເພາະຖ້າເພີ່ມບົທຣຽນຫລາຍກວ່ານັ້ນ ອາຈຈະເຮັດໃຫ້ຟັ່ນເຟືອນ ແລະຈະບໍ່ໄດ້ຜົລດີ

ເມື່ອເພີ່ມ ຖືກນໍ ເຂົ້າໄປອີກ ຈະໄດ້ວິລີປຜິບັຕິເຕັມທີ່ ດັ່ງນີ້ ຄື ພອງນໍ ຍຸບນໍ ນັ່ງນໍ ຖືກນໍ

ຄໍາວ່າ "ຖືກນໍ" ໃນທີ່ນີ້ ຫມາຍເອົາ ຖືກທີ່ກົ້ນກົບ ຖືກກັບພື້ນແລ້ວ ເອົາສຕິກໍາຫນົດລົງໄປຕົງທີ່ຖືກນັ້ນ ຍຸບ ນັ່ງ ຖືກ ທັ້ງ ໓ ຄໍານີ້ຕ້ອງໃຫ້ຢູ່ໃນຣະຍະດຽວກັນ ເມື່ອກາວນາວ່າ ຖືກນໍ ແລ້ວທ້ອງຈິງຈະພອງຂຶ້ນມາ

ເມື່ອຍາຕທີ່ ໕-6 ເກີດຂຶ້ນແລ້ວ ໃຫ້ເພີ່ມບົທຣຽນໄດ້ອີກ ໑ ບົທ ຄື ເພີ່ມຍ່າງຣະຍະທີ່ ໔ ດັ່ງນີ້ ຍົກສົ້ນນໍ ຍົກນໍ ຍ່າງນໍ ຫຢຽບນໍ

ເມື່ອຕໍ່ກັນເຂົ້າກັບບົທຣຽນເດີມ ກໍຈະໄດ້ວິລີປຜິບັຕິດັ່ງນີ້ ຄື

ຣະຍະທີ່ ໑ ຂວາຍ່າງນໍ ຊ້າຍຍ່າງນໍ ໃຫ້ຍ່າງປຣະມາຕ ໑໐-໑໕ ນາທີ

ຣະຍະທີ່ ໒ ຍົກນໍ ຫຢຽບນໍ ໃຫ້ຍ່າງປຣະມາຕ ໑໐-໑໕ ນາທີ

ຣະຍະທີ່ ໓ ຍົກນໍ ຍ່າງນໍ ຫຢຽບນໍ ໃຫ້ຍ່າງປຣະມາຕ ໑໐-໑໕ ນາທີ

ຣະຍະທີ່ ໔ ຍົກສົ້ນນໍ ຍົກນໍ ຍ່າງນໍ ຫຢຽບນໍ ໃຫ້ຍ່າງປຣະມາຕ ໑໐-໑໕ ນາທີ

ເມື່ອຍາຕທີ່ ໗ ຝ ໑໐ ເກີດຂຶ້ນແລ້ວ ໃຫ້ເພີ່ມບົທຣຽນໄດ້ອີກ ໑ ບົທ ຄື ເພີ່ມຍ່າງຈົງກຣົມຣະຍະທີ່ ໕ ດັ່ງນີ້ ຍົກສົ້ນນໍ ຍົກນໍ ຍ່າງນໍ ລົງນໍ ຖືກນໍ

ເມື່ອຕໍ່ກັນເຂົ້າກັບບົທຣຽນເດີມ ກໍຈະໄດ້ວິລີປຜິບັຕິດັ່ງນີ້ ຄື

ຣະຍະທີ່ ໑ ຂວາຍ່າງນໍ ຊ້າຍຍ່າງນໍ ໃຫ້ຍ່າງປຣະມາຕ ໑໐ ນາທີ

ຣະຍະທີ່ ໒ ຍົກນໍ ຫຢຽບນໍ ໃຫ້ຍ່າງປຣະມາຕ ໑໐ ນາທີ

ຣະຍະທີ່ ໓ ຍົກນໍ ຍ່າງນໍ ຫຢຽບນໍ ໃຫ້ຍ່າງປຣະມາຕ ໑໐ ນາທີ

ຣະຍະທີ່ ໔ ຍົກສົ້ນນໍ ຍົກນໍ ຍ່າງນໍ ຫຢຽບນໍ ໃຫ້ຍ່າງປຣະມາຕ ໑໐ ນາທີ

ຣະຍະທີ່ ໕ ຍົກສົ້ນນໍ ຍົກນໍ ຍ່າງນໍ ລົງນໍ ຖືກນໍ ໃຫ້ຍ່າງປຣະມາຕ ໒໐ ນາທີ

ເມື່ອຍາຕທີ່ ໑໑ ເກີດຂຶ້ນແລ້ວ ໃຫ້ເພີ່ມບົທຣຽນໄດ້ອີກ ໑ ບົທ ຄື ເພີ່ມຍ່າງຈົງກຣົມຣະຍະທີ່ ໖ ດັ່ງນີ້ ຍົກສົ້ນນໍ ຍົກນໍ ຍ່າງນໍ ລົງນໍ ຖືກນໍ ກົດນໍ ປຣະມາຕ ໑໐ ນາທີ

ເມື່ອຕໍ່ກັນເຂົ້າກັບບົທຣຽນເດີມ ກໍຈະໄດ້ວິລີປຜິບັຕິດັ່ງນີ້ ຄື

ຣະຍະທີ່ ໑ ຂວາຍ່າງນໍ ຊ້າຍຍ່າງນໍ ໃຫ້ຍ່າງປຣະມາຕ ໑໐ ນາທີ

ຣະຍະທີ່ ໔ ຍົກນໍ່ ຫຢຽບນໍ່ ໃຫ້ຢ່າງປຣະມາຓ ໑໐ ນາທີ

ຣະຍະທີ່ ໓ ຍົກນໍ່ ຍ່າງນໍ່ ຫຢຽບນໍ່ ໃຫ້ຢ່າງປຣະມາຓ ໑໐ ນາທີ

ຣະຍະທີ່ ໔ ຍົກສົ້ນນໍ່ ຍົກນໍ່ ຍ່າງນໍ່ ຫຢຽບນໍ່ ໃຫ້ຢ່າງປຣະມາຓ ໑໐ ນາທີ

ຣະຍະທີ່ ໕ ຍົກສົ້ນນໍ່ ຍົກນໍ່ ຍ່າງນໍ່ ລົງນໍ່ ຖືກນໍ່ ໃຫ້ຢ່າງປຣະມາຓ ໑໐ ນາທີ

ຣະຍະທີ່ ໖ ຍົກສົ້ນນໍ່ ຍົກນໍ່ ຍ່າງນໍ່ ລົງນໍ່ ຖືກນໍ່ ກົດນໍ່ ໃຫ້ຢ່າງປຣະມາຓ ໑໐ ນາທີ

ຖ້າມີເວລາຫລາຍ ໃຫ້ຢ່າງຣະຍະລະ ໑໐ ນາທີ ຣວມເປັນ ໑ ຊົ່ວໂມງ ແລ້ວຈຶ່ງນັ່ງສມາຘິ ຖ້າມີເວລານ້ອຍກໍໃຫ້ນັກປຕິບັຕິລົດລົງໄດ້ເອງ ຄື ຈະຢ່າງຣະຍະລະ ໕ ນາທີກໍໄດ້ ນ້ອຍກວ່ານັ້ນຫລາຍກວ່ານັ້ນກໍໄດ້ ມີຫລັກສຳຄັນຢູ່ວ່າ ຖ້າຢ່າງຫລາຍສມາຘິດີ ຖ້າຢ່າງນ້ອຍສມາຘິອ່ອນແລະໄດ້ຜົລຊ້າ

ສ່ວນການນັ່ງນັ້ນ ເພື່ອເປັນກາຝຶກ ສຕິ ສມາຘິ ປັຜຍາ ໃຫ້ແກ່ກລ້າ ໃຫ້ເຂັ້ມແຂ້ງ ໃຫ້ເພີ່ມຖືກໄດ້ອີກເຖິງ ໖ ແຫ່ງ ຄື

໑. ພອງນໍ່ ຍຸບນໍ່ ນັ່ງນໍ່ ຖືກນໍ່ (ຖືກກົ້ນກົບຂ້າງຂວາ)

໒. ພອງນໍ່ ຍຸບນໍ່ ນັ່ງນໍ່ ຖືກນໍ່ (ຖືກກົ້ນກົບຂ້າງຊ້າຍ)

໓. ພອງນໍ່ ຍຸບນໍ່ ນັ່ງນໍ່ ຖືກນໍ່ (ຖືກເຂົ່າຂ້າງຂວາ)

໔. ພອງນໍ່ ຍຸບນໍ່ ນັ່ງນໍ່ ຖືກນໍ່ (ຖືກເຂົ່າຂ້າງຊ້າຍ)

໕. ພອງນໍ່ ຍຸບນໍ່ ນັ່ງນໍ່ ຖືກນໍ່ (ຖືກຕາຕຸ່ມຂ້າງຂວາ)

໖. ພອງນໍ່ ຍຸບນໍ່ ນັ່ງນໍ່ ຖືກນໍ່ (ຖືກຕາຕຸ່ມຂ້າງຊ້າຍ)

ເປັນອັນໄດ້ຄວາມວ່າ ບົທຮຽນນີ້ຄົບບໍຣິບູຣຓ໌ແລ້ວ ຌາຓທີ່ ໑໑ ຄື ສັງຂາຣຸເປກຂາຌາຓ ກໍຈະແກ່ກລ້າຂຶ້ນມາພໍສົມຄວຣ ເມື່ອຌາຓນີ້ຄົບອົງຄ໌ ໖ ປຣະການແລ້ວ ພຣະອາຈາຣຍ໌ຕ້ອງເຕືອນຜູ້ປຕິບັຕິມິໃຫ້ປຣະມາທ ໃຫ້ຕັ້ງໃຈປຕິບັຕິຢ່າງເຄັ່ງຄັດຣະມັດຣະວັງໃຫ້ຫລາຍທີ່ສຸດເທົ່າທີ່ຈະຫລາຍໄດ້ ເພາະຈວນຈະໄດ້ຜົລດີເຕັມທີ່ແລ້ວ ຢ່ານອນໃຈຢ່າເຫີມໃຈ ຢ່າຄິດວ່າຍັງໄກລຢູ່ອັນທີ່ແທ້ໃກລ້ຈະໄດ້ຜົລດີຢູ່ແລ້ວ

ຖ້າຜູ້ໃດບໍ່ປຣະມາທ ຜູ້ນັ້ນຈະໄດ້ຜົລດີໂດຍບໍ່ນານເລີຍ ປຣະມາຓ ໒-໓ ວັນເທົ່ານັ້ນກໍຈະເຫັນຜົລ ແຕ່ຖ້າຜູ້ໃດປຣະມາທຂາດການປຕິບັຕິຕິດຕໍ່ກັນ ຜູ້ນັ້ນຈະໄດ້ຜົລຊ້າອາຈຈະເລີຍໄປ ໕ ວັນ ໑໐ ວັນ ຫຣື ໑໕ ວັນກໍໄດ້ ອາຈຈະບໍ່ໄດ້ຜົລເຕັມທີ່ກໍເປັນໄດ້ ຖ້າຫາກວ່າຜູ້ນັ້ນຕົກຢູ່ໃນຄວາມປຣະມາທ ດັ່ງນັ້ນ ຣະຍະເຂົ້າດ້າຍເຂົ້າເຂັມນີ້ ຈຶ່ງຄວຣຈະຣະມັດຣະວັງໃຫ້ຫລາຍທີ່ສຸດເທົ່າທີ່ຈະຣະວັງໄດ້ ແມ້ຊີວິຕກໍຍອມສລະໄດ້

ວິທີປະຕິບັດວິປັສສນາກັມມະຖານ...ຊ່ວງສຸດທ້າຍ

ອະທິຖານ

ເມື່ອຜູ້ປະຕິບັດມີສະພາວະຊັດດີແລ້ວ ພຣະອາຈາຣຍ໌ຜູ້ສອນຄວນໃຫ້ອະທິຖານດັ່ງນີ້ ຄື

ວັນທຳອິດ

ໃຫ້ຍ່າງຈົງກົມຣະຍະທີ່ ໑-໖ ແລ້ວນັ່ງລົງຂັດສມາທິ (ນັ່ງລົງຂັດຕະມາດ) ອະທິຖານວ່າ "ລັມມ໌ວິເສຍທີ່ເກີດຂຶ້ນແລ້ວ ຂໍຢ່າໃຫ້ເກີດອີກ ລັມມ໌ວິເສຍເບື້ອງສູງທີ່ຍັງບໍ່ເກີດ ຂໍຈົ່ງໃຫ້ເກີດຂຶ້ນພາຍໃນ ໒໔ ຊົ່ວໂມງນີ້" ແລ້ວໃຫ້ກຳຫນົດ ພອງນໍ ຍຸບນໍ ຕໍ່ໄປ ຖ້ານັ່ງກຳຫນົດເຫມື່ອຍແລ້ວ ໃຫ້ລຸກຂຶ້ນຍ່າງຈົງກົມອີກ ນັ່ງອີກ ໃຫ້ປະຕິບັດຕິດຕໍ່ກັນ ສລັບກັນຢູ່ຢ່າງນີ້ ຈົນກວ່າຈະເຖິງເວລານອນ ວັນນີ້ ຖືວ່າເປັນວັນສຳຄັນຫລາຍໃນຊີວິດເຮົາ ດັ່ງນັ້ນ ຖ້າບໍ່ງ່ວງຢ່ານອນງ່າຍ ເມື່ອນອນຕື່ນຂຶ້ນກໍໃຫ້ປະຕິບັດຕໍ່ໄປອີກຈົນກວ່າຈະຄົບ ໒໔ ຊົ່ວໂມງ ຈຶ່ງຈະຕໍ່ບົທຮຽນທີ່ ໒ ໄດ້

ວັນທີ່ ໒

ໃຫ້ຍ່າງຈົງກົມຣະຍະທີ່ ໑-໖ ແລ້ວນັ່ງ ອະທິຖານວ່າ "ພາຍໃນ ໒໔ ຊົ່ວໂມງນີ້ ຂໍໃຫ້ຄວາມເກີດດັບເກີດຂຶ້ນໃຫ້ຫລາຍ" ກຳຫນົດ ພອງນໍ ຍຸບນໍ ຕໍ່ໄປ ຈົນກວ່າຈະຄົບ ໒໔ ຊົ່ວໂມງ ຈຶ່ງຈະຕໍ່ບົທຮຽນໃຫມ່ໄດ້

ວັນທີ່ ໓

ໃຫ້ຍ່າງຈົງກົມຣະຍະທີ່ ໑-໖ ແລ້ວນັ່ງ ອະທິຖານວ່າ "ພາຍໃນຊົ່ວໂມງນີ້ ຂໍໃຫ້ຄວາມເກີດດັບເກີດຂຶ້ນໃຫ້ຫລາຍ" ກຳຫນົດ ພອງນໍ ຍຸບນໍ ຕໍ່ໄປ ບົທນີ້ໃຫ້ອະທິຖານທຸກຊົ່ວໂມງທີ່ນັ່ງ

ວັນທີ່ ໔

ໃຫ້ຍ່າງຈົງກົມຣະຍະທີ່ ໑-໖ ແລ້ວນັ່ງ ອະທິຖານວ່າ "ພາຍໃນ ໓໐ ນາທີນີ້ ຂໍໃຫ້ຄວາມເກີດດັບເກີດຂຶ້ນໃຫ້ຫລາຍ" ກຳນໍ ພອງນໍ ຍຸບນໍ ຕໍ່ໄປ ບົທນີ້ໃຫ້ອະທິຖານທຸກ ໓໐ ນາທີທີ່ນັ່ງ

ວັນທີ່ ໕

ໃຫ້ຍ່າງຈົງກົມຣະຍະທີ່ ໑-໖ ແລ້ວນັ່ງ ອະທິຖານວ່າ

ພາຍໃນ ໑໕ ນາທີນີ້ ຂໍໃຫ້ຄວາມເກີດດັບເກີດຂຶ້ນໃຫ້ຫລາຍ ນັ່ງກຳຫນົດໄປຈົນຄົບ ໑໕ ນາທີ

ພາຍໃນ ໑໐ ນາທີນີ້ ຂໍໃຫ້ຄວາມເກີດດັບເກີດຂຶ້ນໃຫ້ຫລາຍ ນັ່ງກຳຫນົດໄປຈົນຄົບ ໑໐ ນາທີ

ພາຍໃນ ໕ ນາທີນີ້ ຂໍໃຫ້ຄວາມເກີດດັບເກີດຂຶ້ນໃຫ້ຫລາຍ ນັ່ງກຳຫນົດໄປຈົນຄົບ ໕ ນາທີ

ວັນທີ່ ໖

ໃຫ້ຢ່າງຈິງກຣິມຣະຍະທີ່ ໑-໖ ແລ້ວນັ່ງ ອທິຖານວ່າ "ພາຍໃນຊົ່ວໂມງນີ້ ຂໍໃຫ້ຈິດສງົບງຽບໄປໄດ້ນານປຣະມາຕ ໕ ນາທີ" ແລ້ວກຳຫນົດ ພອງໜໍ ຍຸບໜໍ ຕໍ່ໄປ ບົທນີ້ຕ້ອງຢ່າງນານ ນັ່ງນານ ຈຶ່ງຈະໄດ້ຜົລດີ ເພາະຕ້ອງການສມາທິໃຫ້ເປັນພິເສຫກວ່າທັມມ໌ດາ

ຖ້າຈິຕສງົບໄດ້ ໕ ນາທີ ຕາມທີ່ໄດ້ອທິຖານໄວ້ ຕໍ່ໄປໃຫ້ອທິຖານເພີ່ມວ່າ ຂໍໃຫ້ຈິຕສງົບງຽບໄປໄດ້ນານປຣະມາຕ ໑໐ ນາທີ ຖ້າໄດ້ ໑໐ ນາທີ ຕາມທີ່ໄດ້ອທິຖານໄວ້ ກໍໃຫ້ອທິຖານເພີ່ມຂຶ້ນໄປອີກເລື້ອຍໆ ຈົນໄດ້ ໑ ຊົ່ວໂມງ ໒ ໓ ໔ ໕ ໗ ໑໔ ໒໔ ຊົ່ວໂມງ ຫຣືຫລາຍກວ່ານັ້ນ ເພາະບາງຄົນໄດ້ເຖິງ ໓໐ ໔໐ ໗໒ ຊົ່ວໂມງ ກໍມີທັງນີ້ສຸດແທ້ແຕ່ຄວາມຂຍັນຄວາມອົດທົນແລະຄວາມເປັນຜູ້ມີສມາທິດີ ເພາະບຸຄຸສົລ ວາສນາບາຣມີຂອງແຕ່ລະບຸຄຄົລບໍ່ເຫມືອນກັນ

ການປຕິບັຕິທັມມ໌ເປັນເຣື່ອງສງົບ ບໍ່ແມ່ນເຣື່ອງຍຸ່ງ ບໍ່ແມ່ນເຣື່ອງວຸ່ນວາຍ ເຢັນໃຈຕລອດເວລາ ການຈະເຣີນວິປັສສນາ ເປັນການປຕິບັຕິທັມມ໌ຂັ້ນສູງສຸດໃນທາງພຣະພຸທສາສນາ ເປັນທາງສາຍເອກ ເປັນຫົວໃຈຂອງພຣະພຸທສາສນາ ເປັນການປຕິບັຕິເພື່ອໃຫ້ພົ້ນໄປຈາກກິເລສແລະກອງທຸກຂ໌ ເຖິງສັນຕິສຸຂຢ່າງແທ້ຈິງ ຜູ້ທີ່ຈະຊາບຊຶ້ງແລະເຫັນຄວາມອັສຈັຣຍ໌ຂອງພຣະພຸທສາສນາກໍມີຢູ່ທາງດຽວເທົ່ານີ້ ຄື ຈະເຣີນວິປັສສນາກັມມຖານ

ເທສນ໌ລຳດັບຍານ

ເມື່ອຜູ້ປຕິບັຕິຈົບການອທິຖານແລ້ວ
ພຣະອາຈາຣຍ໌ຜູ້ສອບຜູ້ສອນກໍຈັດໃຫ້ມີເທສນ໌ລຳດັບຍານຂຶ້ນເປັນເທື່ອເປັນຄຣາວ ປີນຶ່ງອາຈຈະມີພຽງ ໑ ໒ ໓ ເທື່ອເປັນຢ່າງຫລາຍ ມີຫົວຂໍ້ເທສນ໌ຫຍໍ້ໆ ດັ່ງນີ້ ຄື

໑. ເທສນ໌ເຣື່ອງຄວາມມຸ່ງຫມາຍຂອງການຟັງທັມມ໌ລຳດັບຍານ

໒. ເທສນ໌ເຣື່ອງຍານ ໑໖ ມີ ນາມຣູປປຣິຈເຈທຍານ ເປັນຕົ້ນ ຈົນເຖິງ ປັຈຈເວກຂນຍານ

໓. ເທສນ໌ເຣື່ອງອຣິຍສັຈ ໔ ໃນແນວປຕິບັຕິ

໔. ເທສນ໌ເຣື່ອງວິສຸທທິ ໗ ທຽບກັບຍານ ໑໖

໕. ເທສນ໌ເຣື່ອງກິເລສທີ່ລະໄດ້ ທີ່ເຫລືອຢູ່ມັຄຄ໌ ຜົລ ນິພພານ ແລະວິທີປຕິບັຕິໃນຂັ້ນຕໍ່ໄປອີກ

໖. ເທສນ໌ເຣື່ອງຄຸຕສົມບັຕິຂອງນັກປຕິບັຕິ ໔ ຂໍ້ ເພື່ອໃຫ້ຕັດສິນຕົວເອງ ພິສູຈນ໌ຕົວເອງ

໗. ເຕືອນສຕິຜູ້ປຕິບັຕິ

໘. ໃຫ້ພຣ ຢຖາ ສັພພີ ເປັນແລ້ວພິທີ

ອານິສົງສ໌ຫຼືຜົນທີ່ຈະໄດ້ຮັບຈາກການຈະເຣີນວິປັສສນາ

ທ່ານກ່າວໄວ້ໃນບາລີວ່າ "**ອເນກສຫສ຺ສາ**" ແປລວ່າການຈະເຣີນວິປັສສນານັ້ນ ມີປຣະໂຍຊນ໌ ມີອານິສົງສ໌ຫລາຍຮ້ອຍຫລາຍພັນ ຈົນບໍ່ສາມາຖຈະນັບປຣະມາຕໄດ້ ດັ່ງນັ້ນໃນທີ່ນີ້ຈະຂໍຍົກມາພໍເປັນຕົວຢ່າງແຕ່ເລັກນ້ອຍ ພໍເຫມາະພໍຄວຣແກ່ກາລເວລາ ຄືຈະຍົກມາພຽງສ່ວນນ້ອຍໆ ເທົ່າທີ່ສາມາຖຈະນຳມາໄດ້ເທົ່ານັ້ນ ຄື

☞ ເຮັດໃຫ້ນັກປຝິບັຕິເຂົ້າໃຈລັມມະທັ້ງດ້ານປຣິຍັຕິ ແລະດ້ານປຝິບັຕິໄດ້ດີແລະລະອຽດລະອໍຍິ່ງຂຶ້ນ ເຊັ່ນ ເຂົ້າໃຈຄຳວ່າ ຣູປນາມ ພຣະໄຕຣລັກສຕ໌ ເປັນຕົ້ນ ດີຂຶ້ນກວ່າບໍ່ໄດ້ເຂົ້າປຝິບັຕິຫລາຍເທົ່າ

☞ ເຮັດໃຫ້ມີກຳລັງໃຈເຂັ້ມແຂງ ມີຄວາມຂຍັນ ມີຄວາມອົດທົນ ມີຄວາມຮູ້ຈັກປະຫຍັດຍິ່ງຂຶ້ນເປັນພິເສສກວ່າແຕ່ກ່ອນ ເຂົ້າໃນຫລັກທີ່ວ່າ "ວິນັຍ ຂຍັນ ອົດທົນ ປະຫຍັດ ພັທນາ ລົດປັນຫາໄດ້ທຸກຢ່າງ" ດັ່ງນີ້

- ພັທນາຈິຕໃຈໃຫ້ເປັນນັກເສັຽສລະຂຶ້ນອີກຫລາຍ ເຫັນແກ່ສ່ວນຣວມ ທຳບໍ່ເຫັນແກອິດເຫມື່ອຍ ແລະບໍ່ເບື່ອຫນ່າຍ ຍິ່ງເຮັດຍິ່ງເພລີນ ຕົງກັນຂ້າມກັບສມັຍກ່ອນເມື່ອຍັງບໍ່ໄດ້ເຂົ້າປຝິບັຕິກັມມຖານ
- ເຮັດໃຫ້ເບິ່ງຫນັງສືລັມມະເພລີດເພລີນ ບໍ່ຮູ້ຈັກເບື່ອ ເຂົ້າໃນຫລັກທີ່ວ່າ ຍິ່ງເບິ່ງຍິ່ງມັນ ບາງວັນອ່ານຫນັງສືລັມມະ ຄື້ນພຣະໄຕຣປິຝົກເພລີດເພລີນບໍ່ຢາກຫລັບບໍ່ຢາກນອນ
- ເຮັດໃຫ້ອລິບາຍລັມມະໄດ້ດີຂຶ້ນ ລະອຽດ ສຸຂຸມຂຶ້ນກວ່າເດີມ ເພາະສາມາຖຈະອລິບາຍໄດ້ທັ້ງ ປຣິຍັຕິ ປຝິບັຕິ ປຝິເວ ເຊິ່ງລຸ່ມເລິກໄປຕາມລຳດັບ ຄືທະເລເມຫາສມຸທຣ໌ຈັ່ງນັ້ນ
- ເຮັດໃຫ້ມີສຕິດີຂຶ້ນ ຄວາມຈຳດີຂຶ້ນ ຈຳໄດ້ແມ້ນຍຳ ຈຳໄດ້ແລ້ວບໍ່ຄ່ອຍຫລົງບໍ່ຄ່ອຍລືມ
- ເປັນມຫາກຸສົລ ເປັນບຸຍທຸກຂຕະທີ່ລົງມືປຝິບັຕິຫຼືລົງມືສອນຜູ້ອື່ນ ແນະນຳຜູ້ອື່ນ
- ເປັນຄົນບໍ່ປຣະມາທ ເພາະມີສຕິຣະເລີກຢູ່ກັບ ນາມຣູປ ເປັນສ່ວນຫລາຍ
- ໄດ້ບຳເພັນ ສີລ ສມາລິ ປັນຍາ ຕາມພຣະພຸທຍໂອວາທ
- ໄດ້ເດີນທາງສາຍກາງ ຄື ມັຄຄ໌ ໘
- ໄດ້ເດີນທາງສາຍເອກ ຄື ນຶ່ງບໍ່ມີສອງ
- ໄດ້ບຳເພັນບາຣມີ ໄດ້ຣິບສ້າງບາຣມີ ໄດ້ຕຽມຕົວກ່ອນຕາຍໄວ້ພ້ອມແລ້ວ
- ເຮັດໃຫ້ຝລາດຮູ້ຈັກຫລັກຄວາມຈິງ ແລະຮູ້ຈັກຫລັກຊີວິຕປະຈຳວັນດີຂຶ້ນ
- ເຮັດໃຫ້ຮູ້ຈັກປຣມັຕຖລັມມ໌ ບໍ່ຫລົງຕິດຢູ່ໃນສົມມຸຕິບັນຍຕິ ອັນເປັນພຽງໂຮງລະຄຣຂອງຊາວໂລກ
- ເຮັດໃຫ້ຄົນຮັກໃຄ່ກັນປອງດອງກັນ ສນິທສນົມກັນ ເຂົ້າກັນໄດ້ດີ ເປັນສເມືອນນຶ່ງຍາຕິສນິທ
- ເຮັດໃຫ້ຄົນມີຄວາມເມຕຕາກຣຸຕາຕໍ່ກັນ ອີດູກັນສົງສາຣກັນ ຄອຍຍິນດີອນຸໂມນາສາລຸການໃນເມື່ອເຫັນຜູ້ອື່ນໄດ້ດີ ບໍ່ມີຄວາມຣິສຍາກັນແລະກັນ

- ເຮັດຄົນໃຫ້ເປັນຄົນ ໃຫ້ດີກວ່າຄົນ ໃຫ້ເດັ່ນກວ່າຄົນ ໃຫ້ເລີສກວ່າຄົນ ໃຫ້ປະເສີກກວ່າຄົນ ໃຫ້ສູງກວ່າຄົນ ແລະເຮັດຄົນໃຫ້ເປັນພຣະ
- ເຮັດຄົນບໍ່ໃຫ້ບຽດບຽນກັນ ບໍ່ໃຫ້ເອົາຣັດເອົາປຽບກັນ ບໍ່ໃຫ້ອິຈສາຣິษยากັນແລະກັນ
- ເຮັດຄົນໃຫ້ເປັນຜູ້ວ່າງ່າຍສອນງ່າຍ ບໍ່ມີມານະທິຜິ ບໍ່ຖືຕົວ ບໍ່ເຫຍີຫຍິ່ງຈອງຫອງ
- ເຮັດຄົນໃຫ້ຮູ້ຈັກຕົວເອງ ຮູ້ຈັກປົກຄອງຕົວເອງ ຄື ອ່ານຕົວອອກ ບອກຕົວໄດ້ ໃຊ້ຕົວເປັນ ຫຣື ອ່ານຕົວອອກ ບອກຕົວໄດ້ ໃຊ້ຕົວຟັງ
- ເຮັດຄົນໃຫ້ເປັນຜູ້ຫນັກແນ່ນໃນກັຕັญญูກຕເວທິຕາລັມມ໌ ຄື ເປັນຄົນມີຄວາມກັຕັญญูກຕເວທີ ນັ່ນເອງ
- ເຮັດຄົນໃຫ້ຫັນຫນ້າເຂົ້າຫາກັນ ໃຫ້ບັຣຈົບກັນ ເພາະຕ່າງຝ່າຍຕ່າງລົດທິຜິມານະລົງຫາກັນ ເຂົ້າກັນໄດ້ເປັນກັນເອງ ຮູ້ໃຈກັນດີ
- ເຮັດຄົນໃຫ້ມີ ກາຍ ໃຈ ບໍຣິສຸທລິ໌ ອ່ອນນ້ອມຫນາວເຢັນ
- ເຮັດຄົນໃຫ້ໄດ້ຮັບຄວາມສຸຂ ໆ ປຣະການ ຄື ສຸຂຂອງມນຸษย໌ ສຸຂທິພຍ໌ ສຸຂໃນຊານ ສຸຂໃນວິປັສສນາ ສຸຂໃນມັຄຄ໌ ສຸຂໃນຜົລ ສຸຂຄືນິພພານ ຕາມສົມຄວຣແກ່ການປຜິບັຕິຂອງຕົນໆ ຫຣື ຕາມສົມຄວຣແກ່ວາສນາບາຣມີຂອງຕົນໆ
- ເຮັດຄົນໃຫ້ພົ້ນຈາກຄວາມເສົ້າໂສກປຣິເທວນາການ ຄືນາງປຜາຈາຣາແລະສັນຕຕິມຫາອຳມາຕຍ໌ ເປັນຕົ້ນ
- ເຮັດຄົນໃຫ້ມີປັญญาດັບຄວາມທຸກຂ໌ຮ້ອນທາງກາຍ ທາງໃຈ
- ເຮັດຄົນໃຫ້ເດີນທາງຖືກ ໃຫ້ຮູ້ຈັກວິຖີທາງແຫ່ງຊີວິຕອັນຖືກຕ້ອງໄດ້ດີ ບໍ່ຫລົງທາງ ບໍ່ມົວເມົາ ບໍ່ປຣະມາທ ຮູ້ຈັກສູຕຣ໌ຂອງຄົນທີ່ວ່າ "ເກີດເປັນຄົນ ຄົນໃຫ້ທົ່ວ ປາກບໍ່ລົ້ນ ກົ້ນບໍ່ຮົ່ວ ຊົ່ວບໍ່ເອົາ ເມົາບໍ່ມີ ນີ້ຄືຄົນ" ດັ່ງນີ້
- ເຮັດຄົນໃຫ້ໄດ້ບັຣລຸມັຄຄ໌ຜົລນິພພານເປັນປຣິໂຍສານ

ເຖິງປຜິບັຕິໄດ້ແຄ່ญาณ ໑-໔ ຄື ພຽງຢູ່ໃນญาณຕົ້ນໆ ຫຣືญาณຕ່ຳໆ ຖ້າພຍາຍາມຮັກษาໄວ້ໄດ້ຫຣືປຜິບັຕິຕໍ່ໆໄປ ກໍສາມາຖຈະປ້ອງກັນກັยໃນອບາຍກູມິໄດ້ ດັ່ງມີຫລັກฐานຮັບຮອງໄວ້ໃນວິສຸທລິມັຄຄ໌ກາຄ ๓ ຫນ້າ ໔໗ ວ່າ

ອິມິນາ ປນ ญาເณน ສມນฺนาຄໂຕ ວິປສฺສໂກ พุทฺธสาสเน ลทฺธสฺสาโส ลทฺธปติฎฺโฐ นิยตคติโก จูฬโสตา ปนฺโน นาม โหติ

ຜູ້ຈະເຣີญວິປັສສນາກັມມฐาน ເຖິງญาณທີ່ ໔ ຄື ປັຈຈັຍປຣິຄຄຫญาณນີ້ແລ້ວ ໄດ້ຄວາມເບົາອົກເບົາໃຈໃນພຣະພຸທລສາສນາ ໄດ້ທີ່ຫາກຣະລຶກໃນພຣະພຸທລສາສນາ ມີຄຕິອັນທ່ຽງ ຄືຕາຍໄປແລ້ວບໍ່ໄປອບາຍກູມິ ຊື່ວ່າເປັນຈູฬໂສດາບັນ ຫມາຍຄວາມວ່າ ເປັນຜູ້ເຂົ້າສູ່ກະແສພຣະນິພພານນ້ອຍໆ ເປັນຜູ້ເດີນທາງຖືກແລ້ວ

ຖ້າປະຕິບັດເຖິງຍານທີ່ ៤ ຄື **ອຸທຍັພພຍຍານ**[18] ເຫັນຮູບແລະນາມເກີດດັບ ເຫັນພຣະໄຕຣລັກສະນະອັດ ໕໐% ຊື່ວ່າເປັນຜູ້ມີຊີວິດອັນປະເສີດ ເຖິງຈະຕາຍເສັງໃນວັນນັ້ນ ກໍຍັງດີກວ່າບຸກຄົນຜູ້ບໍ່ໄດ້ປະຕິບັດ ແຕ່ມີຊີວິດເປັນຢູ່ໄດ້ເຖິງ ໑໐໐ ປີ ດັ່ງມີຫລັກຖານຮັບຮອງໄວ້ ປາກົດຢູ່ໃນພຣະໄຕຣປິດົກເຫລັ້ມທີ່ ໒໕ ໜ້າທີ່ ໖໐ ວ່າ

ໂຍ ຈ ວສ຺ສສຕံ ຊີເວ ອປສ຺ສំ ອຸທຍព຺ພយំ

ເອກາហំ ຊີວິຕំ ເສយ຺ໂຍ ປស຺សໂຕ ອຸທຍព຺ພយំ

ຜູ້ຈະເຣີນວິປັສສນາກັມມຖານເຖິງຍານທີ່ ៤ ອຸທຍັພພຍຍານ ເຫັນຄວາມເກີດດັບຂອງຮູບແລະນາມ ເຖິງແມ້ຈະມີຊີວິດຢູ່ໄດ້ພຽງວັນດຽວ ກໍຍັງປະເສີດກວ່າບຸຄຄົນຜູ້ບໍ່ເຫັນຄວາມເກີດດັບຂອງຮູບນາມ ແຕ່ມີຊີວິດເປັນຢູ່ໄດ້ເຖິງ ໑໐໐ ປີ

ຖ້າຊາຕິນີ້ຍັງບໍ່ໄດ້ສຳເຣັຈມັຄຄ໌ຜົລນິພພານ ກໍຈະເປັນປັຈຈັຍໃຫ້ໄດ້ສຳເຣັຈມັຄຄ໌ຜົລນິພພານໃນຊາຕິຕໍ່ໄປ ຄື ຖ້າຈະເຣີນວິປັສສນາໃນປະຖົມວັຍ ຄືຕັ້ງແຕ່ອາຍຸ ៗ ຂວບ ເຖິງ ໒໕ ປີ ແຕ່ບໍ່ສຳເຣັຈ ກໍຈະເປັນປັຈຈັຍໃຫ້ໄດ້ສຳເຣັຈໃນມັຊຊິມວັຍ ຄື ຕັ້ງແຕ່ອາຍຸ ໒໕ ປີ ເຖິງອາຍຸ ໕໐ ປີ

ຖ້າຍັງບໍ່ສຳເຣັຈໃນມັຊຊິມວັຍນີ້ ກໍຈະເປັນປັຈຈັຍໃຫ້ໄດ້ສຳເຣັຈໃນປັຈຈິມວັຍ ຄືຕັ້ງແຕ່ອາຍຸ ໕໑ ປີເຖິງອາຍຸ ໗໕ ປີ

ຖ້າຍັງບໍ່ສຳເຣັຈໃນປັຈຈິມວັຍນີ້ ກໍຈະເປັນປັຈຈັຍໃຫ້ໄດ້ສຳເຣັຈໃນມໍຣຕສມັຍ ຄືໃນເວລາໃກ້ຈະຕາຍ ຖ້າບໍ່ສຳເຣັຈໃນເວລາໃກ້ຕາຍ ກໍຈະເປັນປັຈຈັຍໃຫ້ໃຈບໍຣິສຸທຣິ໌ ແລ້ວໄປເກີດໃນສວັຣຄ໌ ສົມດັ່ງພຣະບາລີວ່າ **ຈິຕ຺ເຕ ອສງ຺ກິລិຕ຺ເຖ ສຸຄຕິ ປາຕິກង຺ខា** ເມື່ອໃຈບໍ່ເສົ້າຫມອງ ຄືໃຈບໍຣິສຸທຣິ໌ແລ້ວ ສຸຄຕິກໍເປັນອັນຫວັງໄດ້ດັ່ງນີ້ ຈະໄດ້ສຳເຣັຈເຖິງສວັຣຄ໌ພຸ້ນ

ຖ້າຍັງບໍ່ສຳເຣັຈເຖິງສວັຣຄ໌ພຸ້ນ ກໍຈະເປັນປັຈຈັຍໃຫ້ໄດ້ຟັງທັມມ໌ກ່ອນຈະຫມົດສາສນາ ພຣະອັຣຫັນຕທາຕຸທັງຫລາຍຈະໄດ້ມາຮວມກັນເປັນອົງຄ໌ພຣະພຸທຄເຈົ້າ ທຣົງສະແດງທັມມ໌ຢູ່ ໆ ວັນ ໆ ຄືນ ກໍຈະໄດ້ມີໂອກາສມາຟັງທັມມ໌ປະຕິບັດທັມມ໌ໃນສມັຍນັ້ນ ແລ້ວຈະໄດ້ສຳເຣັຈມັຄຄ໌ຜົລນິພພານໃນຕອນນັ້ນ

ຖ້າຍັງບໍ່ສຳເຣັຈໃນຕອນນັ້ນ ກໍຈະໄດ້ເກີດທັນສາສນາຂອງພຣະສຣີອຣິຍເມຕຕຣັຍ ໄດ້ຟັງທັມມ໌ຕໍ່ພຣະພັກຕຣ໌ຂອງພຣະອົງຄ໌ ແລ້ວໄດ້ສຳເຣັຈມັຄຄ໌ຜົລນິພພານໂດຍໄວທີ່ສຸດ ຄືພາຫິຍະທາຣຸຈີຣິຍະ ພຣະອັນຍາໂກນທັນຍະ ພຣະວັປປະ ພຣະພັທທິຍະ ພຣະມຫານາມ ພຣະອັສສຊິ ພຣະສາຣີບຸຕຣ໌ ພຣະມຫາໂມຄຄັລລານະ ເປັນຕົ້ນ

ຖ້າບໍ່ໄດ້ພົບພຣະສຣີອຣິຍເມຕຕຣັຍ ຫຣືສາວົກຂອງພຣະສຣີອຣິຍເມຕຕຣັຍ ເກີດໃນສຸນກັປປ໌ ຄື ກັປປ໌ທີ່ວ່າງຈາກພຣະພຸທຄເຈົ້າ ກໍຈະໄດ້ເປັນພຣະປັຈເຈກພຸທຄເຈົ້າ ໄດ້ຕຣັສຮູ້ມັຄຄ໌ຜົລນິພພານດ້ວຍຕົນເອງ ດັ່ງນີ້

- ທຳກິເລສ ຄື ໂລກະ ໂທສະ ໂມຫະ ມານະ ທິຕຖິ ເປັນຕົ້ນ ໃຫ້ເບົາບາງລົງ
- ເຮັດໃຫ້ເປັນຄົນມີໃຈສຸຂຸມຫນາວເຢັນ

[18] **ອຸທຍັພພຍຍານ** ອ່ານວ່າ "ອຸ-ທະ-ຍັບ-ພະ-ຍະ-ຍານ" ນ. ວິປັສສນາຍານທີ່ ៤

- ເຮັດໃຫ້ເປັນຄົນມີສະຕິຮອບຄອບ ຄືຣິຍາທີ່ມີເຄື່ອງຫ້າມລໍ້ດີຈັ່ງນັ້ນ
- ເຮັດໃຫ້ສມາธິດີ ເຮັດໃຫ້ຄວາມຈຳດີຂຶ້ນ ເຮັດໃຫ້ຮຽນຫນັງສືເກັ່ງ ເປັນປຣະໂຍຊນ໌ແກ່ນັກຮຽນ ນັກສຶກສາຫລາຍ
- ເຮັດໃຫ້ໂຣຄภัยໄຂ້ເຈັບຕ່າງໆ ຫາຍໄປ ເຊັ່ນ ໂຣຄປຣະສາທ ໂຣຄອັມພາຕ ໂຣຄກະເພາະ ໂຣຄປວດຫົວ ເປັນຕົ້ນ

ສາມາຖເປັນປັຈຈັຍນຳໄປເກີດໃນສວັຣຄ໌ໄດ້ ເຊັ່ນ ພຣະພິກຂຸອົງຄ໌ນຶ່ງທ່ານຈະເຣີນວິປັສສນາກັມມຖານເຖິງຍານທີ່ ໔ ແລ້ວມໍຣະນະພາບລົງດ້ວຍໂຣຄລົມ ໄດ້ໄປບັງເກີດໃນສວັຣຄ໌ຊັ້ນດາວດຶງສ໌ ລົງມາຂາບພຣະພຸທธເຈົ້າຂໍຟັງธັມມ໌ ປະຕິບັດธັມມ໌ ຕໍ່ໃນທີ່ສຸດກໍໄດ້ສຳເຣັຈເປັນພຣະໂສດາບັນ ເມື່ອໄປສເວີຍຣົມຍ໌ຊົມສົມບັດຢູ່ໃນເທວໂລກສືບຕໍ່ໄປ

ເຮັດໃຫ້ມີຄວາມເຊື່ອຄວາມເລື່ອມໃສໃນພຣະຣັຕນຕຣັຍຫນັກແນ່ນມັ່ນຄົງຍິ່ງຂຶ້ນໄປເປັນຮ້ອຍເທົ່າພັນທວີ

ສະດວກແກ່ການປົກຄອງ ຄື ເຮັດໃຫ້ຜູ້ທີ່ໄດ້ຮັບການອົບຮົມໄປແລ້ວນັ້ນເປັນຜູ້ປົກຄອງງ່າຍ ບໍ່ກໍ່ຄວາມເດືອດຮ້ອນ ໃຫ້ເກີດຂຶ້ນແກ່ຫມູ່ ແກ່ຄະນະ ແກ່ສັງຄົມທົ່ວໆ ໄປ

ກັນໂງ່ ເພາະມີສະຕິ ສະຕິເປັນຄູ່ປຣັບກັບໂມຫະ ຄື ຄວາມໂງ່ ເພາະໂມຫະນີ້ແຫລະເປັນຕົວໂງ່ ຢ່າງສຳຄັນ ທີ່ສຸດຂອງແຕ່ລະບຸຄຄົລ

ມີສະຕິຕັ້ງມັ່ນດີທັ້ງໃນຍາມປກຕິແລະໃນຍາມໃກ້ຈະຕາຍ

ເຮັດໃຫ້ຄົນມີສີລธັມມ໌ ວັฒນธັມມ໌ ອາຣຍธັມມ໌ ຈຣິຍธັມມ໌ອັນດີງາມສ່ວນຫລາຍຈະມີສີລ ໕ ມັ່ນເປັນນິຈ

ເດັກນັກຮຽນທີ່ມີຄວາມຈຳໄດ້ບໍ່ດີ ຮຽນຫນັງສືບໍ່ເກັ່ງ ກໍຈະມີຄວາມຈຳດີຂຶ້ນ ຮຽນຫນັງສືເກັ່ງຂຶ້ນ ອີກຫລາຍເທົ່າແທ້ໆ ເພາະມີຕົວຢ່າງມາຫລາຍຕໍ່ຫລາຍແລ້ວ

ແກ້ນິສັຍຄົນບໍ່ດີຫລາຍ ຄື ຄົນທີ່ເປັນພາລເກເຣ ເຊັ່ນ ອັນธພາລນັກໂທษ ຖ້າໄດ້ຈະເຣີນວິປັສສນາກັມມຖານແລ້ວ ຈະເມືອຕົວເປັນຄົນລະຄົນ ຖ້ານັກໂທษແຕ່ລະຄົນໄດ້ເຂົ້າປະຕິບັດແລ້ວເວລາປ່ອຍອອກໄປຈະບໍ່ເມືອມາສູ່ຄຸກສູ່ຫ້ອງຂັງອີກເລີຍ

ຖ້າຝຶກສມາธິໄດ້ດີແລ້ວ ຈະມີສຸຂະພາພທາງຈິຕດີເພາະໄດ້ພັฒນາຈິຕມາດີ ເຂົ້າໃນຫລັກທີ່ວ່າ ກິເລສເປັນພິษເຮັດ ໃຫ້ຈິຕແປຣປຣວນ ສມາธິເທົ່ານັ້ນທັ້ງກັນທັ້ງແກ້ ແລະສາມາຖຈະນັ່ງໄດ້ເປັນເວລານານໆ ຫລາຍຊົ່ວໂມງ ເລີ້ມຕັ້ງແຕ່ ໕ ນາທີໄປ ຈົນເຖິງ ໒໔ ຊົ່ວໂມງ ໓໐ ໔໐ ໗໒ ຊົ່ວໂມງກໍໄດ້ ເພາະເຄີຍມີມາແລ້ວ

ຊື່ວ່າໄດ້ບູຊາພຣະພຸທธເຈົ້າດ້ວຍການບູຊາຢ່າງສູງທີ່ສຸດ ດັ່ງພຣະບາລີທີ່ພຣະພຸທธອົງຄ໌ໄດ້ຕຣັສໄວ້ ປາກົฏຢູ່ໃນ ພຣະໄຕຣປິฎກ ເຫລັ້ມທີ່ ໑໐ ຫນ້າທີ່ ໑໕໐-໑໕໑ ວ່າ

ໂຢ ໂຂ ອານນທ ພິກຂຸ ວາ ພິກຂຸນີ ວາ ອຸປາສໂກ ວາ ອຸປາສິກາ ວາ ລມ຺ມານຸລມ຺ມປຏິປນ຺ໂນ ວິຫຣຕິ ສາມີຈິປຏິປນ຺ໂນ ອນຸລມ຺ມຈາຣີ ໂສ ຕຖາຄຕ໌ ສກ຺ກໂຣຕິ ຄຣຸກໂຣຕິມາເນຕິ ປູເຊຕິ ປຣມາຢ ປູຊາຢ

ດູຣາອານົນທ໌ ຜູ້ໃດເປັນພິກຂຸກໍຕາມ ເປັນພິກຂຸນີກໍຕາມ ເປັນອຸບາສົກກໍຕາມ ເປັນອຸບາສິກາກໍຕາມ ຖ້າໄດ້ປຏິບັຕິລັມມ໌ສົມຄວຣແກ່ລັມມ໌ ປຏິບັຕິຊອບຍິ່ງ ປຏິບັຕິຕາມລັມມ໌ຢູ່ ຜູ້ນັ້ນ ຊື່ວ່າໄດ້ສັກກາຣະ ໄດ້ເຄົາຣົພ ໄດ້ນັບຖື ໄດ້ບູຊາຕຖາຄົຕດ້ວຍກາຣບູຊາຢ່າງສູງ ດັ່ງນີ້

ຊື່ວ່າໄດ້ຊ່ອຍກັນຮັກສາພຣະສັທລັມມ໌ໄວ້ບໍ່ໃຫ້ເສື່ອມສົມດັ່ງພຣະບາລີວ່າ

ຈຕຸນ຺ນ໌ ໂຂ ອາວຸໂສ ສຕິປຏ຺ຏານານ໌ ການິຕຕຸຕາ ພຫຸລີກຕຕຸຕາ ສມ຺ລມ຺ມອປຣິຫານ໌ ໂຫຕິ

ດູຣາອາວຸໂສ ພຣະສັທລັມມ໌ຈະບໍ່ເສື່ອມ ກໍເພາະພຸທລບໍຣິຫັທພາກັນປຏິບັຕິຕາມສຕິປັຏຖານ ໔ ດັ່ງນີ້

ຊື່ວ່າໄດ້ຊ່ອຍກັນເຜີຍແຜ່ພຣະພຸທລສາສນາ ໃຫ້ຈະເຣີນຮຸ່ງເຮືອງດຳຣົງສຖຽຣະພາພຢູ່ຕລອດກາລນານ ສົມດັ່ງຫລັກຖານຮັບຮອງໄວ້ວ່າ

ຢາວ ທີ ອີມາ ຈຕສ຺ໂສ ປຣິສາ ມ໌ ອີມາຢ ປຏິປຕຸຕິປູຊາຢ ປູເຊສ຺ສນ຺ຕິ ຕາວມມສາສນ໌ ນຄານຊເຊ ປຸຕຸຕາຈນ຺ໂທ ວິຢ ວິໂຣເຈສ຺ສຕິ

ຈິງຢູ່ ຖ້າບໍຣິຫັທທັ້ງ ໔ ນີ້ ຈະບູຊາເຮົາດ້ວຍກາຣປຏິບັຕິນີ້ຢູ່ຕຣາບໃດ ສາສນາຂອງເຮົາຈະເຣີນຮຸ່ງເຮືອງປານດັ່ງພຣະຈັນທຣ໌ເພັ່ນລອຍເດັ່ນຈ້າຢູ່ທ່າມກາງນພາຕຣາບນັ້ນ ດັ່ງນີ້

ຊື່ວ່າໄດ້ເຫັນພຣະພຸທລອົງຄ໌ ເພາະໄດ້ເຫັນພຣະລັມມ໌ ສົມດັ່ງທີ່ຕຣັສກັບພຣະວັກກລີວ່າ

ໂຢ ໂຂ ວກ຺ກລີ ລມ຺ມ໌ ປສ຺ສຕິ ໂສ ມ໌ ປສ຺ສຕິ ໂຢ ມ໌ ປສ຺ສຕິ ໂສ ລມ຺ມ໌ ປສ຺ສຕິ

ດູຣາວັກກລີ ຜູ້ໃດເຫັນລັມມ໌ ຜູ້ນັ້ນຊື່ວ່າເຫັນເຮົາ ຜູ້ໃດເຫັນເຮົາ ຜູ້ນັ້ນຊື່ວ່າເຫັນລັມມ໌ ດັ່ງນີ້

ຊື່ວ່າໄດ້ມີຄວາມຈົງຮັກພັກດີ ມີຄວາມເຄົາຣົພຮັກໃຄຣ່ໃນພຣະພຸທລອົງຄ໌ເປັນພິເສສ ສົມດັ່ງພຣະບາລີ ເຊິ່ງປາກົຏຢູ່ໃນລັມມປທັຏຖກຖາ ພາຄ ໕ ວ່າ

ພິກຂເວ ມຢີ ສສີເນໂຫ ຕິສ຺ສສທິໂສ ວ ໂຫຕຸ ຄນ຺ລມາລາທີຫິ ປູຊ໌ ກໂຣນ຺ຕາປີ ເນວ ມ໌ ປູເຊນ຺ຕິ ລມ຺ມານຸລມ຺ມປຏິປຊຊມານາເຢວ ປນ ມ໌ ປູເຊນ຺ຕິ

ດູຣາພິກຂຸທັ້ງຫລາຍ ຜູ້ທີ່ມີຄວາມຈົງຮັກພັກດີໃນເຮົາ ຈົ່ງເປັນເຊັ່ນກັບພຣະຕິສສະເຖຣະເຖີດ (ພຣະຕິສສະເຖຣະທ່ານຈະເຣີນວິປັສສນາກັມມຖານ ກໍຈົ່ງພາກັນຈະເຣີນວິປັສສນາກັມມຖານເຫມືອນທ່ານເຖີດ) ເຖິງແມ້ວ່າບໍຣິຫັທທັ້ງ ໔ ພາກັນທຳກາຣບູຊາເຮົາດ້ວຍຂອງຫອມແລະດອກໄມ້ນານັບປຣະກາຣ ກໍຍັງບໍ່ຊື່ວ່າໄດ້ບູຊາເຮົາຢ່າງແທ້ຈິງ ສ່ວນພຸທລບໍຣິຫັທທັ້ງຫລາຍທີ່ໄດ້ປຏິບັຕິລັມມ໌ສົມຄວຣແກ່ລັມມ໌ເທົ່ານັ້ນ ຈຶ່ງຈະຊື່ວ່າໄດ້ບູຊາເຮົາດ້ວຍກາຣບູຊາຢ່າງແທ້ຈິງ ດັ່ງນີ້

ຊື່ວ່າໄດ້ບຳເພັນກອງກຸສົລອັນຍິ່ງໃຫຍ່ໄພສາລແທ້ໆ ຂໍ້ນີ້ມີພຣະບາລີເຊິ່ງປາກົຍຢູ່ໃນພຣະໄຕຣປິຜົກ ເຫລັ້ມທີ່ ໙ ຫນ້າທີ່ ໑໔໕ ຮັບຮອງໄວ້ວ່າ

ກຸສລຣາສີຕິ ກິກຂເວ ວທມາໂນ ຈຕຸຕາໂຣ ສຕິປຍຸກາເນ ສມຸມາ ວທມາໂນ ວເທຍຸຍ

ດູຮາກິກຂຸທັ້ງຫລາຍ ເມື່ອຈະກ່າວວ່າກອງແຫ່ງກຸສົລ ຈະຕ້ອງກ່າວເຖິງສຕິປັຍກູານທັ້ງ ໔ ດັ່ງນີ້

ຊື່ວ່າໄດ້ຕັດເວນຕິກັງຂາ ຄື ຂໍ້ຂ້ອງໃຈສົງສັຍຂອງຕົວເອງ ເຊິ່ງໄດ້ເຄີຍສົງສັຍວ່າ ສມັຍນີ້ມັຄຄ໌ຜົລນິພພານຈະມີຢູ່ຫຣືບໍ່ນໍ ເຊິ່ງສອດຄລ້ອງຕ້ອງຕາມພຣະບາລີທີ່ປາກົຍຢູ່ໃນພຣະໄຕຣປິຜົກ ເຫລັ້ມທີ່ ໑໐ ຫນ້າທີ່ ໑໓໕-໑໓໕ ວ່າ

ອິມສມິໝຈ ໂຂ ສຸກທຸທ ຣມມວິນເຢ ອຣິໂຍ ອຍຸກງຄິໂກ ມຄຸໂຄ ອຸປລພກຕິ ສມໂຓປີ ຕຕຸຖ ອຸປລພກຕິ ฯ ເປฯ ອິເມ ຈ ສຸກທຸທ ກິກຂູ ສມຸມາ ວິຫເຣຍຸຍ ອສຸຌໂຍ ໂລໂກ ອຣຫນຸເຕຫິ ອສຸສ

ດູຮາສຸກັທທະ ໃນພຣະທັມມ໌ວິນັຍນີ້ ຖ້າຍັງມີອັຍກັງຄິກມັຄຄ໌ອັນປະເສີກຸຢູ່ຕຣາບໃດ ແມ້ພຣະໂສດາບັນ ພຣະສກທາຄາມີ ພຣະອນາຄາມີ ພຣະອຣຫັນຕ໌ ກໍຍັງມີຢູ່ຕຣາບນັ້ນ ฯລฯ ດູຮາສຸກັທທະ ຖ້າກິກຂຸທັ້ງຫລາຍ ຄວຣພາກັນປະພຶຕປຜິບັຕິຢູ່ໂດຍຊອບ ໂລກກໍບໍ່ຄວຣວ່າງເປົ່າຈາກພຣະອຣຫັນຕ໌ ດັ່ງນີ້

ພຣະອັຕຖກຖາຈາຣຍ໌ຍັງໄດ້ກ່າວຮັບຮອງຄວາມຂໍ້ນີ້ໄວ້ອີກ ເຊິ່ງປາກົຍຢູ່ໃນສຸມັງຄລວິລາສີນີອັຕຖກຖາທີພນິກາຍປາຜິກວັຄຄ໌ ກາຄ ໖ ຫນ້າທີ່ ໑໑-໑໑໔ ແຖວທີ່ ໑ ແລະແຖວທີ່ ໑-໔ ວ່າ

ປຜິສມຸກິທປຸປຕຸເຕຫິ ວສຸສສຫສຸສໍ ອຍຸກາສີ ພັນປີທີ່ ໑
ເປັນຍຸຄຂອງພຣະອຣຫັນຕ໌ຜູ້ແຕກຈານໃນປຜິສັມກິທາ

ຉສກິຌເຌຫິ ວສຸສສຫສຸສໍ ພັນປີທີ່ ໔ ເປັນຍຸຄຂອງພຣະອຣຫັນຕ໌ຜູ້ໄດ້ອກິຌຌາ ໕

ເຕວິຊຸເຊຫິ ວສຸສສຫສຸສໍ ພັນປີທີ່ ໖ ເປັນຍຸຄຂອງພຣະອຣຫັນຕ໌ຜູ້ໄດ້ວິຊາ ໖

ສຸກຂວິປສຸສເກຫິ ວສຸສສຫສຸສໍ ພັນປີທີ່ ໔ ເປັນຍຸຄຂອງພຣະອຣຫັນຕ໌ຜູ້ຈະເຣີນວິປັສສນາລ້ວນ

ປາຜິໂມກຸເຂຫິ ວສຸສສຫສຸສໍ ອຍຸກາສີ ພັນປີທີ່ ໕ ເປັນຍຸຄຂອງພຣະອນາຄາມີ ພຣະສກທາຄາມີ ແລະພຣະໂສດາບັນ ດັ່ງນີ້

ຊື່ວ່າເຮົາໄດ້ປຜິບັຕິຕາມຄຳສັ່ງສອນຂອງພຣະອົງຄ໌ທັ້ງ ໖ ປິຜົກ ຄື ພຣະວິນັຍ ພຣະສູຕຣ໌ ພຣະອກິທັມມ໌ສົມດັ່ງຫລັກກຖານທີ່ມີປາກົຍຢູ່ໃນທັມມ໌ບົທກາຄ ໔ ຫນ້າທີ່ ໕໐ ແຖວທີ່ ໑ ຮັບຮອງໄວ້ວ່າ (ຈບັບມຫາຈຸຮາລົງກຣຕຣາຊວິທຍາລັຍ)

ສກລ໌ປິ ຫິ ເຕປິຜກໍ ພຸທຸຮວຈນໍ ອາຫຣິຕຸວາ ກຖິຍມານໍ ອປຸປມາທເມວ ໂອຕຣຕິ

ຈຶ່ງຢູ່ພຣະພຸທສພົຈນ໌ ຄື ຄຳສັ່ງສອນຂອງພຣະພຸທສເຈົ້າຈົບທັ້ງ ໖ ປີຝົກ ແມ້ທັ້ງຫມົດຄືບໍ່ເຫລືອເລີຍຈັກຕົວທີ່ພຣະນັກເທສນ໌ ພຣະລັມມກຖຶກ ນຳມາສະແດງໃຫ້ພຸທສບໍຣິພັທຟັງຢູ່ນັ້ນ ຍ່ອມຮວມລົງສູ່ຈຸດດຽວເທົ່ານັ້ນ ຄື ຄວາມບໍ່ປຣະມາທ

ໂສ ປເນສ ອຕຸຖໂຕ ສຕິຢາ ອວິປຸປວາໂສ ນາມ

ກໍອັນຄວາມບໍ່ປຣະມາທນີ້ນັ້ນ ໂດຍໃຈຄວາມກໍໄດ້ແກ່ການບໍ່ຢູ່ປຣາສຈາກສຕິຯ ຄົນມີສຕິກໍຄືຄົນຈະເຣີນສຕິປັຝຖານ ໔ ຄົນຈະເຣີນສຕິປັຝຖານ ໔ ກໍຄືຄົນຈະເຣີນວິປັສສນາກັມມຖານນັ້ນເອງ

ໄດ້ບັຣຍາຍເຣື່ອງທາງ ໆ ສາຍ ພ້ອມທັ້ງອານິສົງສ໌ແຫ່ງການຈະເຣີນວິປັສສນາກັມມຖານມາກໍນັບວ່າສົມຄວຣແກ່ກາລເວລາແລ້ວ ຂໍຍຸຕິລົງຄົງໄວ້ແຕ່ພຽງເທົ່ານີ້

ອິທໍ ເມ ປຸໝໍ ນິພຸພານສຸສ ປຈຸຈໂຢ ໂຫຕຸ

ອິທໍ ເມ ປຸໝຸກາຄໍ ສພຸພສຕຸຕານໍ ເທມິ



...ອາຈາຣຍ໌ໄພທູຣຍ໌ ອິນທວົງສ໌ ພ.ສ. ໒໕໕໗